ເພື່ອຕ້ອນຮັບວັນສ້າງຕັ້ງ
ນະຄອນຫຼວງວຽງຈັນ ຄົບຮອບ 450 ປີ

## ຄວາມເປັນມາຂອງນະຄອນຫຼວງວຽງຈັນ
## ເຫຼັ້ມທີ 4

# ນະຄອນຫຼວງວຽງຈັນ
# ສະໄໝ
# ຣາຊະອານາຈັກລາວ

ຮຽບຮຽງໂດຍ: ທີມນະກອນ ນະໂນທັມ

ນະຄອນຫຼວງວຽງຈັນ, 2010

ຄົ້ນຄ້ວາ ແລະ ຮຽບຮຽງ: ທິມມະກອນ ມະໂນທັມ
ອອກແບບໜ້າປົກ: ນ. ແວວມະນີ ອາໄພຍາລາດ
ຈັດຮູບເຂົ້າ: ທະວີສັກ ມະໂນທັມ
ພິມ ແລະ ຈັດໜ້າ: ນ. ນະຄອນສີ ມະໂນທັມ
ຖ່າຍຮູບ: ທິມມະກອນ ມະໂນທັມ
ແຕ້ມແຜນທີ່: ໄຊສິງຄາມ ມະໂນທັມ

**ຂໍອຸທິດຜົນງານນີ້ແດ່: ເພຍຈັນເພັງ ແລະ ນາງ ຄຳຜູ ມະໂນທັມ ຜູ້ເປັນພໍ່ແມ່ ແລະ ປູ່ຍ່າ, ພະຍາຫຼວງເມືອງກາງ ຈານຜຸຍ ແລະ ນາງ ຊາວ ສະເດັດຕັນ ຜູ້ເປັນ ພໍ່ເຖົ້າ ແມ່ເຖົ້າ ແລະ ພໍ່ເຖົ້າມ່ອນ ແມ່ເຖົ້າມ່ອນ ຊຶ່ງໄດ້ລ່ວງລັບໄປໝົດແລ້ວ**

ຈັດພິມໂດຍ: **ກົມເຄຫາ ແລະ ຜັງເມືອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພ້ອມດ້ວຍ ຄອບຄົວ ມະໂນທັມ**

ຂະໜາດພິມ: 20x29 ຊມ
ພິມຄັ້ງທີ ໜຶ່ງ : 2.000 ຫົວ
ເລກທະບຽນພິມຈຳໜ່າຍ: 218 ພຈ 23082010
ພິມທີ່: ໂຮງພິມ ສີສະຫວາດ
ສະຫງວນລິຂະສິດ

ພ.ພ.ລ.໑.

ເພື່ອຕ້ອນຮັບວັນສ້າງຕັ້ງນະຄອນຫຼວງວຽງຈັນ ຄົບຮອບ 450 ປີ

ຄວາມເປັນມາຂອງນະຄອນຫຼວງວຽງຈັນ

ເຫຼັ້ມ ທີ IV

# ນະຄອນຫຼວງວຽງຈັນ
# ສະໄໝ
# ຣາຊະອານາຈັກລາວ

ຮຽບຮຽງໂດຍ: ທີມນະກອນ ນະໂນທັມ

ນະຄອນຫຼວງວຽງຈັນ 2010

# ຄຳນຳ

ຜ່ານມາ ໄດ້ມີຫລາຍຄົນຂຽນປະຫວັດສາດລາວ ມີທັງຄົນລາວ ແລະ ຕ່າງປະເທດ, ສ່ວນຈະຂຽນເປັນປະຫວັດຂອງຜັງເມືອງ ຂອງນະຄອນຫລວງວຽງຈັນຢ່າງລະອຽດນັ້ນ ແມ່ນບໍ່ທັນມີ.

ປຶ້ມຂຽນກ່ຽວກັບ "ຄວາມເປັນມາຂອງນະຄອນຫລວງວຽງຈັນ" ທີ່ ທ່ານ ທິມມະກອນ ມະໂນທັມ ອະດີດລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການ ແລະ ຂົນສົ່ງ ທັງເປັນນັກຮຽນຮູ້ປະຕິວັດອາວຸໂສຜູ້ໜຶ່ງ ທີ່ໄດ້ມີຜົນງານໃນສະໄຫມການປະຕິວັດຊາດປະຊາທິປະໄຕ ແລະ ໃນໄລຍະປົກປັກຮັກສາ ແລະ ສ້າງສາປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນ 30 ປີທີ່ຜ່ານມານີ້ ແມ່ນເປັນຜົນສຳເລັດອັນໜຶ່ງທີ່ດີເດັ່ນ.

ຂ້າພະເຈົ້າເຫັນວ່າ ປຶ້ມຂຽນນີ້ໄດ້ມີການຄົ້ນຄວ້າຢ່າງລະອຽດ ແລະ ວິທະຍາສາດແທ້ ຊຶ່ງໄດ້ໃຊ້ເວລາຫລາຍເດືອນໃນການວິໄຈຂໍ້ມູນຢ່າງຊັດເຈນຈາກນັກປະຫວັດສາດ ແລະ ບູຮານຄະດີ ທັງຂອງຄົນລາວ ແລະ ຕ່າງປະເທດ, ມັນໄດ້ເປັນຫລັກຖານທາງປະຫວັດສາດຂອງຜັງເມືອງ, ສະຖາປັດຕະຍະກຳ, ປະຕິມາກຳ, ຫັດຖະກຳ ແລະ ແບບດຳລົງຊີວິດຂອງຊາວວຽງຈັນໃນສະໄຫມກ່ອນ.

ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງຂໍຊົມເຊີຍເປັນພິເສດ ຜົນງານການຄົ້ນຄວ້າດັ່ງກ່າວ ຢ່າງຈິງໃຈ ແລະ ຫວັງວ່າ ທ່ານຜູ້ອ່ານທັງຫລາຍຈະໄດ້ຮູ້ ແລະ ຊາບຊຶ້ມເຖິງຄວາມເປັນມາຢ່າງລະອຽດລະອ້ຽວຂອງນະຄອນຫລວງວຽງຈັນອັນແສນຮັກຂອງພວກເຮົາ ຊຶ່ງໃນຫລາຍສັດຕະວັດທີ່ຜ່ານມາ ມີທັງຄວາມມີກຽດສັກສີ ແລະ ພາກພູມໃຈກັບຜົນງານ, ຄວາມສຳເລັດ, ຄວາມເກັ່ງກ້າພິລະອາດຫານ ຂອງບັນພະບູລຸດຂອງພວກເຮົາ, ຄວາມຈະເລີນຮຸ່ງເຮືອງ ສີວິໄລຂອງນະຄອນຫລວງວຽງຈັນ ແລະ ບາງຄັ້ງກໍ່ປະສົບກັບຄວາມໂສກເສົ້າເສຍດາຍ, ຄວາມລະທົມຂົມຂື່ນສະຫລັບກັນໄປ.

ເພື່ອສ້າງນະຄອນຫລວງວຽງຈັນໃຫ້ເປັນນະຄອນທີ່ ***ສະຫງົບ, ສະອາດ, ສີຂຽວ, ສະຫວ່າງ, ສີວິໄລ ແລະ ສະເໜ,*** ການຫລຽວຄືນຫລັງເບິ່ງປະຫວັດສາດທີ່ຜ່ານມານັ້ນ ຈະເຮັດໃຫ້ພວກເຮົາ ມີຄວາມທະນົງໃຈ ແລະ ຮູ້ສຶກເປັນກຽດຢ່າງຍິ່ງ ທີ່ໄດ້ເປັນຄົນລາວ, ທັງເປັນບົດຮຽນໃຫ້ພວກເຮົາຕ້ອງຮັກແພງສາມັກຄີກັນເຂົ້າຕື່ມ ເພື່ອສ້າງສາປະເທດຊາດໄປຕາມແນວທາງຂອງພັກ ແລະ ລັດ, ເຮັດໃຫ້ປະເທດຊາດນັບມື້ນັບຈະເລີນຮຸ່ງເຮືອງກ້າວໜ້າໄປຢ່າງບໍ່ຢຸດຢັ້ງ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ພວກເຮົາຈະພ້ອມກັນອອກເຫື່ອເຫແຮງ ທັງສະຕິປັນຍາ ແລະ ຊັບສິນເຂົ້າໃນການກະກຽມສະເຫລີມສະຫລອງວຽງຈັນເປັນນະຄອນຫລວງຄົບຮອບ 450 ປີ ນີ້ຢ່າງຄຶກຄື້ນ ແລະ ສົມກຽດໃນທ້າຍປີ 2010 ນີ້.

ນະຄອນຫລວງວຽງຈັນ, ວັນທີ 19 ເດືອນ ພຶດສະພາ 2009

**ສົມສະຫວາດ ເລັ່ງສະຫວັດ**

ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ແຫ່ງ ສປປ ລາວ

ປະທານຄະນະກຳມະການຈັດງານສະເຫລີມສະຫລອງວຽງຈັນ

ເປັນນະຄອນຫລວງຄົບຮອບ 450 ປີ

# ຄຳເຫັນຂອງຜູ້ຂຽນ

ພັກ ແລະ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຄະນະນຳຂອງນະຄອນຫຼວງວຽງຈັນ ໄດ້ກຳນົດເອົາວັນສະເຫຼີມສະຫຼອງວັນສ້າງຕັ້ງ ນະຄອນຫຼວງວຽງຈັນຄົບຮອບ 450 ປີ ແຕ່ວັນທີ 15 ເຖິງ 21 ພະຈິກ 2010 ທີ່ເດີ່ນ ພະທາດຫຼວງ. ຂ້າພະເຈົ້າໄດ້ຮັບມອບໝາຍອີກ ໃຫ້ຄົ້ນຄວ້າປະຫວັດສາດຂອງນະຄອນຫຼວງວຽງຈັນ ໃນ*ສະໄໝຣາຊະອານາຈັກລາວ* ທາງດ້ານ ຜັງເມືອງ, ເຄຫາສະຖານ, ສະຖາປັດຕະຍະກຳ ຂອງເມືອງທີ່ເກົ່າແກ່ແຫ່ງນີ້ ເພື່ອໃຫ້ລູກຫຼານ ຜູ້ສືບທອດ ເຊື້ອຊາດລາວ ໄດ້ເຫັນຄວາມເປັນຈິງ ກ່ຽວກັບ ອະດີດຕະການຂອງນະຄອນຫຼວງວຽງຈັນ.

ປະຫວັດສາດຂອງເມືອງວຽງຈັນ ໃນສະໄໝນີ້ ຍັງມີຂໍ້ມູນ ແລະ ແຫຼ່ງຂ່າວຈຳນວນໜຶ່ງ ທັງຂອງຄົນລາວ ແລະ ຕ່າງປະເທດ, ແຕ່ ຂໍ້ມູນເຫຼົ່ານີ້ຍັງຂາດຄວາມຊັດເຈນ ທາງດ້ານ ເວລາ ປະລິມານ ຄຸນະພາບ ຜູ້ອອກແບບກໍ່ສ້າງ ແລະມູນຄ່າຕ່າງໆ.. ເຖິງຢ່າງໃດກໍ່ຕາມ ສິ່ງກໍ່ສ້າງ ເຄຫາສະຖານ ແລະ ວັດວາອາຮາມຕ່າງໆ ກໍ່ຍັງມີໃຫ້ເຫັນຢູ່ຫຼວງຫຼາຍ, ສ່ວນປຶ້ມອ່ານ ຂອງຄົນລາວ ແລະ ສາກົນກ່ຽວກັບ ເນື້ອເລື່ອງນີ້ ແມ່ນບໍ່ມີ ຈຶ່ງໄດ້ໃຊ້ເວລາຫຼາຍໄປພົບປະຜູ້ອາວຸໂສຕ່າງໆທີ່ຍັງມີຊີວິດຢູ່ ແລະ ຍັງມີຄວາມຊົງຈຳດີຢູ່ ຈຶ່ງພໍເກັບກຳໄດ້ສະພາບການບາງຢ່າງທີ່ຕ້ອງການ, ສ່ວນອີງການວິຊາການທີ່ກ່ຽວຂ້ອງຕ່າງໆນັ້ນ ແມ່ນຫາຂໍ້ມູນຍາກ ອັນເນື່ອງຈາກວ່າ: ການຈັດຕັ້ງມີການປ່ຽນໄປມາ ແລະ ບໍ່ທັນໄດ້ເອົາໃຈໃສ່ຕໍ່ການຮັກສາເອກະສານທີ່ເກົ່າແກ່.

ອີກປະການໜຶ່ງ, ເມື່ອຂຽນປະຫວັດສາດ ອອກມາແລ້ວ, ກໍ່ອາດຈະແຕະຕ້ອງເຖິງ ຄົນລາວໃນຕະກຸນໃດໜຶ່ງ ຫຼື ປະເທດໃດໜຶ່ງ ກໍ່ເປັນໄດ້, ແຕ່ກໍ່ຂໍໃຫ້ເຂົ້າໃຈໄວ້ກ່ອນວ່າ ການຕໍ່ສູ້ກູ້ຊາດນັ້ນ ບໍ່ໄດ້ມີເປົ້າໝາຍ ຈະທຳຮ້າຍເຊື້ອສາຍຕະກຸນໃດໜຶ່ງ ຫຼື ປະເທດໃດໜຶ່ງ ແຕ່ຫາກໄດ້ຕໍ່ຕ້ານກັບບຸກຄົນລາວປະຕິການ ແລະ ລັດຖະບານ ຂອງຕ່າງປະເທດ ທີ່ໄດ້ຮຸກຮານລາວໃນເວລາຜ່ານມາເທົ່ານັ້ນ.

ຈິດໃຈຂອງບົດຂຽນນີ້ ບໍ່ໄດ້ມີຈຸດປະສົງ ຈະວິພາກວິຈານເລື່ອງເກົ່າແກ່ ເພື່ອສ້າງຄວາມບາດໝາງຄືນ ແຕ່ປະການໃດທັງສິ້ນ, ແຕ່ຂໍໃຫ້ຮັບຮູ້ນຳກັນວ່າ: *ນັ້ນແມ່ນປະຫວັດສາດ ທີ່ເປັນອະດີດຕະການໄປແລ້ວ ທີ່ບໍ່ສາມາດຟື້ນຄືນມາໄດ້ອີກ* ເພາະວ່າມັນເປັນການກະທຳຂອງຄົນລຸ້ນກ່ອນ.

ພວກເຮົາທຸກຄົນຄວນຮັບຮູ້ເອົາໄວ້ ເປັນບົດຮຽນອັນເຈັບປວດ ແລະ ບໍ່ໃຫ້ອະດີດຕະການມັນຊ້ຳຮອຍຕື່ມ. ດຽວນີ້ ປະຊາຊົນບັນດາເຜົ່າ ຍິງຊາຍນ້ອຍໃຫຍ່ ໃຜໆກໍ່ຢູ່ໃຕ້ການນຳພາຂອງ ພັກປະຊາຊົນປະຕິວັດລາວ ແລະ ເຊື່ອໝັ້ນຕໍ່ ແນວທາງສາມັກຄີປວງຊົນທັງຊາດ ຂອງ ພັກ ເພື່ອສ້າງສາພັດທະນາປະເທດຊາດ ໃຫ້ກ້າວໜ້າ ເພື່ອຫຼຸດພົ້ນອອກຈາກການດ້ອຍພັດທະນາ ໃນປີ 2020 ນີ້ ແລະ ແນວທາງຕ່າງປະເທດຂອງພັກກໍ່ແມ່ນ: ***ສັນຕິພາບ ມິດຕະພາບ ແລະ ຮ່ວມມືກັນ*** ຢູ່ສະເໝີມາ ຈະບໍ່ມຸ່ງໝາຍໄປແກ້ແຄ້ນ ປະເທດໃດໜຶ່ງອີກແລ້ວ ເວັ້ນເສຍແຕ່ ແມ່ນການປ້ອງກັນຕົວເທົ່ານັ້ນ. ຂ້າພະເຈົ້າເຊື່ອໝັ້ນວ່າ ບົດຂຽນບົດນີ້ຈະນຳເອົາ ຄວາມສາມັກຄີ ມິດຕະພາບ ແລະ ຄວາມເຂົ້າໃຈຊຶ່ງກັນ ແລະ ກັນ ລະຫວ່າງຄົນລາວດ້ວຍກັນ ແລະ ກັບຕ່າງປະເທດທີ່ໄດ້ມີຄວາມຂັດແຍ່ງ ກັບລາວ ໃນອະດີດຕະການຜ່ານມາ.

ໃນບົດຂຽນນີ້, ບໍ່ປາສະຈາກຄວາມຂາດຕົກບົກພ່ອງໃນຈຸດໃດຈຸດໜຶ່ງ, ຈຶ່ງຂໍຮຽນມາຍັງທ່ານຜູ້ອ່ານທັງຫຼາຍຈົ່ງສົ່ງຂ່າວມາຕຳໜິຕິຊົມຈະເປັນພະຄຸນຢ່າງສູງ, ຍິ່ງຈະເຮັດໃຫ້ປະຫວັດສາດຂອງຊາດລາວເຮົາສົມບູນໄປເລື້ອຍໆ. ປະຫວັດສາດຂອງປະເທດໃດໆກໍ່ເຊັ່ນດຽວກັນ, ບໍ່ແມ່ນວ່າຈະຂຽນພຽງຄັ້ງດຽວ ຫຼື 2, 3 ຄັ້ງ ກໍ່ຈະສົມບູນໄດ້ໂລດ, ຖ້າມີສິ່ງຜິດພາດ ກະລຸນາອາໄພໃຫ້ດ້ວຍ.

ການຮຽບຮຽງປຶ້ມນີ້ຈະສຳເລັດຜົນ ກໍ່ແມ່ນໄດ້ຮັບການປະກອບສ່ວນຂອງ ອົງການ ແລະ ບຸກຄົນ ດັ່ງຕໍ່ໄປນີ້:

- ອະນຸກຳມະການດ້ານຜັງເມືອງ ຂອງຄະນະກຳມະການຈັດງານ ສະເຫຼີມສະຫຼອງວຽງຈັນເປັນນະຄອນຫຼວງ ຄົບຮອບ 450 ປີ,
- ສະຖາບັນຄົ້ນຄວ້າປະຫວັດສາດ ໃນສະຖາບັນວິທະຍາສາດສັງຄົມແຫ່ງຊາດ,
- ສະຖາບັນຄົ້ນຄວ້າພາກຕາເວັນອອກໄກຂອງຝຣັ່ງ EFEO ທີ່ນະຄອນຫຼວງວຽງຈັນ, ພິເສດແມ່ນ ທ່ານ ມີແຊນ ໂລ ຣີ ຢາ ( M.Lorillard ) ຫົວໜ້າສະຖາບັນແຫ່ງນີ້,
- ກົມເຄຫາສະຖານ ແລະ ຜັງເມືອງ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ,
- ທ່ານ ສຈ ດຣ ບຸນເຫຼື້ອມ ສີສຸລາດ ປະທານສະພາວິທະຍາສາດ ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ໄດ້ປະກອບຂໍ້ມູນໃຫ້ຫຼາຍ ແຕ່ສະໄໝອານານິຄົມເຖິງປະຈຸບັນ,
- ທ່ານ ຄຳເພົາ ພອນແກ້ວ , ປະລິຍາຕີ ດ້ານປະຫວັດສາດ ແລະ ພູມສາດ ຈາກຝຣັ່ງເສດ, ອະດີດຜູ້ຕາງ ໜ້າລາວປະຈຳຢູແນດສະໂກ,
- ທ່ານ ຄຳຕັນ ຈັນທະລາ ອະດີດ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການແຫ່ງ ສ.ປ.ປ ລ,
- ທ່ານ ຄຳພັນ ສິມມາລາວົງ ອະດີດ ລັດຖະມົນຕີຊ່ວຍວ່າການ ກະຊວງການຄ້າ ແລະ ອະດີດເອກອັກ ຄະລັດຖະທູດແຫ່ງ ສປປລ ປະຈຳ ຣາຊະອານາຈັກໄທ, ກຳປູເຈຍ ແລະ ຝຣັ່ງ,
- ທ່ານ ຊາຍຄຳ ອະດີດຫົວໜ້າກົມທາງຫຼວງແຫ່ງຊາດ, ອະດີດ ຫົວໜ້າກອງເລຂາທິການ ອົງການ ແມ່ນ້ຳຂອງລະຫວ່າງຊາດ ທີ່ ບາງກອກ,
- ທ່ານ ສຈ ແສງຄຳ ພົນິດ ອະດີດ ລັດຖະມົນຕີຊ່ວຍວ່າການ ກະຊວງກໍ່ສ້າງ ປະທານ ສະມາຄົມ ສະຖາປະນິກ ແລະ ວິສາວະກອນລາວ (ສສວ),

ແລະ ຜູ້ອາວຸໂສອື່ນໆ.. ອີກຫຼາຍທ່ານ ທີ່ໄດ້ໃຫ້ ຄຳເຫັນທີ່ເປັນຂໍ້ມູນ ອັນຊັດເຈນຕື່ມ.

ເພື່ອສະດວກໃນການອ່ານນັ້ນ ຂ້າພະເຈົ້າໄດ້ນຳໃຊ້ " ວັດຈະນານຸກົມ ພາສາລາວ" ຮຽບຮຽງໂດຍ ດຣ ທອງຄຳ ອ່ອນມະນີສອນ ທີ່ເຫັນວ່າໃກ້ຄຽງກັບ ພາສາລາວທີ່ໄດ້ຮຽນມານຳ ອາຈານ ສິມຈິນ ງິນ ໃນເມື່ອ ກ່ອນ.

ທ້າຍສຸດ ປຶ້ມຫົວນີ້ຈະປະກົດອອກສູ່ສາຍຕາທ່ານຜູ້ອ່ານໄດ້ ກໍ່ຕໍ່ເມື່ອໄດ້ຮັບ ການອຸປະຖຳດ້ານການ ພິມ ຈາກອົງການ ແລະ ບໍລິສັດຕ່າງໆ ຊຶ່ງມີລາຍຊື່ຢູ່ດ້ານຫຼັງຂອງປຶ້ມຫົວນີ້.
ສະນັ້ນ ອີກເທື່ອໜຶ່ງ ຈຶ່ງຂໍສະແດງຄວາມຂອບໃຈມານະທີ່ນີ້ດ້ວຍ.

ວຽງຈັນ, ວັນທີ 30 ເມສາ 2010

ທົມມະກອນ ມະໂນທັມ

# ສາລະບານ

**ເນື້ອໃນ** **ໜ້າ**


ຄຳນຳຂອງ ທ່ານ ສິນສະຫວາດ ເລັ່ງສະຫວັດ .......... ....................................... 1

ຄຳເຫັນຂອງຜູ້ຂຽນ........................................................................ 2

ສາລະບານ................................................................................ 4

I. ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1946-1954 ...................................... 6

II.ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1955-1960........................................9

1.ປະຊາກອນ..........................................................................9

2.ຜັງເມືອງ.............................................................................. 13

3.ເຂດຊານເມືອງ.......................................................................15

4.ສະຖາປັດຕະຍະກຳ...................................................................16

5.ວັດວາອາຮາມ.........................................................................16

6.ຜູ້ປົກຄອງບ້ານເມືອງໃນເວລານີ້....................................................18

III.ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1961-1975.....................................18

1.ສະຖານະການຂອງບ້ານເມືອງ.......................................................18

2.ປະຊາກອນ.......................................................................... 21

3.ສະພາບການດ້ານເສດຖະກິດ.........................................................24

4.ການສຶກສາ.......................................................................... 25

5.ການພັດທະນາເມືອງວຽງຈັນ...................................................... 29

5.1.ສິ່ງກໍ່ສ້າງຕ່າງໆ........................................................................31

5.2.ຕາໜ່າງຖະໜົນຫົນທາງ...............................................................39

5.3.ວັດວາອາຮາມ.......................................................................42

5.4.ເຂດການຄ້າ........................................................................43

5.5.ເຂດອຸດສະຫະກຳ ............................................................... 44

5.6.ທີ່ຢູ່ອາໄສຂອງປະຊາກອນ.........................................................44

5.7.ການກໍ່ສ້າງສາທາລະນະປະໂຫຍດ.................................................48

- ສ້າງນ້ຳປະປາ.......................................................................48
- ສ້າງລະບົບໂທລະສັບ................................................................48
- ສ້າງເຂື່ອນໄຟຟ້າ.....................................................................48

■ ສາທາລະນະສຸກ......................................................................................50
■ ລະບົບລະບາຍນ້ຳເສຍ..............................................................................50
■ ການລະບາຍນ້ຳຝົນ ..................................................................................51
■ ນ້ຳຖ້ວມເມືອງວຽງຈັນປີ 1966 ແລະ 1971.................................................. 52
5.8.ສະຖາປັດຕະຍະກຳ.......................................................................................55
■ ຕຶກທາງຣາຊະການ....................................................................................55
■ ເຮືອນຂອງພົນລະເຮືອນ............................................................................ 55
■ ເຮືອນຫ້ອງແຖວ........................................................................................59
■ ເຮືອນປະຊາຊົນທົ່ວໄປ................................................................................59
■ ຕະຫຼາດ....................................................................................................59
■ ສັງລວມການປຸກສ້າງເຄຫາສະຖານ.............................................................. 60

**IV. ສະຫຼຸບສັງລວມ**.........................................................................................61

+ ເອກະສານຊ້ອນທ້າຍ ເລກ 1(ສັງລວມສິ່ງກໍ່ສ້າງຕ່າງໆ 1954-75)..........................62
**+<u>ແຜນທີ່ຊ້ອນທ້າຍ:</u>**
➢ ແຜນທີ່ No 1: ແຜນທີ່ ນະຄອນວຽງຈັນປີ 1958...............................................63
➢ ແຜນທີ່ No 2: ແຜນທີ່ ນະຄອນວຽງຈັນປີ 1961...............................................64
➢ ແຜນທີ່ No 3: ເຂດທຳມະຊາດ ແລະ ທີ່ຢູ່ອາໄສ ໃນປີ 1962........... ........... 65
➢ ແຜນທີ່ No 4: ຄວາມໜາແໜ້ນຂອງປະຊາກອນວຽງຈັນ ໃນປີ 1962............ 66
➢ ແຜນທີ່ No 5: ການກຳນົດຄວາມໜາແໜ້ນຂອງປະຊາກອນໃນຊຸມປີຂ້າງໜ້າ...67
➢ ແຜນທີ່ No 6: ແຜນລະບາຍນ້ຳຝົນແລະນ້ຳເສຍ ຂອງBECEOM ປີ 1960.....68
➢ ແຜນທີ່ No 7: ແຜນຜັງຊີ້ນຳທີ່ຕັ້ງຂອງໂຮງງານອຸດສະຫະກຳ ປີ 1970-73.......69
➢ ແຜນທີ່ No 8: ທີ່ຕັ້ງຂອງວັດ,ໂບດ ແລະວັດອິສະລາມ ໃນ ນະຄອນຫຼວງວຽງຈັນ 70
➢ ແຜນທີ່ No 9: ແຜນທີ່ນະຄອນຫຼວງວຽງຈັນ 1973-75.....................................71
➢ ແຜນທີ່ No10: ວິວັດທະນາການຂອງນະຄອນຫຼວງ ແຕ່ປີ 1953-75.................72

+ ເອກະສານອ້າງອີງ:.........................................................................................73

# ການພັດທະນານະຄອນຫຼວງວຽງຈັນ ແຕ່ປີ 1946 ຫາ ປີ 1975

ເພື່ອໃຫ້ຜູ້ອ່ານໄດ້ເຂົ້າໃຈບົດນີ້ໃຫ້ແຈ້ງຕື່ມ ຈຶ່ງໄດ້ແບ່ງໄລຍະ **ຄວາມເປັນມາ ຂອງ ນະຄອນຫຼວງວຽງຈັນ ໃນສະໄໝຣາຊະອານາຈັກລາວ** ອອກເປັນ 3 ໄລຍະ ຄື:

I. ລະຫວ່າງ ປີ 1946-1954

II. ລະຫວ່າງ ປີ 1955-1960

III. ລະຫວ່າງ ປີ 1961-1975

## I. ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1946 ເຖິງ 1954 :

ແມ່ນໄລຍະທີ່ຝຣັ່ງ ຄ່ອຍໂອນອຳນາດ ໃຫ້ລັດຖະບານຂອງຣາຊະອານາຈັກລາວ ແລະ ຝຣັ່ງເອງກໍ່ພວມຫຍຸ້ງກັບສົງຄາມ ປາບປາມຂະບວນຮັກຊາດ ໃນອິນດູຈີນ ພ້ອມກັນນີ້ ສະຫະລັດອາເມຣິກາ ກໍ່ເລີ່ມແຊກແຊງເຂົ້າມາລາວ ເພື່ອເຮັດສົງຄາມຕ້ານ ປະເທດສັງຄົມນິຍົມ ໂດຍເລືອກໃຊ້ ພວກນັກການເມືອງທີ່ນິຍົມຕາເວັນຕົກ.

ຍ້ອນຖືກເສຍຫາຍໜັກໃນສົງຄາມໂລກຄັ້ງທີສອງ ງົບປະມານບໍ່ມີຫຼາຍ ຈຶ່ງບໍ່ຄ່ອຍມີການສ້າງສາສິ່ງໃດຂຶ້ນ. ສະນັ້ນຈຶ່ງສືບຕໍ່ໃຊ້ ເຄຫາສະຖານ, ຖະໜົນຫົນທາງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ..ທີ່ໄດ້ສ້າງມາກ່ອນປີ1940.

- **ການຂະຫຍາຍຕົວເມືອງ ແລະ ເຄຫາສະຖານ:**

ເນື້ອທີ່ຢູ່ອາໄສກໍ່ໄດ້ເພີ່ມຂຶ້ນເປັນ 560 ເຮັກຕາ ໃນປີ1953, ແຕ່ໃນເຂດກຳແພງເມືອງນັ້ນໃນກໍ່ບໍ່ທັນເຕັມ, ຍັງມີບ່ອນຫວ່າງເປົ່າຢູ່ຫຼາຍແຫ່ງເຊັ່ນ: ເຂດຊຸ່ມ ແລະ ໜອງບຶງ .

ກາ້ຕາເວັນອອກ ແຕ່ທາດຂາວ ລົງໄປຫາ ທ່າເຮືອຫຼັກສີ່ ມີເຮືອນຢູ່ແຄມທາງ ຫ່າງໄກກັນ, ອ້ອມແອ້ມ ບຶງຂະຫຍອງ ຫາຄູວຽງ ກໍ່ຫວ່າງເປົ່າ. ກາຍທ່າເຮືອຫຼັກສີ່ ລົງໄປ ເຖິງຄ້າຍຈີ່ນາຍໂມ້ ຊຶ່ງມີກອງທະຫານຝຣັ່ງຢູ່ ກໍ່ເປັນປ່າເປັນນາສະຫຼັບກັນໄປກັບບ້ານ ພັນໝັ້ນ, ສວນມອນ, ຈອມແຈ້ງ.. ສ່ວນບ້ານສວນມອນນັ້ນ ມີເຮືອນ ປະມານ 20 ກ່ວາຫຼັງຄາ ຊຶ່ງແມ່ນໄທລື້ບ້ານຜານົມ ເມືອງຫຼວງພະບາງລົງມາຢູ່ ໂດຍແມ່ນສະເດັດ ເຈົ້າເພັດຊະລາດ ນຳເອົາລົງມາແຕ່ປີ 1919 ພຸ້ນ ພວກເຂົາມີຄວາມຊຳນານ ດ້ານຕຳແຜ່ນ ແລະ ຕີເຫຼັກຮັບໃຊ້ສັງຄົມ.

ຢູ່ກາ້ຕາເວັນອອກສ່ຽງເໜືອ ແຕ່ວັດນາກ ຈົນເຖິງ ສະພານທອງ ແມ່ນຫວ່າງເປົ່າ ມີແຕ່ປ່າປົກຄຸມໄປໝົດ ວັດໂສກປ່າຫຼວງເປັນວັດປ່າແຫ່ງດຽວໃນທີ່ນີ້.

ກາ້ເໜືອ: ບ້ານສາລາແດງ, ບ້ານດົງປ່າລານ, ບ້ານຝາຍ ຍັງເປັນທົ່ງນາທີ່ປູກເຂົ້າ, ປູກກົກລານ ເປັນບ້ານນ້ອຍໆ ຢູ່ສີຫ່າງໆກັນໄປຕາມແຄມນາ.

ຈາກຕະຫຼາດເຊົ້າ ໄປຕາມຖະໜົນໜອງບອນ ມີບ້ານໜຶ່ງປຸກຢູ່ ອ້ອມວັດໂພນໄຊ, ຈາກໂພນໄຊ ໄປຫານາໄຊ ມີເຮືອນຄົນຫວຽດນາມຢູ່ລຽບແຄມທາງ, ມີຄົນລາວເຮັດນາຢູ່ບ້ານນາໄຊ ປະມານ 5 ຫຼັງຄາເຮືອນ ແລະ ມີບ້ານໜຶ່ງອີກຊື່ວ່າ ບ້ານໜອງບອນ ປະຊາຊົນໄດ້ມາປຸກເຮືອນ ອ້ອມວັດໜອງບອນ ຊຶ່ງເປັນວັດເກົ່າແກ່ແຫ່ງໜຶ່ງຂອງເມືອງວຽງຈັນ.

ຈາກນັ້ນໄປກໍ່ມີບ້ານທາດຫຼວງໃຕ້ຊຶ່ງປະຊາຊົນປຸກເຮືອນຢູ່ອ້ອມວັດທັງເຮັດນາຢູ່ແຄມ

ບຶງທາດຫຼວງ. ອ້ອມພະທາດຫຼວງມີ 2 ວັດຮ້າງຢູ່ ກຳ້ຕາ ເວັນອອກ ແລະ 1 ວັດຮ້າງ ຢູ່ກຳ້ຕາເວັນຕົກ ທັງໝົດນັ້ນ ຍັງມີປ່າອ້ອມຢູ່. ສ່ວນຄຸ້ມສີສັງວອນກໍ່ຍັງເປັນປ່າປົກຄຸມຢູ່ ມີທັງກວາງ, ຟານ ແລະ ມີວັດປ່າແຫ່ງໜຶ່ງຊື່ວ່າ: ວັດສີສັງວອນ ຫຼື ( ລີສີສັງທອນ).

ສ່ວນກຳ້ຕາເວັນຕົກ ແຕ່ປາກປ່າສັກຂຶ້ນໄປ ແມ່ນຂະຫຍາຍບ້ານໄປຕາມແຄມຂອງ, ປະຊາຊົນໄດ້ປຸກເຮືອນແບບລາວເດີມ ອ້ອມວັດໃຜມັນເຊັ່ນ: ວັດສີຖານ, ວັດຊຽງແວ່, ວັດທົ່ວເມືອງ, ວັດອູບມຸງ, ວັດຊຸນຕາ, ວັດໄຕນ້ອຍ, ວັດໄຕໃຫ່ຍ.

ສ່ວນຢູ່ກຳ້ຂວາຂອງຖະໜົນຫຼວງພະບາງນັ້ນ (ຖະໜົນສຸພານຸວົງ ດຽວນີ້) ຍັງເຕັມໄປດ້ວຍທົ່ງນາ ແລະ ມີບ້ານໜຶ່ງຊື່ວ່າ ບ້ານໜອງປາໄນ ມີເຮືອນປະມານ10 ຫຼັງ, ພາຍຫຼັງມາ ກໍ່ເຫັນປະຊາຊົນຄ່ອຍທະຍອຍກັນອອກມາປຸກຕູບຢູ່ຕາມແຄມທາງ ສີ່ທ່າງໆກັນໄປ.

ເວລານັ້ນ ບ້ານສີທອມ ກໍ່ຍັງເປັນດິນເປົ່າຫວ່າງຢູ່, ລຽບຕາມນຳ້ປ່າສັກຂຶ້ນໄປ ມີບ້ານເກົ່າແກ່ແຫ່ງໜຶ່ງຊື່ວ່າ ບ້ານຂົວຫຼວງ ຊຶ່ງມີທົ່ງນາກ້ວາງຂວາງຈົນຮອດບ້ານໜອງດ້ວງ. ໃນໄລຍະນີ້ ວັດວາອາຮາມໃນຊານເມືອງ ກໍ່ຄ່ອຍໆກໍ່ສ້າງຂຶ້ນ ແລະ ປະຕິສັງຂອນຄືນໃໝ່.

- **ປະຊາກອນ.**

ທີ່ຢູ່ອາໄສໃນເຂດກຳແພງຊັ້ນໃນ ມີເນື້ອທີ່ປຸກສ້າງບໍ່ເຖິງ 70% ຂອງເນື້ອທີ່ທັງໝົດຊຳ້, ເພາະວ່າໃນປີ 1944 ສະພາບເສດຖະກິດຝືດເຄືອງ ຊາວຫວຽດນາມ 14 ພັນກ່ວາຄົນ ໄດ້ກັບຄືນປະເທດ ຂ້າຣາຊະການ ກໍ່ອອກໄປທຳມາຫາກິນ ຢູ່ຊົນນະບົດ ຕໍ່ມາ ພວກລາວ ອິດສະຫຼະ ກໍໜີໄປຫຼົບໄພ ຢູ່ປະເທດໄທ ເປັນຈຳນວນຫຼາຍພັນຄົນ.

ຄວາມໜາແໜ້ນຂອງປະຊາກອນ ໃນເມືອງວຽງຈັນ ຈຶ່ງຫຼຸດລົງກ່ວາ ເຄິ່ງໜຶ່ງ ໃນຊຸມປີ 1944-48 ແລ້ວຈຶ່ງຄ່ອຍເພີ່ມຂຶ້ນ ແຕ່ລະປີ ປະມານ 3,870 ຄົນ ຊຶ່ງມີຄວາມໜາແໜ້ນຢູ່ ປະມານ 80 ຄົນ ຕໍ່ເຮັກຕາ ໃນປີ 1953. ຕາມຂໍ້ມູນທີ່ໄດ້ເກັບມາ ໃຫ້ຮູ້ວ່າ:

- ໃນປີ 1947 ມີປະມານ 25,000 ຄົນ(ຖ້າທຽບໃສ່ ປີ 1944 ແມ່ນຫຼຸດລົງ) [1]
- ໃນປີ 1954 ມີປະມານ 45,000 ຄົນ

( ຖ້າລວມທັງຊານເມືອງຈະມີຈຳນວນເຖິງ 62,000 ຄົນ )

- **ທີ່ຕັ້ງຕ່າງໆຂອງລັດຖະບານ** : ໃນເວລານັ້ນ ກໍ່ໄດ້ນຳໃຊ້ຕຶກອານານິຄົມຝຣັ່ງທີ່ມີຢູ່ເຊັ່ນ:

- ທີ່ປະທັບຂອງເຈົ້າຊີວິດ ແມ່ນເຮືອນພັກຂອງ ຜູ້ສຳເລັດຣາຊະການສູງສຸດຂອງຝຣັ່ງປະຈຳລາວ ( ເບື້ອງຫຼັງ ຫໍພະແກ້ວ).
- ສະພາຜູ້ແທນລາສະດອນ ຕັ້ງຢູ່ທຳນຽບຂອງຜູ້ສຳເລັດຣາຊະການຝຣັ່ງ(Palais de la résidence supérieure ) ເປັນຕຶກເກົ່າແກ່ຊັ້ນດຽວ, ດຽວນີ້ໄດ້ມ້າງຖິ້ມແລ້ວມາປຸກທຳຄຳໃສ່ແທນໃນປີ 1974.

---

[1] ຂໍ້ມູນມາຈາກປຶ້ມວິທະຍານິພົນຂອງ ສຈ ດຣ ບຸນເຫຼື້ອມ ສີສຸລາດ ປີ 2002.

- ສຳນັກງານນາຍົກລັດຖະມົນຕີ, ກະຊວງເສດຖະກິດ ກະຊວງໂຍທາ ແມ່ນລວມກັນຢູ່ຕຶກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ດຽວນີ້. (ຫຼັງ ປີ 1950 ມາ)
- ກະຊວງການຕ່າງປະເທດ ມາຕັ້ງຢູ່ຕຶກຝຣັ່ງເກົ່າຕໍ່ໜ້າ ກະຊວງສຶກສາທິການ.
- ກະຊວງປ້ອງກັນປະເທດ ແມ່ນຢູ່ຕຶກຝຣັ່ງເກົ່າ ຖະໜົນລ້ານຊ້າງ (ຫຼັງເກົ່າພັງໝົດ ມາປຸກເປັນກະຊວງ ໄປສະນີ ແລະ ໂທລະຄົມມະນາຄົມ ໃນປີ 1965).
- ກະຊວງມະຫາດໄທ (ກະຊວງພາຍໃນ) ແມ່ນຢູ່ຫໍສະໝຸດແຫ່ງຊາດ ດຽວນີ້.
- ກະຊວງການເງິນ ຕັ້ງຢູ່ຫ້ອງການກວດກາການເງິນຂອງຝຣັ່ງໃນເຂດທໍຄຳ ເບື້ອງຕາເວັນຕົກ (ໄດ້ມ້າງໃນປີ1964ແລ້ວ) ສ່ວນຄັງເງິນ ກໍ່ຕັ້ງຢູ່ແຄມຂອງ ໃຕ້ໂຮງແຮມລ້ານຊ້າງ (ໄດ້ມ້າງປີ 2008).
- ໄປສະນີໂທລະຄົມ ບໍ່ທັນສ້າງຕັ້ງເປັນກະຊວງເທື່ອ, ມີພຽງຫ້ອງການໄປສະນີ ຕັ້ງຢູ່ຕຶກ ໂທລະຄົມມະນາຄົມ ເໜືອກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ດຽວນີ້.
- ຫ້ອງການພາສີ ແມ່ນຕຶກເກົ່າຂອງຝຣັ່ງ ຕັ້ງຢູ່ໃຕ້ປາກປ່າສັກ.(ໄດ້ມ້າງຖິ້ມແລ້ວ ໃນປີ 2010)

- **ຖະໜົນຫົນທາງ ໃນກຳແພງເມືອງ** :

ຖະໜົນຕ່າງໆ ກໍ່ໄດ້ປ່ຽນຊື່ຈາກຊື່ຝຣັ່ງມາເປັນຊື່ຂອງບັນພະບູລຸດລາວແລ້ວ ເຊັ່ນ: ເຊດຖາທິລາດ, ສາມແສນໄທ, ລ້ານຊ້າງ, ຟ້າງຸ່ມ, ຂຸນບູລົມ, ໝໍ່ແກ້ວກຸມມານ, ປາງຄຳ, ມັນທາຕຸລາດ, ໄຜ່ໜາມ, ສັກຂະລິນ ແລະ ອື່ນໆ.. ຖະໜົນຫົນທາງບໍ່ໄດ້ພັດທະນາ ພໍປານໃດ, ຍັງນຳໃຊ້ຖະໜົນໃນສະໄໝ ອານານິຄົມຢູ່ຕາມເດີມ ແລະ ມີການປູຢາງທັບໃສ່ ຖະໜົນສາຍຫຼັກເຊັ່ນ : ເຊດຖາທິລາດ, ລ້ານຊ້າງ ແລະ ສາມແສນໄທ ເປັນຕົ້ນ.

- **ສິ່ງກໍ່ສ້າງສາທາລະນະປະໂຫຍດ** ເຊັ່ນ: ລະບົບແຈກຢາຍນ້ຳ, ໄຟຟ້າ, ລະບົບນ້ຳເສຍ, ໂຮງໝໍ, ໂຮງຮຽນ ແລະ ອື່ນໆ ກໍ່ຍັງແມ່ນລະບົບເກົ່ານັ້ນຢູ່.

ເຂດການຄ້າໄດ້ພັດທະນາລົງມາຕາມຖະໜົນຟ້າງຸ່ມ, ເຂດຖາທິລາດ ຈົນເຖິງຕະຫຼາດເຊົ້າ (ນ້ຳພຸ), ຖະໜົນເຈົ້າອະນຸວົງ ມີຮ້ານອາຫານຈີນ, ຫວຽດນາມ ແລະ ມີໂຮງຮູບເງົາ 3 ຫຼັງ.

ຮ້ານຄ້າເກົ່າຈະເປັນອາຄານຊັ້ນດຽວ, ສ່ວນຮ້ານຄ້າໃໝ່ຈະເປັນ 2 ຊັ້ນ ກໍ່ດ້ວຍດິນຈີ່ ແລະມຸງດິນຂໍ, ມີສາຍຄາຂະໜານກັບແມ່ນ້ຳຂອງ, ສ່ວນສະຖາປັດຕະຍະກຳ ກໍ່ຍັງແມ່ນແບບເດີມຂອງສະໄໝອານານິຄົມນັ້ນຢູ່.

- **ວັດວາອາຮາມ** :

-ມາຮອດໄລຍະນີ້ ໃນຕົວເມືອງເກົ່າໄດ້ມີວັດດັ່ງນີ້ : ຈັນທະບູລີ, ອິນແປງ, ອົງຕື້, ມີໄຊ, ຫາຍໂສກ, ຊຽງຍືນ, ເກົ້າຍອດ, ສີເມືອງ, ທາດຂາວ, ບຶງຂະຫຍອງ..

-ກຳເໜືອມີ ວັດ : ນາໄຮ່ດຽວ, ທາດຝຸ່ນ, ໂພນໄຊ, ໜອງບອນ, ໂພນພະເນົາ, ທາດຫຼວງໃຕ້..

-ກຳຕາເວັນອອກມີວັດ : ພັນໝັ້ນ, ຈອມແຈ້ງ, ຈອມທອງ..

-ກຳຕາເວັນຕົກມີວັດ : ປ່າສັກ, ສີຖານ, ຊຽງແວ່, ອູບມຸງ, ຂຸນຕາ, ຫົວເມືອງ, ໄຕນ້ອຍ, ໄຕໃຫຍ່...

- **ການປົກຄອງໃນໄລຍະນີ້ :**

**ນາຍົກລັດຖະມົນຕີຂອງລັດຖະບານລາວມີດັ່ງນີ້ :**

- ເຈົ້າ ສຸວັນນະລາດ 1947-49 ( ມີການປະກາດລັດຖະທຳມະນູນ ແຫ່ງຣາຊະອານາຈັກ 11/5/47)
- ເຈົ້າ ບຸນອູ້ມ ນະຈຳປາສັກ 1950 ( ຝຣັ່ງໄດ້ມອບໂອນອຳນາດທາງການເມືອງ ແລະເສດຖະກິດໃຫ້ແກ່ ລັດຖະບານລາວ ແຕ່ຍັງກຳງຸກ ປ້ອງກັນຊາດ ແລະ ຄວາມສະຫງົບໄວ້ຢູ່)
- ທ່ານ ຜຸຍ ຊະນະນິກອນ1950-51 (ໄດ້ມີການສ້າງຕັ້ງກອງທັບແຫ່ງຣາຊະອານາຈັກລາວຂຶ້ນ ດ້ວຍການຊ່ວຍເຫຼືອ ໂດຍກົງ ຂອງ ສະຫະລັດ ອາເມຣິກາ)
- ເຈົ້າ ສຸວັນນະພູມາ(1951-54) (ໄດ້ມີ ການເຊັນຮັບຮອງເອົາສັນຍາສາກົນ1954 ກ່ຽວກັບອິນດູຈີນ)

**ເຈົ້າແຂວງວຽງຈັນມີ :**

- ທ່ານ ບົວເກດ ຈັນທະປັນຍາ
- ທ່ານ ບົວສີ
- ທ່ານ ບົວຄຳ ມ້າວຄຳຜີວ

(ໃນໄລຍະນີ້ ບໍ່ທັນມີ ເຈົ້າຄອງກຳແພງເທື່ອ ມີແຕ່ເຈົ້າເມືອງວຽງຈັນ)

## II. <u>ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1955 ເຖິງ 1960</u> :

ໃນໄລຍະນີ້ ໄດ້ເກີດມີການປັ່ນປ່ວນດ້ານການເມືອງຂຶ້ນໃນນະຄອນວຽງຈັນ ອັນເນື່ອງມາຈາກການແຊກແຊງຂອງ ສະຫະລັດອາເມລິກາເຂົ້າມາລາວຫຼາຍຂຶ້ນ. ໃນວຽງຈັນເອງໄດ້ເກີດມີຫຼາຍພັກການເມືອງຂຶ້ນເຊັ່ນ : ກຸ່ມວຽງຈັນ, ກຸ່ມຫຼວງພະບາງ, ກຸ່ມສະຫວັນນະເຂດ, ກຸ່ມຈຳປາສັກ..ເພື່ອຍາດຊີງກັນກຳອຳນາດ, ຍາດຊີງກັນ ເອົາການຊ່ວຍເຫຼືອຂອງອາເມລິກາ, ເຮັດໃຫ້ມີການໂຄ້ນລົ້ມ ແລະຄາດຕະກຳກັນ ອັນໄດ້ເຮັດໃຫ້ບ້ານເມືອງບໍ່ມີຄວາມສະຫງົບ ເຊັ່ນ : ໃນເດືອນ ກັນຍາປີ 1955 ໄດ້ມີການຄາດຕະກຳ ທ່ານ ກຸ ວໍຣະວົງ ລັດຖະມົນຕີ ກະຊວງປ້ອງກັນປະເທດ ໃນເວລານັ້ນ.

**1.<u>ປະຊາກອນ</u>** : ເວົ້າເຖິງການເໜັງຕີງ ຂອງປະຊາກອນ ໃນນະຄອນຫຼວງໃນໄລຍະນີ້ ແມ່ນມີສາເຫດມາຈາກ ສະພາບການເມືອງ ການທະຫານ ແລະ ການພັດທະນາ ນັ້ນເອງ :

- ລັດຖະບານຣາຊະອານາຈັກ ໄດ້ລະເມີດສັນຍາເຊີແນວປີ 1954 ດ້ວຍການບຸກໂຈມຕີເຂົ້າ ເຂດເຕົ້າໂຮມຂອງແນວລາວຮັກຊາດ ໃນຊຸມປີ 1954-1955 ແລ້ວກວາດຕ້ອນເອົາ ປະຊາຊົນແຂວງຫົວພັນ ແລະ ຊຽງຂວາງເຂົ້າມາຢູ່ນອກເມືອງຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ ເປັນຈຳນວນຫຼາຍພັນຄົນ.

- ໃນຊຸມປີ 1957-58 ໄດ້ມີການໂຮມລາວຄັ້ງທີ 1 ສ້າງຕັ້ງລັດຖະບານປະສົມ ຄັ້ງທຳອິດ ກັບ ຝ່າຍແນວລາວຮັກຊາດ ອັນມີ ສະເດັດເຈົ້າ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ ແລະ ສະເດັດເຈົ້າ ສຸພານຸວົງ ເປັນລັດຖະມົນຕີ ກະຊວງເສດຖະກິດ ແຜນຜັງ ແລະ ພັດທະນາ ໃນໄລຍະນີ້ ປະເທດ

ຊາດໄດ້ມີສັນຕິພາບຊົ່ວຄາວ ແຕ່ມີບໍ່ດົນ ພວກປະຕິການຂາຍຊາດກໍ່ຮ່ວມມືກັບ ຈັກກະພັດອາເມຣິກາ ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດ ແລ້ວທຳການຈັບກຸມ ຜູ້ນຳແນວລາວຮັກຊາດເຂົ້າຄຸກ ໃນ ປີ 1959.[2] ລັດຖະບານ ຂອງ ທ່ານ ຜຸຍ ຊະນະນິກອນ ໄດ້ໃຊ້ສິດພິເສດທີ່ໄດ້ມາຈາກການຊື້ສຽງ ສັ່ງໃຫ້ກອງທັບປາບປາມ ຜູ້ຮັກຊາດຢ່າງໂຫດຫ້ຽມ ແລະ ກວາດຕ້ອນເອົາປະຊາຊົນເຂົ້າມາຢູ່ຊານເມືອງວຽງຈັນຕື່ມອີກຫຼາຍໝື່ນຄົນ ເປັນວິທີການ *ສະນ້ຳອອກຈາກປາ* ຂອງພວກປະຕິການ.

- ໂດຍເບື່ອໜ່າຍຕໍ່ແນວທາງສົງຄາມຂອງ ຈັກກະພັດອາເມຣິກາ ແລະ ພວກປະຕິການທີ່ເຮັດສົງຄາມ *ເອົາຄົນລາວຂ້າຄົນລາວ,* ໃນວັນທີ 09/08/1960 ກອງພັນໂດດຈ້ອງທີ 2 ຊຶ່ງເປັນກອງພັນຫົວແຫຼມຂອງກອງທັບແຫ່ງຣາຊະອານາຈັກລາວໄດ້ເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານຂອງ



ຮູບຄຸກໂພນເຄັງ ທີ່ຂັງຜູ້ນຳແນວລາວຮັກຊາດໃນປີ 1959

ເຈົ້າ ສົມສະນິດ ແລ້ວໃຫ້ສະພາຜູ້ແທນລາສະດອນເລືອກເອົາ ລັດຖະບານ ທີ່ມີທ່າອ່ຽງ ສັນຕິພາບເປັນກາງ ແລະ ຖືກຕ້ອງປອງດອງຊາດຂຶ້ນ. ແນວທາງນີ້ ໄດ້ຮັບການສະໜັບສະໜູນ ຈາກແນວລາວຮັກຊາດ ແລະ ຊາວເມືອງວຽງຈັນເປັນຈຳນວນຫຼວງຫຼາຍ : ຊາວໜຸ່ມ ນັກສຶກສາ ຂ້າຣາຊະການ ພະສົງ ແລະ ປະຊາຊົນ.

ສະເດັດເຈົ້າ ສຸວັນນະພູມາ ໄດ້ຮັບເລືອກຕັ້ງຈາກສະພາຜູ້ແທນລາສະດອນ ໃຫ້ເປັນນາຍົກລັດຖະມົນຕີໂດຍເອກະສັນ ແລ້ວປະກາດສ້າງຕັ້ງສາຍພົວພັນທາງການທູດ ກັບປະເທດສັງຄົມນິຍົມ. ໂດຍບໍ່ລົດລະຕໍ່ແນວທາງເຮັດສົງຄາມ *ເອົາຄົນລາວຂ້າຄົນລາວ,* ຈັກກະພັດອາເມຣິກາໄດ້ອູ້ມຊູ ນາຍ ພົນ ພູມີ ໜໍ່ສະຫວັນ ສ້າງການກະບົດຢູ່ສະຫວັນນະເຂດ ແລ້ວອີງໃສ່ໄທ ຍົກກອງທະຫານຂຶ້ນ

---

[2] ຜູ້ນຳແນວລາວຮັກຊາດທີ່ຖືກພວກປະຕິການວຽງຈັນຈັບເຂົ້າຄຸກມີຄື: ສະເດັດ ເຈົ້າ ສຸພານຸວົງ, ທ່ານ ໜູຮັກ ພູມສະຫວັນ, ທ່ານ ພູມີ ວົງວິຈິດ, ທ່ານ ພູນ ສີປະເສີດ, ທ່ານ ຄຳຜາຍ ບຸບຜາ, ທ່ານ ສີສະນະ ສີສານ, ທ່ານ ສິງກະໂປ ສີໂຄດຈຸນະມະນີ, ທ່ານ ມາ ໄຂຄຳພິທູນ, ທ່ານ ສີທົນ ກົມມະດຳ, ທ່ານ ບົວສີ ຈະເລີນສຸກ ແລະ ຜູ້ອື່ນໆ ..ລວມ 16 ຄົນ.

ມາບຸກໂຈມຕີ ນະຄອນຫຼວງວຽງຈັນ ໃນວັນທີ 12/12/ 1960 ອັນໄດ້ເຮັດໃຫ້ກຳລັງເປັນກາງ ແລະ ລັດຖະບານຖືກຕ້ອງຕາມກົດໝາຍ ຕ້ອງຖອນອອກຈາກວຽງຈັນ ເພື່ອຫຼີກເວັ້ນການນອງເລືອດ ແລະ ຫຼຸດຜ່ອນການເສຍຫາຍດ້ານຊັບສິນ ຂອງຊາດ ແລະຊີວິດຂອງປະຊາຊົນ ຈຶ່ງໄປຕັ້ງທີ່ໝັ້ນ ຢູ່ທົ່ງໄຫຫີນ ແລະປະຊາຊົນຈຳນວນໜຶ່ງ ກໍ່ໜີຈາກການແກ້ແຄ້ນຂອງນາຍພົນ ພູມີ ແລະ ສີໂຫ ໄປຊ້ອນຕົວຢູ່ຊົນນະບົດ, ໄປຫາກຳລັງແນວລາວຮັກຊາດ ກຳລັງເປັນກາງ ແລະ ໄປຕ່າງປະເທດ ຈຶ່ງເຮັດໃຫ້ຈຳນວນປະຊາກອນໃນນະຄອນວຽງຈັນ ຫຼຸດລົງ ໃນຊຸມປີ 1961. ໃນສະໜາມຮົບປ້ອງກັນ ນະຄອນຫຼວງວຽງຈັນ ໃນເວລານັ້ນ ເຮືອນຊານ ບ້ານຊ່ອງໄດ້ຖືກໄໝ້ ແລະ ເພພັງຫຼາຍ, ຊາວໜຸ່ມ ປະຊາຊົນ ແລະ ພົນທະຫານ ຜູ້ຮັກຊາດ ໄດ້ຖືກບາດເຈັບ ແລະ ເສຍຊີວິດ ໄປຫຼວງຫຼາຍ ພິເສດ ແມ່ນ ສະຫາຍ ສີທອງ ວິລະຊົນແຫ່ງຊາດ ກໍ່ໄດ້ສະລະຊີບນະທີ່ນີ້, ຊາວນະຄອນຫຼວງວຽງຈັນຍັງຈົດຈຳເຫດການໃນເວລານັ້ນໄດ້ດີ.(3)



ຕຶກສະພາຜູ້ແທນລາສະດອນແຫ່ງຣາຊະອານາຈັກລາວ, ສ້າງປີ 1955 (ຮູບເດີມ)



ດຽວນີ້ແມ່ນຫ້ອງປະຊຸມຂອງລັດຖະບານ (ຮູບຖ່າຍປີ 2008)

---

[3] ທ່ານ ໜູຮັກ ພູມສະຫວັນ ທ່ານ ພູມີ ວົງວິຈິດ ທ່ານ ສິງກະໂປ ສີໂຄດຈຸນະມານີ ແລະ ຜູ້ອື່ນໆ ທີ່ຫາກໍ່ໂຕນຄຸກອອກໄປ ກໍ່ໄດກັບຄືນເຂົ້າມາຊື້ນຳໂດຍກົງ ຄະນະລັດຖະປະຫານ 9/ 8/ 60 ໃນນະຄອນວຽງຈັນ ຕາມຄຳສັ່ງຂອງສູນກາງພັກ, ຈຶ່ງມີກອງພັນ 500 ຂອງແນວລາວຮັກຊາດ ນຳໂດຍສະຫາຍ ສີທອງ ເຂົ້າມາຊ່ວຍກຳລັງເປັນກາງ ໃນເວລານັ້ນ.



ທຳນຽບລັດຖະບານແຫ່ງຣາຊະອານາຈັກລາວ, ສ້າງປີ 1954 (ຮູບເດີມ)



ດຽວນີ້ແມ່ນ ກະຊວງຍຸດຕິທຳ ຮູບຖ່າຍ ປີ 2008
(ໄດ້ດັດແປງສີໜ້າໂຄງຫຼັງຄາ ແລະ ອັດຊ່ອງລົມໃສ່ຕື່ມ)

ອີງໃສ່ເຫດການໆເມືອງ ແລະ ການທະຫານທີ່ໄດ້ເລົ່າມາຂ້າງເທິງນັ້ນ ຈຶ່ງໄດ້ເຫັນແຈ້ງວ່າ ປະຊາກອນໃນເມືອງວຽງຈັນ ໄດ້ມີການສະຫຼັບກັນໄປມາ ເຊັ່ນວ່າ ຄົນວຽງຈັນ ຈຳນວນຫຼາຍພັນຄົນໄດ້ໜີອອກໄປ ແຕ່ພັດມີປະຊາຊົນທີ່ຖືກກວາດຕ້ອນມາຈາກແຂວງອື່ນໆມີເຜົ່າ ລາວລຸ່ມ, ໄທດຳ, ມົ້ງ ຈຳນວນ ຫຼາຍພັນຄົນໄດ້ເຂົ້າມາ ຢູ່ຊານເມືອງວຽງຈັນແທນເຊັ່ນ: ນາໄຮ່ດຽວ, ໂພນຕ້ອງ, ພະໄຊ, ທົ່ງຕູມເປັນຕົ້ນ, ເຮັດໃຫ້ຊານເມືອງຄ່ອຍຂະຫຍາຍຕົວອອກເປັນກຸ່ມບ້ານນ້ອຍໆອ້ອມນະຄອນວຽງຈັນ.

ສ່ວນເຂດຊັ້ນໃນຂອງກຳແພງເມືອງ ກໍ່ມີຊາວຄ້າຂາຍຕ່າງດ້າວເຂົ້າມາຢູ່ ແລະ ມີຊາວອົບພະຍົບຊຽງຂວາງ ແລະ ຄົນແຂວງອື່ນ ມາປຸກເຮືອນຢູ່ຕື່ມໃນ ເຂດ ບຶງຍະທອງ ລົງໄປເຖິງທ່າເຮືອຫຼັກສີ່.

ຈຳນວນປະຊາກອນນັບທັງຊານເມືອງໃນເວລານີ້ມີ :

- ປີ 1953 ມີປະມານ 62,000 ຄົນ ໃນ 4 ຕົວເມືອງ

- ປີ 1958 ມີປະມານ 70,000 ຄົນ ໃນ 4 ຕົວເມືອງ
- ປີ 1960 ມີປະມານ 73,000 ຄົນ ໃນ 4 ຕົວເມືອງ [4]

## 2. ດ້ານຜັງເມືອງ[5]

ໃນໄລຍະນີ້, ລັດຖະບານ ຍັງບໍ່ທັນມີການຄົ້ນຄ້ວາວາງຜັງເມືອງລະອຽດ ແຕ່ຢ່າງໃດ, ພຽງແຕ່ສືບຕໍ່ທິດຊີ້ນຳເກົ່າຂອງຝຣັ່ງ ເຊັ່ນກຳນົດເອົາ 3 ຖະໜົນໃຫ່ຍເປັນຫຼັກ: ຖະໜົນເຂດຖາທີລາດ, ຖະໜົນສາມແສນໄທ ແລະ ຂະຫຍາຍຖະໜົນລ້ານຊ້າງອອກໄປທິດເໜືອຕໍ່ໃສ່ທາງ 13 ໃຕ້ ແລ້ວສ້າງຈຸດໃຈກາງໃໝ່ທີ່ອະນຸສາວະລີ (ປະຕູໄຊ). ມີການສະຫງວນ ການປຸກສ້າງໃສ່ເຂດຕ່ຳ (ເຂດນ້ຳຖ້ວມ), ໜອງບຶງ, ດິນນາ ແລະ ຕະຄອງຮ່ອງນ້ຳ. ແຕ່ໃນພາກປະຕິບັດຕົວຈິງ ພັດບໍ່ໄປຕາມທິດທາງນັ້ນປານໃດ ເພາະຄວາມຕ້ອງການຂອງການເມືອງ ແລະ ການຄ້າ ພັດໄດ້ປຸກສ້າງໄປແບບເສລີ ໂດຍບໍ່ເລືອກທີ່ ຈຶ່ງມີສະພາບການປຸກເຮືອນກ່ອນການສ້າງທາງ ເຮັດໃຫ້ການວາງຜັງເມືອງມີຄວາມຫຍຸ້ງຍາກ ຕາມທີຫຼັງ.

☐ **ທີ່ຕັ້ງຂອງລັດຖະບານ : ກໍ່ໄດ້ມີການຍົກຍ້າຍໄປມາ ເຊັ່ນ :**

- ທີ່ປະທັບຂອງເຈົ້າຊີວິດ ຍັງແມ່ນຫຼວງພະບາງ, ສ່ວນຢູ່ວຽງຈັນ ບາງຄັ້ງຄາວແມ່ນເຮືອນພັກເກົ່າຂອງຜູ້ສຳເລັດຣາຊະການຝຣັ່ງ (ຫຼັງຫໍພະແກ້ວ).
- ປີ 1955 ທຳນຽບລັດຖະບານໄດ້ມາຕັ້ງຢູ່ຂ້າງປະຕູໄຊ (ກະຊວງຍຸຕິທຳ ດຽວນີ້) ອັນມີສຳນັກງານນາຍົກລັດຖະມົນຕີ, ກະຊວງສຶກສາ, ກະຊວງເສດຖະກິດ, ກະຊວງຍຸຕິທຳ ແລະ ກະຊວງສາທາລະນະສຸກ (ຕຶກຫຼັງນີ້ໄດ້ສ້າງຂຶ້ນໃນປີ 1954).
- ປີ 1958 ສະພາຜູ້ແທນລາສະດອນ ໄດ້ຍ້າຍມາຢູ່ທິດຕາເວັນຕົກຂອງປະຕູໄຊ ( ຕຶກຫຼັງນີ້ໄດ້ສ້າງຂຶ້ນ ໃນປີ 1955 ຊຶ່ງແມ່ນຫ້ອງປະຊຸມຂອງລັດຖະບານ ດຽວນີ້ ).
- ກະຊວງປ້ອງກັນປະເທດໄດ້ຍ້າຍມາຢູ່ຫ້ອງວ່າການແຂວງ ຊຶ່ງແມ່ນຫໍພິພິດຕະພັນປະຫວັດສາດແຫ່ງຊາດ ດຽວນີ້. (ມີບາງໄລຍະ ສຳນັກງານນາຍົກລັດຖະມົນຕີກໍ່ມາຢູ່ທີ່ນີ້)
- ກະຊວງໂຄສະນາ ແລະ ຖະແຫຼງຂ່າວ ຕັ້ງຢູ່ຕຶກໂຄ້ງ 2 ຊັ້ນ ຕໍ່ໜ້ານ້ຳພຸ (ສຳນັກງານໜັງສືພິມປະຊາຊົນ ດຽວນີ້), ສ່ວນກະຊວງ ອື່ນໆ ນັ້ນ ກໍຍັງຢູ່ບ່ອນເກົ່າຕາມເດີມ.

☐ **ການສ້າງສາທາລະນະປະໂຫຍດ :**

- ໄດ້ປຸກ ວິທະຍາໄລສ້າງຄູ ທີ່ດົງໂດກ ໃນປີ1 958 ແລ້ວຍ້າຍໂຮງຮຽນສ້າງຄູຊັ້ນກາງ ໃນວຽງຈັນອອກໄປຢູ່.
- ໄດ້ສ້າງມັດທະຍົມສົມບູນວຽງຈັນ ທີ່ນາໄຮ່ດຽວປີ 1957 ແລ້ວຍ້າຍມັດທະຍົມປາວີອອກໄປ,

---

[4] ຕາມການສຳຫຼວດຂອງ BCEOM (Bureau de Construction et Equipement d'Outre Mer)ໃນປີ 1960

[5] ໄດ້ມີພະຣາຊະອົງການເລກທີ່ 223 ວັນທີ່ 8/9/1960ໃຫ້ເມືອງວຽງຈັນເປັນກຳແພງນະຄອນຊັ້ນ 1 ແລະ ພະຣາຊະອົງການ ໃນວັນທີ 1/3/1960 ວ່າດ້ວຍການອະນຸຍາດໃຫ້ສ້າງຜັງຊີ້ນຳກໍ່ສ້າງເມືອງວຽງຈັນ( ຕາມ ປຶ້ມຂຽນ ຂອງ Luce ໜ້າ 318- 319)

ສ່ວນສະຖານທີ່ເກົ່າແມ່ນມອບ ໃຫ້ເປັນຫໍພັກນັກຮຽນແພດສາດ.

- ຖະໜົນຫົນທາງໄດ້ມີການສ້ອມແປງ, ປັບປຸງໜ້າທາງ ແລະ ຮ່ອງລະບາຍນ້ຳຄືນ.
- ລະບົບໄຟຟ້າກໍ່ໄດ້ເພີ່ມແຮງຂຶ້ນ 2 ເທົ່າ ແລະ ຂະຫຍາຍອອກໄປທາງທິດເໜືອ ແລະ ທິດຕາເວັນຕົກອີກ ຈົນຮອດວັດໄຕ.
- ລະບົບນ້ຳປະປານັ້ນ ຍັງແມ່ນໃຊ້ລະບົບເກົ່າຢູ່, ແຕ່ລັດຖະບານກໍມີທິດຈະສ້າງນ້ຳປະປາເກົ້າລ້ຽວແລ້ວ.
- ໃນໂຮງໝໍມະໂຫສົດໄດ້ປຸກອາຄານຕື່ມອີກ ປະມານ 4 ຫຼັງ.
- ສ່ວນລະບົບນ້ຳເສຍນັ້ນ ຍັງນຳໃຊ້ລະບົບເກົ່າ ແລະ ຮ່ອງທຳມະຊາດເຊັ່ນ: ຮ່ອງນ້ຳປ່າສັກ, ຮ່ອງແຊງ, ຮ່ອງຄູວຽງ, ໄຫຼລົງໃສ່ ນ້ຳຂອງ ແລະ ຮ່ອງແກ ລົງໃສ່ບຶງທາດຫຼວງອັນເປັນຮ່ອງໂຕ່ງ ແລະ ບຳບັດນ້ຳເສຍຕາມທຳມະຊາດ.

☐ **ທີ່ຕັ້ງຂອງຄ້າຍທະຫານ**

- ຄ້າຍປ່າສັກ ຍັງແມ່ນຄ້າຍທະຫານທີ່ປຶກສາຂອງຝຣັ່ງ MMF (Mission Militaire Française).
- ຄ້າຍໂພນເຄັງ ແມ່ນຄ້າຍສາລະວັດທະຫານ ແລະ ມີຄຸກກັກຂັງຜູ້ນຳແນວລາວຮັກຊາດ ຢູ່ທີ່ນີ້ໃນປີ 1959.
- ຄ້າຍນາໄຊ ແມ່ນຄ້າຍສຳພາວຸດຂອງ ກອງທັບ.
- ກົມພະລາທິການ ແມ່ນໂຮງງານຈັກຫຍິບຂົວຫຼວງ ດຽວນີ້.(ຄ້າຍ ກາຟາ)
- ກຳໃຕ້ເດີ່ນບິນວັດໄຕ ເປັນຄ້າຍທະຫານອາກາດ.
- ຄຸ້ມວັດໄຕເໜືອ ແມ່ນກອງລຳລຽງທະຫານ (Train).
- ຫຼັກ 21 ທາງ 13 ໃຕ້ ແມ່ນສາງອາວຸດຂອງກອງທັບແຫ່ງຊາດ.

☐ **ສະຖານທູດຕ່າງໆ** : ໃນເວລານີ້ມີ 7 ສະຖານທູດ (ຝຣັ່ງ, ອາເມຣິກາ, ອັງກິດ, ອິນເດຍ, ການາດາ,ໄທ ແລະ ຂະເໝນ) ແລະ 6 ກົງສຸນ (ຮອນລັງ, ດານມາກ, ແບນຊິກ,ໂອສະຕາລີ, ຟີລິປິນ ແລະ ຫວຽດນາມໃຕ້) , ມາຕັ້ງຢູ່ໃນເຂດ ເມືອງວຽງຈັນເກົ່າ. ຫຼັງລັດຖະປະຫານ 9/8/60 ໄດ້ມີສະຖານທູດ ສະຫະພາບໂຊວຽດ, ໂປໂລຍ, ເຊກໂກສະໂລວາກີ, ສາທາລະນະລັດ ປະຊາທິປະໄຕຫວຽດນາມ ແລະ ສາທາລະນະລັດ ປະຊາຊົນຈີນ ມາຕັ້ງຢູ່ອີກ.

☐ **ເຂດການຄ້າໄດ້ພັດທະນາໄປຫຼາຍແຫ່ງ:**

- ຕາມຖະໜົນຊຸນບູລົມຮອດສີຫອມ ແລະ ມີຕະຫຼາດແລງຢູ່ທີ່ນີ້ດ້ວຍ.
- ຕາມຖະໜົນສາມແສນໄທ ແຕ່ສີຫອມຮອດທາດດຳ ແຕ່ເກົ້າຍອດຮອດ ສີເມືອງ.
- ລົງມາຕາມ 2 ຝາກທາງຂອງຖະໜົນເຊດຖາທິລາດ ຮອດເຂດນ້ຳພຸ (ຕະຫຼາດເຊົ້າເກົ່າ).
- ຕາມຖະໜົນສາຍຂວາງບາງເສັ້ນເຊັ່ນ : ເຈົ້າອະນຸວົງ, ໝໍ່ແກ້ວກຸມມານ, ມັນທາຕຸລາດ. ຕະຫຼາດ ໃນເວລານີ້ມີຢູ່ 5 ແຫ່ງຄື : ຕະຫຼາດເຊົ້າ (ນ້ຳພຸ), ຕະຫຼາດແລງ 4 ແຫ່ງ: ສີຫອມ,

ທາດຫຼວງ, ສີເມືອງ ແລະ ສີໄຄ.

ການຄ້າຂາຍສ່ວນໃຫຍ່ແມ່ນເຮັດກັບຣາຊະອານາຈັກໄທ ທັງສິນຄ້າອຸດສະຫະກຳ ແລະ ກະສິກຳ ແລະ ມີສິນຄ້າບາງຊະນິດມາຈາກປະເທດຕາເວັນຕົກເຊັ່ນ : ລົດ, ເຄື່ອງຈັກ ພາຫະນະ ແລະ ວັດສະດຸກໍ່ສ້າງ, ເຄື່ອງນຸ່ງຫົ່ມ, ເຫຼົ້າ, ນ້ຳຫອມ,ຢາສູບ, ຢາປົວພະຍາດ ເປັນຕົ້ນ.

□ **ທີ່ຢູ່ອາໄສຂອງປະຊາຊົນ**

ເວົ້າລວມແລ້ວ, ການປຸກສ້າງຂອງປະຊາຊົນ ແມ່ນສ້າງໄປຕາມຄວາມຕ້ອງການຂອງ ຕົນ, ແບບອານາທິປະໄຕ ເພາະລັດຖະບານບໍ່ມີຜັງເມືອງຊີ້ນຳ, ໂດຍສະເພາະ ແມ່ນລະຫວ່າງປີ 1958- 1960 ໄດ້ມີສິ່ງກໍ່ສ້າງເກີດຂຶ້ນຫຼາຍ.

ໃນເຂດຕົວເມືອງເກົ່າ, ເຮືອນຊານໄດ້ໜາແໜ້ນຂຶ້ນຕື່ມ ເປັນຕົ້ນໃນຄຸ້ມສີຫອມ, ອິນ ແປງ, ວັດຈັນ, ຫາຍໂສກ, ມີໄຊ ຊຶ່ງເຮັດໃຫ້ຄວາມໜາແໜ້ນຂອງປະຊາກອນເພີ່ມຂຶ້ນ ຈາກ 80 ຄົນຕໍ່ເຮັກຕາ ໃນປີ 1954 ມາເປັນ 120 ຄົນຕໍ່ເຮັກຕາ ໃນປີ 1960. ສ່ວນເຂດທາງຣາຊະການ ຄວາມໜາແໜ້ນໄດ້ເພີ່ມຂຶ້ນພຽງເລັກນ້ອຍເທົ່ານັ້ນ. ເຂດ ທາດຂາວ ແລະ ບຶງຂະຫຍອງ ກໍ່ມີ ຄົນມາປຸກເຮືອນຢູ່ແດ່ແລ້ວ ສ່ວນຫຼາຍແມ່ນຄົນຊຽງຂວາງ. ເຂດນີ້ເປັນເຂດຕ່ຳຈຶ່ງຂະຫຍາຍຕົວ ຊ້າກ່ວາເຂດເໜືອຂອງນ້ຳຂອງ.

## 3.<u>ເຂດຊານເມືອງ :</u>

ທາງທິດເໜືອຂອງແມ່ນ້ຳຂອງແຕ່ ບ້ານສີຖານ, ຫົວເມືອງ, ອູບມຸງ, ຊຸນຕາ, ວັດໄຕນ້ອຍ, ວັດໄຕໃຫຍ່ ໄດ້ຕິດຈອດໃສ່ກັນແລ້ວ ຈົນກາຍເດີ່ນບິນວັດໄຕຂຶ້ນເມືອ, ສ່ວນກຳທີ່ງ ກໍ່ເກີດມີບ້ານ ຂຶ້ນເປັນ ຍ່ອມໆ ແຕ່ບໍ່ທັນຕິດຈອດໃສ່ກັນເທື່ອ.

ດ້ານຕາເວັນຕົກສ່ຽງເໜືອລົງໄປຮອດຕາເວັນອອກ ໄດ້ມີບ້ານເປັນກຸ່ມນ້ອຍ ເກີດຂຶ້ນ ຫຼາຍເຊັ່ນ: ບ້ານປາກທ້າງ, ດົງນາໂຊກ, ໜອງດ້ວງໃຫ່ຍຂຶ້ນ, ບ້ານຂົວຫຼວງໄດ້ຂະຫຍາຍອອກ ໄປຮອດບ້ານຮ່ອງຄ້າ, ບ້ານໜອງບົວທອງ, ບ້ານນາໄຮ່ດຽວຂະຫຍາຍຕົວອອກ, ບ້ານ ທົ່ງຕູມ, ບ້ານໂພນສະອາດ, ບ້ານໜອງບອນ ຂະຫຍາຍຕົວອອກ, ບ້ານທາດຫຼວງໃຫ່ຍຂຶ້ນ, ບ້ານ ໂພນເຄັງ, ບ້ານໂພນພະເນົາ, ບ້ານໂພນໄຊໃຫ່ຍຂຶ້ນ, ບ້ານດົງປ່າລານໃຫ່ຍຂຶ້ນ, ບ້ານຝາຍ, ບ້ານໂພນສີນວນ, ບ້ານດົງປາຍນາ, ບ້ານໂພນສະຫວັນ, ບ້ານສາລາແດງ ເປັນ ກຸ່ມບ້ານ ອ້ອມຕົວເມືອງວຽງຈັນ ເໝືອນດັ່ງດາວອ້ອມເດືອນ. ສ່ວນທາງທິດໃຕ້ແມ່ນ້ຳຂອງ ເກີດມີບ້ານ ພັນໝັ້ນໃຫຍ່ຂຶ້ນ, ບ້ານວັດສີບ, ບ້ານສວນມອນໃຫ່ຍຂຶ້ນ, ບ້ານຈອມແຈ້ງໃຫຍ່ຂຶ້ນ, ບ້ານຈອມເພັດ.. ລຽບໄປຕາມຖະໜົນທ່າເດື່ອ ເຖິງວ່າບໍ່ທັນຈອດໃສ່ກັນກໍ່ຕາມ ມັນເປັນ ການຂະຫຍາຍ ຕົວໄປແບບທຳມະຊາດ ໂດຍປິ່ນຫຼັງໃສ່ນາ ປິ່ນໜ້າໃສ່ຖະໜົນ. ການກຳເນີດຂອງ ຈຳນວນບ້ານເຫຼົ່ານີ້ ໄດ້ກາຍເປັນພື້ນຖານ ແລະ ໜໍ່ແໜງໃຫ້ແກ່ການເປັນຕົວເມືອງໃນຊຸມປີ 70, 80, 90 ແລະ 2000 ໃນຕໍ່ມາ ເຮັດໃຫ້ພື້ນທີ່ຕົວເມືອງຄ່ອຍເຊື່ອມຈອດເຂົ້າກັນ ເທື່ອລະກ້າວ.

## 4. ສະຖາປັດຕະຍະກຳ:

- ສະພາຜູ້ແທນລາສະດອນ ທີ່ປຸກໃນປີ 1955 ນັ້ນ ເປັນອາຄານ 2 ຊັ້ນ, ມີຫ້ອງປະຊຸມສະພາຢູ່ໃຈກາງ, ມີຫ້ອງພະແນກຊ່ວຍວຽກຢູ່ອ້ອມຂ້າງ ແລະ ມີຊັ້ນສອງເປັນຫ້ອງເຮັດວຽກຂອງປະທານ ແລະ ຮອງປະທານສະພາ. ສີໜ້າຂອງຫໍສະພາ ແມ່ນປິ່ນໄປທິດຕາເວັນອອກ ດ້ວຍການວາງສະແດງເສົາໃຫຍ່ ກົມ ແລະ ສູງ 4 ເສົາ , ມີບົວຕິດທີ່ຕີນ ແລະ ຫົວເສົາ ມີປະຕູໃຫ່ຍເຂົ້າໄປ ຊຶ່ງເຮັດດ້ວຍໄມ້ ໜາ, ກ້ວາງ ແລະ ສູງ. ສ່ວນຫຼັງຄາເມື່ອກ່ອນແມ່ນມຸງດ້ວຍສັງກະສີ ເປັນແປດຽວ ເບິ່ງທາງນອກຄືເປັນຫຼັງຄາພຽງ ພາຍຫຼັງມີກະເບື້ອງເຂົ້າມາ ກໍ່ໄດ້ດັດແປງຫຼັງຄາມາເປັນຫຼາຍແປ ອາຄານນີ້ໄດ້ໃຊ້ເປັນຫ້ອງປະຊຸມຂອງສະພາປະຊາຊົນສູງສຸດໃນຕໍ່ມາ ແລ້ວກໍ່ເປັນຫ້ອງປະຊຸມຂອງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ປີ 1985 ເຖິງ 2010.

- ທຳນຽບລັດຖະບານ ທີ່ປຸກໃໝ່ໃນປີ 1954 ນັ້ນ ເປັນຕຶກ 2 ຊັ້ນ ແບບມາຈາກຕ່າງປະເທດ, ຍາວໄປຕາມຖະໜົນລ້ານຊ້າງ ປິ່ນໜ້າໄປທິດຕາເວັນຕົກ, ແບ່ງເປັນຫຼາຍຫ້ອງເຮັດວຽກ ແລະ ມີຂັ້ນໄດຂຶ້ນໄປ 5 ແຫ່ງ, ປະຕູ ປ່ອງຢ້ຽມ ເຮັດດ້ວຍໄມ້, ບໍ່ຄ່ອຍມີບົວ ແລະ ສິ່ງເອ້ຍ້ອງພໍປານໃດ (ແມ່ນກະຊວງຍຸຕິທຳດຽວນີ້ ຊຶ່ງໄດ້ດັດແປງໂຄງຫຼັງຄາໃຫ້ມີຫຼາຍແປ ເຮັດຊີງສີໜ້າໃໝ່ ໃສ່ຊ່ອງລົມອັດລະບຽງ ກໍ່ຫ້ອງການໃໝ່ອອກມາກວມໃສ່ປະຕູ ເຂົ້າ ທາງກາງ).

- ເຮືອນຫ້ອງແຖວ ແມ່ນເລີ່ມປຸກດ້ວຍເສົາເບຕົງເສີມເຫຼັກຮັບນ້ຳໜັກ, ພື້ນເບຕົງ, ບາງຫຼັງຄາມຸງກະເບື້ອງ ຫຼື ເຮັດດ້ວຍຫຼັງຄາພຽງ. ສ່ວນຫ້ອງນ້ຳ ແມ່ນໃຊ້ວິດຊຶມດ່ຽວໃນເຮືອນ ໂດຍບໍ່ມີການລ່ວງ ໃສ່ທໍ່ລະບົບນ້ຳເສຍໃນເມືອງ, ສ່ວນນ້ຳເສຍໃນເຮືອນຄົວ ແມ່ນລ່ວງໃສ່ຮ່ອງນ້ຳແຄມທາງ.

- ເຮືອນຂອງປະຊາຊົນທຳມະດາ ຍັງແມ່ນແບບລາວເດີມຢູ່ເຊັ່ນມີ ຫ້ອງໄຫ້ວພະ, ຫ້ອງນອນ, ເຊຍ ແລະ ມີຊານ ຕໍ່ໃສ່ເຮືອນຄົວອີກຫຼັງໜຶ່ງ. ວັດສະດຸກໍ່ສ້າງ ແມ່ນ: ໄມ້, ແຮ່ ຊາຍ ປູນ ຊຶ່ງປະກອບເປັນປະທາຍ(ຕອກຊີ). ສ່ວນເຮືອນຂອງ ຜູ້ອົບພະຍົບເຂົ້າມາ ແລະ ເຮືອນປະຊາຊົນຜູ້ທຸກຍາກ ກໍ່ຄື ຖຽງນານັ້ນ ກໍ່ຍັງແມ່ນເຮືອນຕູບມຸງຫຍ້າຊົ່ວຄາວ ຫຼື ມຸງສັງກະສີ.

## 5. ວັດວາອາຮາມ :

ໃນເມືອງໄດ້ມີການປະຕິສັງຂອນ ສິມວັດເພຍວັດ ແລະ ວັດອື່ນໆ..ໃນເມືອງເກົ່າ ແລະ ໄດ້ມີການສ້າງສາຕື່ມໃນເຂດຊານເມືອງບ່ອນທີ່ມີຊຸມຊົນຢູ່, ວັດປ່າຕ່າງໆ ກໍ່ໄດ້ສ້າງຄືນໃໝ່ແບບເຄິ່ງຖາວອນ ມຸງດ້ວຍສັງກະສີ ເຊັ່ນ: ວັດສີສັງວອນ, ວັດໂສກປ່າຫຼວງ, ວັດນາກໃຫຍ່, ວັດສີອຳພອນ ແລະ ວັດອື່ນໆ.. ໃນໄລຍະນີ້ ໄດ້ມີການປຸກສາລາພັນຫ້ອງຂຶ້ນ ທີ່ເດີ່ນພະທາດຫຼວງໃນປີ 1956 ເພື່ອສະຫຼອງ 2500 ປີ ຂອງພຸດທະສາສະໜາ (ສາລານີ້ໄດ້ມ້າງໃນປີ1979 ເພາະຊຸດໂຊມຫຼາຍ). ພິເສດໃນປີ1958 ເພິ່ນໄດ້ຫຼໍ່ຮູບພະເຈົ້າ ໄຊເຊດຖາທິລາດ ແລ້ວອັງເຊີນຂຶ້ນນັ່ງແທ່ນຕໍ່ໜ້າພະທາດຫຼວງ ກຳຕາເວັນຕົກ(6)

---

[6] ຮ.ອ ຊຳນານ ປຣິຊາຍັນ ເປັນຜູ້ອອກແບບ ຮູບພະເຈົ້າ ໄຊເຊດຖາ, ກົມສຳພາວຸດ ໄດ້ໂມທະນາ ກະສອບ ລູກປືນ ໃຫ້ 1 ໂຕນ, ເຈົ້າອາວາດວັດທາດຫຼວງໃຕ້ ຍາພໍ່ຄຳດີ, ແລະ ທ.ທຳ ໄຊຍະສິດ ເສນາ ໄດ້ນຳພາ ອອກຕົບຍາດໂຍມ ຫຼໍ່ ກັບທີ່ ແລ້ວອັງເຊີນຂຶ້ນນັ່ງແທ່ນ.



ຮູບຫຼໍ່ ພະເຈົ້າໄຊເຊດຖາ, ສ້າງຂຶ້ນປີ 1958



ສາລາພັນຫ້ອງທີ່ເດີ່ນພະທາດຫຼວງ, ສ້າງປີ 1956

( ເປ່ເພຫຼາຍ ຈຶ່ງໄດ້ມ້າງຖິ້ມໃນປີ 1979)

## 6. ຜູ້ປົກຄອງບ້ານເມືອງໃນເວລານີ້ :

- ນາຍົກລັດຖະມົນຕີມີຄື :

- ທ່ານ ກະຕ່າຍ ດ.ສະໂສລິດ (1954-1955)

- ເຈົ້າສຸວັນນະພູມາ ( 1956-1957) : ໄດ້ມີການຕັ້ງລັດຖະບານປະສົມແຫ່ງຊາດຄັ້ງທີ່ 1.

- ທ່ານ ຜຸຍ ຊະນະນີກອນ(1957-1959) : ໄດ້ມີການຈັບຜູ້ນຳແນວລາວຮັກຊາດ ເຂົ້າ ຄຸກ ໃນວັນທີ18/7/59 ແລະ ອອກປາບປາມ ປະຊາຊົນ ຢ່າງໂຫດຫ້ຽມ.

- ທ່ານ ກຸ ອາໄພ 1959( ຢູ່ບໍ່ເຖິງປີ)

- ເຈົ້າສົມສະນິດ (1960) : ໄດ້ເກີດມີລັດຖະປະຫານ 09/08/1960

ຈາກນີ້ ຈຶ່ງເກີດມີສອງລັດຖະບານຄື :

ລັດຖະບານທີ່ຖືກຕ້ອງຕາມກົດໝາຍ ຂອງສະເດັດເຈົ້າ ສຸວັນນະພູມາ ຕັ້ງຢູ່ຄັງໄຂ ແຂວງຊຽງຂວາງ (1960-1962) ແລະ ລັດຖະບານຜິດກົດໝາຍຂອງ ສະດັດ ເຈົ້າ ບຸນອູ້ມ ຕັ້ງ ຢູ່ສະຫວັນນະເຂດ (1960) ແລະ ວຽງຈັນ (1961-1962)

- ເຈົ້າແຂວງວຽງຈັນມີຄື :

  - ທ່ານ ຫອມ ສູນດາລາ
  - ທ່ານ ຄຳມ້າວ ພູນສະຫວັດ

# III. ນະຄອນຫຼວງວຽງຈັນ ໃນລະຫວ່າງ ປີ 1961-1975 :

**1. ສະຖານະການ ຂອງບ້ານເມືອງ :** ພາຍຫຼັງທີ່ໄດ້ເຂົ້າຢຶດວຽງຈັນໄດ້ແລ້ວ ນພ ພູມີ ໜໍ່ສະຫວັນ ແລະ ສີໂຫ ກໍ່ອອກແຮງກວາດລ້າງ ປາບປາມ ຊາວໜຸ່ມ ນັກສຶກສາ ປະຊາຊົນ ແລະ ຜູ້ຊີງຄຸນວຸທີຮັກຊາດຢ່າງປ່າເຖື່ອນ ແລະ ໂຫດຫ້ຽມທີ່ສຸດເຊັ່ນ: ຈັບໄປຂ້າຖິ້ມທີ່ແກ້ງຍາງແລະ ດົງໝາກຄາຍບໍ່ເວັ້ນແຕ່ລະວັນ. ສ່ວນການຈັບກຸມໄປໃສ່ຄຸກນັ້ນ ແມ່ນນັບເປັນຫຼາຍຮ້ອຍຄົນ. ແຕ່ລະຄືນພວກກົມປະສານງານຂອງ ນພ ສີໂຫ ຕ້ອງອອກກວາດລ້າງ ເພື່ອຊອກຫາເຫຍື່ອມາ ເປັນລາງວັນໃຫ້ແກ່ເຂົາ ບໍ່ວ່າຈະເປັນຊາວໜຸ່ມ ພະສົງ ຜູ້ຊີງຄຸນວຸທິ ທີ່ຮັກຊາດ ຜູ້ມັກສິນທຳ ຫຼື ຜູ້ບໍ່ເຫັນດ້ວຍກັບການກະທຳຂອງເຂົາ ມາຂູ່ເຂັນທຸບຕີທໍລະມານ ຕະຫຼອດຮອດຍິງສາວຜູ້ ບໍລິສຸດຕ່າງໆ ສຸດທ້າຍ ກໍ່ໄດ້ກາຍເປັນເຫຍື່ອກາມະອາລົມ ໃຫ້ແກ່ພວກເຂົາຈົນໄດ້.

ການປົກຄອງໃນເວລານັ້ນ ແມ່ນໃຊ້ ກົດໄອຍະການເສິກ, ບໍ່ມີກົດໝາຍ ແລະ ສານໃດໆ ອອກມາປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນໄດ້, ມີສຽງດຽວທີ່ຕ້ອງປະຕິບັດນັ້ນຄື ຄຳສັ່ງຂອງຜະເດັດການ ນພ ພູມີ-ສີໂຫ ໃຕ້ການບົ່ງການຂອງ ຈັກກະພັດອາເມຣິກາ ແຕ່ຜູ້ ດຽວເທົ່ານັ້ນ.

ນະຄອນວຽງຈັນເວລານັ້ນ ແມ່ນຕົກຢູ່ໃນຄວາມມືດມົນ ໃຕ້ຄົມດາບຄົມງ້າວ ຢ່າງປ່າເຖື່ອນ ທີ່ ສຸດ !

ໃນໄລຍະ1961-1962 ໄດ້ມີການຕໍ່ສູ້ກັນທາງດ້ານການເມືອງແລະການທະຫານລະຫວ່າງ 2 ຝ່າຍ :

-ຝ່າຍໜຶ່ງ ແມ່ນລັດຖະບານຖືກຕ້ອງຕາມກົດໝາຍຂອງ ສະເດັດເຈົ້າສຸວັນນະພູມາ ຕັ້ງຢູ່ຄັງໄຂແຂວງຊຽງຂວາງ ດ້ວຍການຮ່ວມມືກັບ ແນວລາວຮັກຊາດ ໂດຍມີການສະໜັບສະໜູນຂອງບັນດາປະເທດສັງຄົມນິຍົມ ຜູ້ຮັກຫອມສັນຕິພາບ ແລະ ຄວາມເປັນທຳທົ່ວໂລກ, ແລະ ອີກ

-ຝ່າຍໜຶ່ງ ແມ່ນລັດຖະບານວຽງຈັນ ອັນມີ ສະເດັດ ເຈົ້າບຸນອູ້ມ ນະຈຳປາສັກ ເປັນນາຍົກລັດຖະມົນຕີ ນພ ພູມີ ໜໍ່ສະຫວັນ ເປັນ ຮອງນາຍົກລັດຖະມົນຕີ ດ້ວຍການອູ້ມຊູຂອງຈັກກະພັດ ອາເມຣິກາ ແລະ ໄທ.

ພາຍຫຼັງຕໍ່ສູ້ກັນເປັນເວລາປີກວ່າ ຝ່າຍແນວລາວຮັກຊາດ ແລະກຳລັງເປັນກາງ ກໍ່ນັບມື້ນັບເຂັ້ມແຂງຂຶ້ນ ມີໄຊຊະນະຫຼາຍແຫ່ງ ແຕ່ເໜືອຮອດໃຕ້ ອັນໄດ້ໜີບໃຫ້ຝ່າຍວຽງຈັນ ຕ້ອງເຊັນສັນຍາ 3 ຝ່າຍ ທີ່ ນາມອນ, ຫີນເຫີບ, ຊູຣິກ, ທົ່ງໄຫຫີນ ແລະ ຮັບເຊັນສັນຍາສາກົນ ເຊີແນວ ກ່ຽວກັບລາວອີກຄັ້ງໜຶ່ງ. ລັດຖະບານປະສົມ ແຫ່ງຊາດ 3 ຝ່າຍນັ້ນ ໄດ້ສ້າງຕັ້ງຂຶ້ນໃນ ວັນທີ 23/6/1962 ອັນມີສະເດັດເຈົ້າ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ, ສະເດັດເຈົ້າ ສຸພານຸວົງ ແລະ ນພ ພູມີ ໜໍ່ສະຫວັນ ເປັນຮອງນາຍົກລັດຖະມົນຕີ. ລັດຖະບານປະສົມແຫ່ງຊາດ ຄັ້ງທີ 2 ສ້າງຕັ້ງຂຶ້ນ ບໍ່ເຖິງປີພວກປະຕິການຂວາຈັດກໍ່ທຳການ ຄາດຕະກຳ ທ່ານ ກີນິມ ພົນເສນາ ລັດຖະມົນຕີ ກະຊວງການຕ່າງປະເທດໃນເວລານັ້ນ ຢ່າງໂຫດຫ້ຽມໃນ ວັນທີ 1/4/63 ແລະ ຂ້ານາຍຕຳຫຼວດ, ນາຍທະຫານ ແລະ ຂ້າລາຊະການ ຜູ້ຮັກຊາດ ໃນກຳລັງເປັນກາງອີກຢ່າງຫຼວງຫຼາຍ ທັງນາບຂູ່ ເກາະຜິດ ຜູ້ແທນແນວລາວຮັກຊາດ ຢູ່ ວຽງຈັນ ຫຼາຍຕໍ່ຫຼາຍຄັ້ງ.

ຈາກການກະທຳທີ່ ໄດ້ເລົ່າມານີ້ ມັນໄດ້ສ້າງສະພາບການເຄັ່ງຕຶງ ແລະ ບໍ່ສະຫງົບ ມາອີກຄັ້ງໃໝ່ ໄດ້ເຮັດໃຫ້ການເຮັດວຽກຂອງລັດຖະບານປະສົມ ບໍ່ສະດວກ ແລະ ປອດໄພ ແລ້ວກາຍເປັນອຳມະພາດ, ສະນັ້ນ ລັດຖະມົນຕີ ຂອງແນວລາວຮັກຊາດ ແລະ ຝ່າຍເປັນກາງຈຳນວນໜຶ່ງ ຕ້ອງໜີອອກຈາກ ນະຄອນຫຼວງ ວຽງຈັນ ໄປສູ່ເຂດປົດປ່ອຍ ຢ່າງປອດໄພ.

ໄລຍະ 1964-1975 : ເປັນໄລຍະທີ່ ຈັກກະພັດ ອາເມຣິກາ ໄດ້ເປີດກ້ວາງສົງຄາມໃນອິນດູຈີນ ໂຄ່ນລົ້ມ ສົມເດັດເຈົ້າ ສີຫານຸ ທີ່ ກຳພູເຈ້ຍ ປະກາດ ສົງຄາມກັບ ສາທາລະນະລັດປະຊາທິປະໄຕ ຫວຽດນາມ (ສສ ຫວຽດນາມ ດຽວນີ້) ແລະ ໃຊ້ເຮືອບິນຖິ້ມລະເບີດໃສ່ ເຂດປົດປ່ອຍຂອງກຳລັງຮັກຊາດ ຢ່າງປ່າເຖື່ອນ. ຢູ່ວຽງຈັນ ເຂົາໄດ້ເຮັດລັດຖະປະຫານ 4 ຄັ້ງ ແລະ ຂູ່ຈະເຮັດ ລັດຖະປະຫານ ເປັນສິບກວ່າຄັ້ງ ເພື່ອຢາກເຂົ້າມາມີສ່ວນແບ່ງຜົນປະໂຫຍດ ຈຶ່ງໄດ້ປັບປຸບລັດຖະບານ ມາ 5 ຄັ້ງ ໂດຍເອົາພວກຂວາຈັດ ເຂົ້າມາກຳຕຳແໜ່ງຫວ່າງຂອງ ກຳລັງຮັກຊາດ. ເມື່ອປີນຂັ້ນໄດສົງຄາມໃນອິນດູຈີນໃນລະດັບສູງສຸດແລ້ວ ກໍ່ບໍ່ຊະນະນ້ຳໃຈສູ້ຣົບ ຂອງປະຊາຊົນອິນດູຈີນໄດ້ ຈັກກະພັດ ອາເມຣິກາ ຈຶ່ງຫັນມາເຈລະຈາ ກັບ ສ ປ ຫວຽດນາມ ຫຼາຍຕໍ່ຫຼາຍຄັ້ງແກ່ຍາວເວລາເປັນສອງປີ. ຍ້ອນໄຊຊະນະອັນໃຫຍ່ຫຼວງທີ່ບໍ່ເຄີຍມີມາຈັກເທື່ອ ຂອງປະຊາຊົນ ສາມຊາດ ອິນດູຈີນ ຈັກກະພັດ ອາເມຣິກາ ຈຶ່ງຍອມເຊັນສັນຍາ ຢຸດຍິງທີ່ ປາຣີ ວັນທີ 29/1/1973 ແລະພວກປະຕິການລາວ ກໍ່ຮັບເຊັນສັນຍາຢຸດຍິງທີ່ ວຽງຈັນໃນວັນທີ 21/2/1973.

ເນື້ອແທ້ຂອງສັນຍາຢຸດຍິງນັ້ນ ແມ່ນເພື່ອຟື້ນຟູສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ຊຶ່ງແມ່ນຫຼັກໝັ້ນ ຕໍ່ສູ້ຂອງ ພັກ ປະຊາຊົນລາວ (ພັກ ປະຊາຊົນປະຕິວັດ ລາວ ດຽວນີ້) ຢ່າງສະເໝີຕົ້ນ ສະເໝີປາຍ. ມີສັນຍາຢຸດຍິງແລ້ວກໍ່ຕາມ ແຕ່ພວກປະຕິການຍັງດື້ດ້ານ ຂັດຂວາງການປະຕິບັດ ສັນຍາຢຸດຍິງດັ່ງກ່າວ ດ້ວຍການນາບຂູ່ ປະຊາຊົນ, ເກາະຜິດ ແລະ ປິດລ້ອມ ຜູ້ແທນແນວລາວຮັກ ຊາດ ອີກຫຼາຍໆຄັ້ງ ແລະ ສຸດທ້າຍ ກໍ່ເຮັດລັດຖະປະຫານ ອີກຄັ້ງໜຶ່ງຂຶ້ນຈົນໄດ້ ໃນວັນທີ 20/8/1973 ອອກໜ້າ ໂດຍ ນ ພ ທ້າວມາແລະ ພອ ບຸນເລີດ ແຕ່ແມ່ນ ນ ພ ພູມີ ໜໍ່ສະຫວັນ ແລະ ທ. ຜຸຍ ຊະນະນິກອນ ຢູ່ເບື້ອງຫຼັງ. ແຕ່ຍ້ອນໄດ້ຮັບການສະໜັບສະໜູນ ຂອງ ຊາວວຽງຈັນ ເປັນຈຳນວນຫຼວງຫຼາຍ ແລະ ທາງສຽງ ຂອງສາກົນ ທີ່ ຮັກຫອມສັນຕິພາບ ຈຶ່ງເຮັດໃຫ້ ລັດຖະບານ ວຽງຈັນ ຍອມຮັບເຊັນ ອະນຸສັນຍາ ສ້າງຕັ້ງ ລັດຖະບານ ປະສົມແຫ່ງຊາດ ແລະ ຄະນະມົນຕີ ປະສົມການເມືອງແຫ່ງຊາດຂຶ້ນ ໃນວັນທີ 14/9/1973. ຕໍ່ຈາກນັ້ນມາ 6 ເດືອນກ່ວາ ຄື ວັນທີ 5/4/1974 ຈຶ່ງສາມາດສ້າງຕັ້ງລັດຖະບານ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດຂຶ້ນໄດ້. ມັນເປັນການລຳບາກທີ່ສຸດສຳລັບ ຄະນະຜູ້ແທນ ຂອງແນວລາວຮັກຊາດ ນຳພາ ໂດຍ ທ່ານ ພູມີ ວົງ ວິຈິດ ກົມການເມືອງ ສູນກາງພັກ ໃນເວລານັ້ນ ທີ່ທຳການຕໍ່ສູ້ກັບຝ່າຍວຽງຈັນ ແບບໜ້າຕໍ່ໜ້າ ຊົ່ວ ໂມງຕໍ່ຊົ່ວໂມງ ຢ່າງເຄັ່ງຕຶງທີ່ສຸດ (ໃຜຢາກຮູ້ລາຍລະອຽດ ກະລຸນາ ອ່ານປຶ້ມ "ຄວາມຊົງຈຳ" ຂອງ ທ່ານ ພູມີ ວົງວິຈິດ ພິມທີ່ ໂຮງພິມກະຊວງສຶກສາ ປີ 1987).

ຊາວວຽງຈັນຄົງບໍ່ຫຼົງລືມໄດ້ງ່າຍ ເມື່ອ **ສະເດັດເຈົ້າ ສຸພານຸວົງ** ໄດ້ມາຮອດນະຄອນຫຼວງ ວຽງຈັນ ໃນວັນທີ 3/4/1974 ໄດ້ມີຂະບວນ ຊາວໜຸ່ມ ນັກສຶກສາ ປັນຍາຊົນ ຂ້າລາຊະການ ພໍ່ຄ້າ ຊາວຂາຍ ເປັນຫຼາຍພັນຄົນ ອອກມາຕ້ອນຮັບເພິ່ນ ແລ້ວພາກັນແຫ່ ສະເດັດເປັນຂະບວນ ອັນຍາວ ຢຽດຈົນເຖິງທີ່ພັກຂອງເພິ່ນເອງ!

ພັກໄດ້ຊີ້ນຳ ມວນຊົນໃຫ້ຈັບໂອກາດ ຍາດເວລາ ພັນປີມີເທື່ອໜຶ່ງ ໂດຍນຳໃຊ້ *ສາມບາດ ຄ້ອນຍຸດທະສາດ ລຸກຂຶ້ນຍຶດອຳນາດ ທົ່ວປະເທດ ເຮັດແບບ ບົວບໍ່ໃຫ້ຊ້ຳ ນ້ຳບໍ່ໃຫ້ຂຸ່ນ ແຕ່ຈັບປາໃຫ້ ໄດ້* ນັ້ນແມ່ນການຊີ້ນຳທີ່ສະຫຼາດຊ່ອງໃສທີ່ສຸດ. ໃນຂະນະນັ້ນ **ທ່ານ ໄກສອນ ພົມວິຫານ** ເລຂາທິການໃຫ່ຍ ພັກປະຊາຊົນລາວ ໄດ້ເຂົ້າມາຢ່າງລັບໆ ຊີ້ນຳການລຸກຮືຂຶ້ນຍຶດອຳນາດ ທີ່ ນະຄອນຫຼວງວຽງຈັນໂດຍກົງ. ໃນທີ່ສຸດ ຂະບວນຂອງມວນຊົນຊາວວຽງຈັນ ຫຼາຍພັນຄົນ ຊຶ່ງ ປະກອບດ້ວຍ ຊາວໜຸ່ມ ນັກສຶກສາ ປັນຍາຊົນ ກຳມະກອນ ພະສົງ ຕະຫຼອດຮອດ ທະຫານ ແລະ ຂ້າລາຊະການຂອງຝ່າຍວຽງຈັນ ກໍ່ອອກມາເດີນຂະບວນປະທ້ວງຕາມຖະໜົນ ກ່າວໂຈມຕີພວກ ປະຕິການຂາຍຊາດ ຢ່າງສະໜັ່ນຫວັ່ນໄຫວ, ພິເສດ ແມ່ນມື້ປະກາດຍຶດອຳນາດ 23 ສິງຫາ 1975 ທີ່ເດີ່ນພະທາດຫຼວງ ຊຶ່ງມີມວນຊົນເຂົ້າຮ່ວມເປັນແສນຄົນ ຖືປ້າຍແລະຮ້ອງຄຳຂວັນທີ່ຂຽນວ່າ :

- ➢ ໂຄ່ນລົ້ມລະບອບເກົ່າທີ່ເໜົ່າເໝັນ !
- ➢ ຈັກກະພັດ ອາເມຣິກາ ຕ້ອງກັບບ້ານ !
- ➢ ພວກປະຕິການຂາຍຊາດຕ້ອງອອກໄປ !
- ➢ ພວກສໍ້ລາດບັງຫຼວງຈົ່ງຈິບຫາຍ !
- ➢ ສັນຕິພາບ ແລະ ຄວາມປອງດອງຊາດ ຈົ່ງໝັ້ນຍືນ !
- ➢ ອຳນາດການປົກຄອງໃໝ່ ຂອງປະຊາຊົນ ຈົ່ງໝັ້ນຍືນ !

ຂະບວນລຸກຮືຂຶ້ນຂອງມະຫາຊົນ ທີ່ໂກດແຄ້ນ ຕໍ່ຈັກກະພັດ ອາເມຣິກາ ແລະ ພວກປະຕິການ ຂາຍຊາດ ໃນເວລານັ້ນ ແມ່ນສຸດທີ່ຟົດເດືອດ ຄວາມກະຕືລືລົ້ນ ແມ່ນມະຫຶມາ ອາດຈະເວົ້າໄດ້ວ່າ: ຈະຍົກໜ່ວຍພູເປັນໜ່ວຍ ຫຼື ວ່າ ຂຸດດິນຖົມທະເລກໍ່ຄືຈະໄດ້ ເພາະມັນແມ່ນຄວາມມຸ່ງມາດ ປາຖະໜາຂອງເຂົາເຈົ້າຢ່າງແທ້ຈິງ.



ຮູບຂະບວນມວນຊົນຊາວວຽງຈັນອອກມາຊຸມນຸມທີ່ເດີ່ນພະທາດຫຼວງ, ວັນທີ 23/8/1975

## 2. ປະຊາກອນ:

ຍ້ອນສົງຄາມປີນຂັ້ນໄດ ຂອງຈັກພັດອາເມຣິກາ ການເໜັງຕີງຂອງປະຊາກອນໃນກຳແພງ ນະຄອນວຽງຈັນ ຈຶ່ງໄດ້ມີການເພີ່ມຂຶ້ນຢ່າງວ່ອງໄວ ເລີ່ມແຕ່ ປີ 1966 ມາ ດັ່ງຕົວເລກຢູ່ລຸ່ມນີ້ [7]

- ປີ 1960 ມີປະມານ 73,000 ຄົນ ໃນ 4 ຕົວເມືອງ
- ປີ 1966 ມີປະມານ 132,000 ຄົນ ໃນ 4 ຕົວເມືອງ
- ປີ 1970 ມີປະມານ 155,000 ຄົນ ໃນ 4 ຕົວເມືອງ
- ປີ 1973 ມີປະມານ 178,000 ຄົນ ໃນ 4 ຕົວເມືອງ
- ປີ 1975 ມີປະມານ 216,000 ຄົນ ໃນ 4 ຕົວເມືອງ

ໃນລະຫວ່າງປີ 1962-1966 ປະຊາກອນໄດ້ເພີ່ມຂຶ້ນເກືອບຄູນເທົ່າ ອັນເນື່ອງຈາກວ່າ: ເມື່ອມີ ລັດຖະບານປະສົມຄັ້ງທີ 2 ແລ້ວຝ່າຍກຳລັງເປັນກາງ ນັບທັງປະຊາຊົນແຂວງຊຽງຂວາງ ກໍໄດ້ເຂົ້າມາວຽງຈັນໃນປີ 1962-1963, ອີກປະການໜຶ່ງ ເມື່ອມີການຊ່ວຍເຫຼືອຫຼາຍຈາກ ອາເມລິກາແລ້ວ, ຊາວຄ້າຂາຍ ນັບທັງຄົນລາວ ແລະ ຄົນຕ່າງປະເທດ ກໍ່ເຂົ້າມາເຮັດທຸລະກິດ ຢູ່ວຽງ ຈັນນັບມື້ນັບຫຼາຍຂຶ້ນ.

[7] ຕົວເລກສະຖິຕິນີ້ ແມ່ນອີງໃສ່ຂໍ້ມູນຂອງ ດຣ.ບຸນເຫຼື້ອມ ສີສຸລາດ ແລະ Lafont 1973 ຊຶ່ງໄດ້ເກັບມາແຕ່ປີ 1947,

☐ ແຕ່ປີ 1964 ເຖິງ 1975 , ປະຊາກອນກໍ່ເພີ່ມຂຶ້ນທຸກໆປີໆລະ 10,000 ເຖິງ 15,000 ຄົນ ອັນເນື່ອງມາຈາກ:

- ຈັກກະພັດອາເມລິກາໄດ້ຖິ້ມລະເບີດໜັກໃສ່ທີ່ວເຂດປົດປ່ອຍຂອງແນວລາວຮັກຊາດ ແຕ່ປີ 1964 ມາ ອັນໄດ້ເຮັດໃຫ້ປະຊາຊົນໜີຮ້ອນມາເພິ່ງເຢັນ.
- ກອງທັບຂອງຝ່າຍຣາຊະອານາຈັກລາວ ໄດ້ເປີດບັ້ນລົບ : ສາມສອນ, ສອນໄຊ, ກູ້ກຽດ, ທະນົງກຽດ ໃນຊຸມປີ 1967-73, ເພື່ອກວາດຕ້ອນເອົາປະຊາຊົນ ເຂົ້າມາຢູ່ຕາມຊານເມືອງຂອງນະຄອນຫຼວງວຽງຈັນ ເຊັ່ນ :
    - ປະຊາຊົນແຂວງຊຽງຂວາງ ມາຢູ່ບ້ານ ນາໄຮ່ດຽວ, ພະໄຊ, ດົງປ່າລານ, ໜອງດ້ວງ, ໂຮງສີນ້ອຍ, ບຶງຂະຫຍອງ, ສາລາແດງ, ທົ່ງສ້າງນາງ ປະມານ 50,000 ຄົນ.
    - ປະຊາຊົນແຂວງຫົວພັນ ມາຢູ່ບ້ານສະພານທອງ, ໜອງບົວທອງ, ໂພນຕ້ອງ, ທົ່ງຕູມ ປະມານ 20,000 ຄົນ.

ດັ່ງນັ້ນ ການປະຕິບັດຕາມຜັງເມືອງຂອງ BCEOM ວາງອອກ ຈຶ່ງບໍ່ໄດ້ໄປຕາມຄາດໝາຍ, ກຸ່ມບ້ານອິດສະຫຼະ ທີ່ແນໃສ່ໃຫ້ມີຄວາມໜາແໜ້ນທີ່ໄດ້ກຳນົດໄວ້ໃນແຜນນັ້ນ ຈຶ່ງປະຕິບັດບໍ່ໄດ້. ສ່ວນປະຊາກອນທີ່ທຳງານໃນຂະແໜງການຕ່າງໆໃນນະຄອນຫຼວງວຽງຈັນ (ໃນ 4 ຕົວເມືອງ) ລັດໄດ້ສຳຫຼວດຈຳນວນແຮງງານຕາມຂະແໜງການ ດັ່ງຕາຕະລາງລຸ່ມນີ້ :[8]

| | ຂະແໜງການ | ຈຳນວນ | ຄິດເປັນ % | ລ/ດ | ຂະແໜງການ | ຈຳນວນ | ຄິດເປັນ % |
|---|---|---|---|---|---|---|---|
| 1 | ກະສິກຳ | 713 | 1.5 | 8 | ການປົກຄອງ | 17,898 | 36 |
| 2 | ອຸດສະຫະກຳ | 2,657 | 5.4 | 9 | ພະສົງ | 1,298 | 2.6 |
| 3 | ໄຟຟ້າ-ນ້ຳ | 125 | 0.2 | 10 | ແມ່ບ້ານ | 5,684 | 11.5 |
| 4 | ການຄ້າ-ທ່ອງທ່ຽວ | 7,260 | 14.7 | 11 | ຈັດຕັ້ງສາກົນ | 4,267 | 8.6 |
| 5 | ໂຍທາ-ເຄຫາ | 2,666 | 5.4 | 12 | ກຳມະກອນ | 4,936 | 9.9 |
| 6 | ສາງ ແລະ ຂົນສົ່ງ | 1,716 | 3.5 | | | | |
| 7 | ການເງິນ | 368 | 0.7 | | | | |
| | | | | | **ລວມທັງໝົດ** | **49,618** | **100** |

[8] ຂໍ້ມູນມາຈາກ Ch.Taillard ປີ 1973 ໃນບົດວິທະຍານິພົນຂອງ ດຣ.ບຸນເຫຼື້ອມ ສີສຸລາດ . ໜ້າ 116

ສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງປ້ອງກັນປະເທດ ແຫ່ງຣາຊະອານາຈັກລາວ (1955-70), ຊຶ່ງແມ່ນຫ້ອງວ່າການຂອງເຈົ້າແຂວງຝຣັ່ງ ໃນເມື່ອກ່ອນ. ໄດ້ດັດແປງສີ ໜ້າໃໝ່ (Façade) ໃນປີ 1979 (ດຽວນີ້ ແມ່ນຫໍພິພິດຕະພັນປະຫວັດ ສາດແຫ່ງຊາດ)





ກະຊວງການຕ່າງປະເທດ ແຫ່ງຣາຊະອານາຈັກລາວ, ແຕ່ກ່ອນແມ່ນຫ້ອງວ່າການຂອງຜູ້ສຳເລັດຣາຊະການຝຣັ່ງ, ໄດ້ດັດແປງສີ ໜ້າໃໝ່(Façade) ໃນປີ 1973-74 ( ແມ່ນກະຊວງຖະແຫຼງຂ່າວ ແລະວັດທະນາທຳ ໃນປະຈຸບັນ)

ກະຊວງສຶກສາທິການ, ສິລະປະກຳ ແລະ ກິລາແຫ່ງ ຣາຊະອານາຈັກລາວ, ກໍ່ສ້າງປີ 1967-68. ໄດ້ມີໂກບກັນແດດ ແລະ ຝົນຫຼາຍ(ກະຊວງສຶກສາທິການ ໃນປະຈຸບັນ)



**ເຈົ້າຄອງນະຄອນຫຼວງວຽງຈັນ ໃນໄລຍະນີ້ມີຄື** :

-ທ່ານ ຄຳນ້ອຍ ຈັນທະປັນຍາ

-ທ່ານ ທົງສະຫວັດ ວົງສາວັນທອງ

-ທ່ານ ບຸນຄົງ ປະດິຈິດ

## 3.<u>ສະພາບເສດຖະກິດ:</u>[9]

ດ້ານເສດຖະກິດຂອງຣາຊະອານາຈັກລາວ ແມ່ນນັບມື້ນັບຊຸດໂຊມ, ການຄ້າຕ່າງປະເທດນັບປີນັບຂາດດຸນ ເຊັ່ນ : ປີ 1962 ສິນຄ້າຂາເຂົ້າແມ່ນ 1,929 ລ້ານກີບ, ຂາອອກພຽງ 62 ລ້ານ ກີບ, ຂາດດຸນ 1,867 ລ້ານກີບ.

+ ເງິນກີບຫຼຸດຄຸນຄ່າລົງ ແລ້ວ ກາຍເປັນເງິນເຟີ້ໃນທີ່ສຸດ ຊຶ່ງສະແດງອອກໃນອັດຕາແລກປ່ຽນ ເຊັ່ນ : - ປີ 1954 : 1$ = 25 ກີບ

- ປີ 1956 : 1$ = 35 ກີບ
- ປີ 1958 : 1$ = 80 ກີບ
- ປີ 1963 : 1$ = 240 ກີບ
- ປີ 1973 : 1$ = 600 ກີບ
- ປີ 1975 : 1$ = 1,000 ກີບ

(ນີ້ແມ່ນອັດຕາແລກປ່ຽນທາງການສ່ວນທາງນອກແມ່ນຄູນເທົ່າ).

ສະນັ້ນ ສະຫະລັດອາເມລິກາ ຈຶ່ງຕ້ອງເຂົ້າມາຄ້ຳປະກັນເງິນກີບຊ່ວຍປີໜຶ່ງໆປະມານ15-18 ລ້ານ$. ນັບແຕ່ປີ 1970 ມາ ເງິນດອນລາກໍ່ຕົກຄຸນຄ່າເຊັ່ນດຽວກັນ ມີໄພຫວ່າງງານຢູ່ ສະຫະລັດ ຢ່າງຫຼວງຫຼາຍທີ່ບໍ່ເຄີຍມີມາ ຍ້ອນເຮັດສົງຄາມ.

+ ຄ່າຄອງຊີບກໍ່ຖີບຕົວຂຶ້ນ , ຖ້າເອົາປີ 1964 ເປັນຫຼັກ (100)

- ປີ 1964 = 100
- ປີ 1967 = 138
- ປີ 1969 = 150
- ປີ 1971 = 157

---

[9] ຂໍ້ມູນເສດຖະກິດນີ້ແມ່ນ ມາຈາກບົດລາຍງານສະຫຼຸບ 7 ປີ ຂອງກະຊວງເສດຖະກິດ ແຫ່ງຣາຊະອານາຈັກລາວ ພິມເປັນ ພາສາຝຼັ່ງໃນປີ 1973.

ດ້ານງົບປະມານແຫ່ງລັດ ແມ່ນຂາດດຸນທຸກປີດັ່ງຕາຕະລາງລຸ່ມນີ້ :

ຫົວໜ່ວຍ : ຕື້ກີບ

| ປີ | ລາຍຮັບ | ລາຍຈ່າຍ | ຂາດດຸນ |
|---|---|---|---|
| 1968-1969 | 7.9 | 16 | -8.1 |
| 1969-1970 | 8.5 | 17.5 | -9 |
| 1970-1971 | 10 | 19.5 | -9.5 |
| 1971-1972 | 11 | 19.4 | -8.4 |
| 1972-1973 | 7 | 22 | -15 |

ໃນນີ້ ລາຍຈ່າຍດ້ານການທະຫານແຕ່ລະປີ ກວມ 45-50% ຂອງງົບປະມານແຫ່ງຊາດ, ສະນັ້ນ ສະຫະລັດຕ້ອງເຂົ້າມາຊ່ວຍແຕ່ລະປີ ບໍ່ຫຼຸດ 50 ລ້ານໂດລາ ທາງການ ( ສ່ວນການ ຊ່ວຍເຫຼືອດ້ານທະຫານໂດຍກົງ ຍິ່ງຫຼາຍກ່ວານີ້ຫຼາຍເທົ່າ). ສະນັ້ນ ໃນປະເທດໃດໜຶ່ງ ຖ້າຫາກເກີດມີສົງຄາມ, ການຄ້າ ແລະ ງົບປະມານແຫ່ງຊາດຈະຂາດດຸນ, ຄ່າຄອງຊີບຈະແພງ, ເງິນຕາຈະເຟີ້ ແລະໄພສັງຄົມຕ່າງໆຈະເກີດຂຶ້ນ ມັນແມ່ນກົດເກນຂອງສົງຄາມ ທີ່ບໍ່ມີໃຜປະຕິເສດໄດ້.

**ຮູບກຣາຟິກ**(ລາຍຮັບແລະລາຍຈ່າຍຂອງລັດ)




## 4. ການສຶກສາ

ໃນສະໄໝອານານິຄົມ ບັ້ນປາຍ (1953), ຢູ່ນະຄອນວຽງຈັນ ໂຮງຮຽນປະຖົມມີບໍ່ເຖິງ 10 ຫຼັງ, ມັດທະຍົມສົມບູນມີ 1 ຫຼັງ, ໂຮງຮຽນວິຊາຊີບ ຊັ້ນຕົ້ນ 1 ຫຼັງ, ໂຮງຮຽນສ້າງຄູປະຖົມ 1 ຫຼັງ ເທົ່ານັ້ນ. ຫຼັງຈາກສ້າງຕັ້ງຣາຊະອານາຈັກລາວ, ລັດຖະບານໄດ້ຖືເອົາການສຶກສາເປັນບຸລິມະສິດ ກະຊວງສຶກສາໄດ້ປະຕິຮູບ ໂດຍເອົາຫຼັກສູດການສິດສອນເປັນພາສາລາວ ບວກກັບມູນເຊື້ອຢາກຮ່ຳຮຽນ ກ້າວໜ້າຂອງປະຊາຊົນລາວ, ການສຶກສາຈຶ່ງໄດ້ຂະຫຍາຍຕົວຫຼາຍເທົ່າ ທຽບໃສ່ເມື່ອກ່ອນຫຼາຍ.

+ **ຂັ້ນປະຖົມສຶກສາ**: ປີ 1975 ໃນນະຄອນວຽງຈັນ (4 ຕົວເມືອງ) ໂຮງຮຽນປະຖົມ (ມູນລະປະຖົມ ແລະ ສົມບູນ) ມີປະມານ 50 ຫຼັງ, ນັກຮຽນມີປະມານ 17,000 ຄົນ(ຍິງມີ 7000 ຄົນ)ແລະ ມີໂຮງຮຽນປະຖົມປາລີ ຢູ່ວັດຈັນອີກ. ຖ້າເບິ່ງທົ່ວປະເທດແລ້ວ ນັກຮຽນໄດ້ເພີ່ມຂຶ້ນ 5,6 ເທື່ອ ໃນ ປີ 1973 ເມື່ອທຽບໃສ່ປີ 1953 [10]

+ **ຂັ້ນມັດທະຍົມສຶກສາ**: ໄດ້ມີການສ້າງຕັ້ງ ແລະ ຍົກລະດັບໂຮງຮຽນຕ່າງໆໃນທົ່ວປະເທດ, ຢູ່ນະຄອນວຽງຈັນ ໄດ້ມີໂຮງຮຽນມັດທະຍົມສົມບູນ 3 ແຫ່ງ (ໃນນີ້ ມີໂຮງຮຽນມັດທະຍົມສົມບູນ ເອກະຊົນ 1 ຫຼັງ 4 ຊັ້ນ ເກີດຂຶ້ນທີ່ຫຼັກ 2 ຊຶ່ງແມ່ນໂຮງແຮມ ໂນໂວແທວ ດຽວນີ້ ໄຂຊົກຮຽນປີ(1964-65) ແລະ ມັດທະຍົມຕົ້ນ 4 ແຫ່ງ ຂອງເອກະຊົນ, ທັງໝົດ ມີຄູ 120 ຄົນ, ນັກຮຽນ 3,500 ຄົນໃນນັ້ນມີຍິງປະມານ 900 ຄົນ. ຖ້າເບິ່ງທົ່ວປະເທດແລ້ວໃນປີ 1971 ມີນັກຮຽນທັງໝົດ 7050ຄົນ (ຍິງ1789 ຄົນ) ທຽບໃສ່ປີ 1954 ແມ່ນເພີ່ມຂຶ້ນ 6.7ເທື່ອ. [11] ນອກນີ້ຍັງມີໂຮງຮຽນປາລີ ອີກທີ່ວັດອົງຕື້ ຊຶ່ງແມ່ນ ສະເດັດເຈົ້າເພັດຊະລາດ ສ້າງມາແຕ່ປີ1921.

+**ອາຊີວະສຶກສາ**:

-*ຊັ້ນພື້ນຖານ* **ມີ**: ໂຮງຮຽນອົບຮົມຄູມູນລະປະຖົມ, ໂຮງຮຽນພະຍາບານ, ໂຮງຮຽນກະສິກຳ.

-*ຊັ້ນຕົ້ນ* ມີ: ໂຮງຮຽນການຊ່າງປາກປະສັກ (ທີ່ຍ້າຍມາຈາກໂຮງຮຽນວິຊາຊີບຝຣັ່ງ ແຕ່ປີ1937), ໂຮງຮຽນການຊ່າງ ລາວ-ເຢຍລະມັນ (1969), ໂຮງຮຽນສ້າງຄູປະຖົມ (1949), ໂຮງຮຽນສິລະປະແລະ ຫັດຖະກຳ(1959), ໂຮງຮຽນຊ່ວຍຕິດຕັ້ງໄຟຟ້າ.

-*ຊັ້ນກາງ* ມີ: ໂຮງຮຽນສ້າງຄູມັດທະຍົມຕົ້ນ, ໂຮງຮຽນກົດໝາຍ ແລະ ການປົກຄອງ (1957), ໂຮງຮຽນຜູ້ຊ່ວຍແພດ (1958), ໂຮງຮຽນພະຍາບານ (1963), ໂຮງຮຽນກະສິກຳດົງໂດກ (1967), ໂຮງຮຽນໂຍທາທິການ (1971), ໂຮງຮຽນໄປສະນີ-ໂທລະຄົມມະນາຄົມ ແລະ ໂຮງຮຽນ ເອເລັກໂຕຼນິກ ທີ່ໂສກປ່າຫຼວງ.

+ **ການສຶກສາຊັ້ນສູງ** ໄດ້ມີການສ້າງຕັ້ງສະຖາບັນ ແລະ ວິທະຍາໄລຕ່າງໆ ເຊັ່ນ:

-ສະຖາບັນກົດໝາຍ ແລະ ການປົກຄອງ (1957)

-ມະຫາວິທະຍາໄລແພດສາດ (1958) ຊຶ່ງແມ່ນ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ດຽວນີ້

-ວິທະຍາໄລອົບຮົມ ຄູມັດທະຍົມຕົ້ນ ທີ່ດົງໂດກ (1963)

-ສະຖາບັນການສຶກສາພຸດທະສາສະໜາ (1964) ຍົກລະດັບຈາກໂຮງຮຽນປາລີສົງ

-ວິທະຍາໄລແພດສາດ (1969) ຢູ່ໃນໂຮງໝໍມະໂຫສົດ

-ວິທະຍາໄລອົບຮົມ ຄູມັດທະຍົມປາຍ (1971) ຢູ່ດົງໂດກ

-ວິທະຍາໄລໂຍທາທິການຢູ່ໂສກປ່າຫຼວງ (ຍົກລະດັບເປັນເຕັກນິກຊັ້ນສູງປີ 1973).

---

[10] ອີງຕາມບົດວິທະຍານິພົນຂອງ ທ.ຄຳເພົາ ພອນແກ້ວ ໜ້າ146 ຕາຕະລາງ ເບ Thèse de doctorat de Mr Khamphao Phonekeo 1975 page 146 tableau B

[11] ຕາມບົດວິທະຍານິພົນຂອງ ທ.ຄຳຕັນ ຈັນທະລາ ປີ 1972 Thèse de doctorat 3e cycle 1972 de Mr Khamtanh Chanthala page 269 Annxe II 1972

# ສະຖາບັນການສຶກສາ



ວິທະຍາໄລສ້າງຄູມັດທະຍົມດົງໂດກ, ສ້າງປີ 1963



ໂຮງຮຽນກົດໝາຍແລະການປົກຄອງ, ສ້າງປີ 1957



ມະຫາວິທະຍາໄລແພດສາດ ສ້າງປີ 1958



ສະຖາບັນການສຶກສາພຸດທະສາສະໜາ, ສ້າງປີ 1964



ສູນຄົ້ນຄວ້າການສຶກສາແຫ່ງຊາດ, ສ້າງປີ 1974

# ຂັ້ນມັດທະຍົມສຶກສາ



ມັດທະຍົມສົມບູນວຽງຈັນຫຼັງໃໝ່, ສ້າງປີ 1957



ມັດທະຍົມສົມບູນ ເຈົ້າຟ້າງຸ່ມ, ສ້າງປີ 1967



ໂຮງແຮມໂນໂວແທວ, ເມື່ອກ່ອນແມ່ນ
ໂຮງຮຽນມັດທະຍົມສົມບູນ ເອກະຊົນ, ສ້າງປີ 1963



ເຮືອນພັກນັກຮຽນ ໂຮງຮຽນລາວ-ເຢຍລະມັນ, ສ້າງປີ 1969



ໂຮງຮຽນໂຍທາຊັ້ນສູງ, ສ້າງປີ 1971



ໂຮງຮຽນການຊ່າງລາວ-ເຢຍລະມັນ (1969)

ເຖິງແມ່ນວ່າ ນະຄອນວຽງຈັນ ຈະຕົກຢູ່ໃນສະພາບການສັບສົນທາງການເມືອງ, ວຸ້ນວາຍທາງການທະຫານ, ມີໄພຄຸກຄາມທາງດ້ານເສດຖະກິດ ແລະ ສັງຄົມກໍ່ຕາມ ແຕ່ການສຶກສາ ຊຶ່ງແມ່ນຄົນລາວເຮັດໂດຍກົງ ແລະ ໄດ້ຮັບການຮ່ວມມືຈາກມວນຊົນ ກໍ່ໄດ້ຂະຫຍາຍຕົວໃນຈັ່ງຫວະທີ່ໄວກວ່າສະໄໝຝຣັ່ງປົກຄອງຢ່າງຈະແຈ້ງ.

ຍຸດທະສາດການສຶກສາ ເບື້ອງຕົ້ນແມ່ນສຸມໃສ່ ປະຖົມສຶກສາແລະ ອາຊີວະສຶກສາຂັ້ນຕົ້ນກ່ອນ ຈາກນັ້ນມາ ແມ່ນຂະຫຍາຍມັດທະຍົມສຶກສາ ແລະ ອາຊີວະສຶກສາຂັ້ນກາງ ສຸດທ້າຍຈຶ່ງກໍ່ສ້າງການສຶກສາຊັ້ນສູງ. ເຖິງວ່າໄດ້ມີການຂະຫຍາຍຕົວໄດ້ດີ ແຕ່ຍັງເຫັນມີຂໍ້ຂາດຕົກບົກຜ່ອງຢູ່ຫຼາຍເຊັ່ນ: ປະຖົມສຶກສາບໍ່ໄດ້ຂະຫຍາຍໄປສູ່ຊົນນະບົດ (ເດັກໃນຊົນນະບົດໄດ້ເຂົ້າຮຽນພຽງ 7% ຂອງ ພົນລະເຮືອນ ສ່ວນຢູ່ໃນເມືອງແມ່ນ 16.3%), ການສຶກສາມີລັກສະນະຊົນຊັ້ນຈະແຈ້ງ ມີແຕ່ລູກຫຼານເຈົ້ານາຍ ແລະ ຜູ້ມີຖານະແດ່ຈຶ່ງມີເງື່ອນໄຂໄດ້ຮຽນ ແລະໄດ້ທຶນໄປຮຽນຕ່າງປະເທດ ສ່ວນລູກຜູ້ທຸກຍາກແມ່ນບໍ່ມີທາງຈະໄດ້ເຂົ້າຮຽນ.

## 5 .ການພັດທະນາຕົວເມືອງວຽງຈັນ (1961-1975)

ຈາກບົດຮຽນອັນເຈັບແສບຂອງ ນ.ພ ພູມມີ ໜໍ່ສະຫວັນ ທີ່ໄດ້ຖືກຮ້ອຍເອກກອງແລ ໂຄນລົ້ມ, ເມື່ອກັບມາໄດ້ອຳນາດຄືນແລ້ວ ກໍ່ອີງໃສ່ອາເມລິກາຫຼາຍຂຶ້ນ ເພື່ອກອບກູ້ເອົາອິທິພົນ ທີ່ເສຍໄປ. ລັດຖະບານນີ້ໄດ້ຊຸ້ມຊ່ຽວປັບປຸງຕົວເມືອງ, ພິເສດ ແມ່ນຢາກເຮັດໃຫ້ການຄົມມະນາຄົມຕິດຈອດໃສ່ໄທ ຊຶ່ງມີຖານທັບອາເມລິກາຕັ້ງຢູ່ຫຼາຍແຫ່ງ, ໂດຍສະເພາະ ແມ່ນອຸດອນ ຊ່ຽວຊານອາເມລິກາຈຶ່ງໃຫ້ຂະຫຍາຍເດີ່ນບິນວັດໄຕອອກອີກ, ແລ້ວເປີດກ້ວາງຖະໜົນຫຼວງພະບາງ ເຂດຖາທິລາດ, ສ້າງໃໝ່ຕອນທາງ ແຕ່ທາດຂາວທາທ່ານາແລ້ງ ໃຫ້ຈອດໃສ່ ຖະໜົນ ມິດຕະພາບ ໜອງຄາຍ-ອຸດອນ ຊຶ່ງມີມາດຕະຖານສາກົນຢູ່ແລ້ວ, ອີກດ້ານໜຶ່ງ ກໍ່ເປີດກ້ວາງ ຖະໜົນລ້ານຊ້າງ-ໂພນເຄັງ ໃຫ້ສະດວກແກ່ການເຄື່ອນ ໄຫວທາງການທະຫານ ເມື່ອຈຳເປັນ.

ລັດຖະບານຍັງໄດ້ຮ້ອງຂໍໃຫ້ບໍລິສັດຝຣັ່ງ BCEOM [12] )ມາສຳຫຼວດນ້ຳປະປາເກົ້າລ້ຽວ ແລະ ວາງຜັງເມືອງວຽງຈັນ ໃນຂັ້ນຕົ້ນ ໃນປີ 1960, ຜັງເມືອງໄດ້ສ້າງສຳເລັດ ແລະ ສະເໜີຜ່ານ ລັດຖະບານປະສົມໃນປີ 1962.

***ທິດນຳຂອງຜັງເມືອງນັ້ນໄດ້ລະບຸວ່າ:***

- ໃຈກາງຂອງເທສະບານຍັງແມ່ນໃຈກາງຂອງເມືອງເກົ່າ ໂດຍເອົາຣາຊະວັງເປັນຈຸດຕັ້ງ ແລ້ວໃຫ້ສ້າງຫຼາຍຈຸດອ້ອມ ຕົວເມືອງອີກ (Péricentres);
- ຕ້ອງຂະຫຍາຍເສັ້ນທາງສາຍຫຼັກຕ່າງໆອອກ ເພື່ອສະດວກແກ່ການຂົນສົ່ງ;
- ກຳນົດຄຸ້ມທີ່ພັກອາໄສ , ຄຸ້ມປົກຄອງ, ຄຸ້ມການຄ້າ, ເຂດອຸດສະຫະກຳ, ເຂດຊຸ່ມ, ເຂດຂຽວ ແລະ ເຂດກິລາ, ມີການກຳນົດຄວາມສູງຂອງອາຄານໃນແຕ່ລະຖະໜົນ;
- ສ້າງກຸ່ມບ້ານອິດສະຫຼະ ອ້ອມຕົວເມືອງ ໂດຍກຳນົດຄວາມໜາແໜ້ນໄວ້;
- ຈັດວາງລະບົບໄຟຟ້າ, ນ້ຳປະປາ ແລະ ລະບົບນ້ຳເສຍ.

---

[12] Bureau de Construction et Equipement d'Outre Mer ຊຶ່ງແມ່ນ ບໍລິສັດ ທີ່ ປຶກສາ ພົ້ນທະເລ ຂອງ ຝຣັ່ງ.

## ວິວັດທະນາການ ດ້ານຜັງເມືອງຂອງ ນະຄອນຫຼວງວຽງຈັນ ລະຫວ່າງ ປີ 1953-66

### Evolution urbaine entre 1953 et 1966




Source : Ch. Labarthe, mémoire de maîtrise, université de Bordeaux, 1969

ແຜນຜັງນັ້ນບໍ່ໄດ້ກຳນົດປີ ແຕ່ຄິດໄລ່ປະຊາກອນໃຫ້ຢູ່ໃນຈຳນວນ 130,000-160,000 ຄົນ ໃນຊຸມປີຈະມາເຖິງ ( ອາດຈະແມ່ນ10 ປີ ) ໃນພາກຕົວຈິງຜັງເມືອງໄດ້ພັດທະນາໄປຄືແນວໃດແດ່ ?

**5.1. ສິ່ງກໍ່ສ້າງຕ່າງໆ** : ໃນໄລຍະນີ້ໄດ້ມີການກໍ່ສ້າງຫຼາຍສິ່ງຫຼາຍຢ່າງຂຶ້ນ ດັ່ງລຸ່ມນີ້ :

+ ປີ 1961 ໄດ້ເລີ່ມເປີດກ້ວາງຖະໜົນຫຼວງພະບາງ, ຖະໜົນລ້ານຊ້າງ ແລະ ຖະໜົນເຊດຖາທິລາດ ແລ້ວປູຢາງຊັ້ນດຽວໃສ່.

- ໄດ້ສ້າງນ້ຳປະປາເກົ້າລ້ຽວ, ໂຄງການສຳເລັດ ແລະ ມອບຮັບໃນ ປີ1964 ດ້ວຍທຶນກູ້ຢືມນຳ ລັດຖະບານຍີ່ປຸ່ນມູນຄ່າ 3 ລ້ານໂດລາ (ສຳລັບປະຊາກອນ 100,000 ຄົນ).
- ສ້າງອະນຸສາວະລີນັກຮົບເກົ່າ(ປະຕູໄຊດຽວນີ້) ປີ 1967 ຈຶ່ງສຳເລັດ.(ຊຶ່ງແມ່ນ ກົມຊ່າງແສງຂອງ ກອງທັບ ເປັນຜູ້ ອອກແບບ ແລະ ກໍ່ສ້າງ, ຣ.ອ ຊຳນານ ປູີຊາຍັນ ເປັນຜູ້ປະດັບປະດາ).

+ ປີ 1962 ໄດ້ສ້າງຖະໜົນທ່າເດື່ອເຖິງທ່ານາແລ້ງ ຍາວ20 ກິໂລແມັດ (ອາເມລິກາ ຊ່ວຍເຫຼືອ ເປັນທາງເບຕົງອາຊະຟານ ສາຍທຳອິດຂອງລາວ).

- ໃນປີດຽວກັນນີ້ໄດ້ມ້າງສວນປາວີຖິ້ມ ແລ້ວປຸກໂຮງແຮມລ້ານຊ້າງ 4 ຊັ້ນໃສ່.
-ສ້າງອາຄານ 2 ຊັ້ນຂອງ ກະຊວງເສດຖະກິດແຫ່ງຊາດຂຶ້ນ ( ຊຶ່ງແມ່ນອາຄານ ຫຼັງເກົ່າ ຂອງກະຊວງແຜນການ ແລະ ການລົງທຶນ ດຽວນີ້).
- ສ້າງອາຄານຂອງກະຊວງໂຍທາທິການ (ຫຼັງ 2 ຊັ້ນ ເປັນຫ້ອງການຂອງກະຊວງ).
- ສ້າງຕຶກຂອງກົມປະຊາສົງເຄາະ (ຊຶ່ງແມ່ນກົມບໍ່ແຮ່ ດຽວນີ້).

+ ປີ 1963 :

- ສ້າງຕຶກທະນາຄານແຫ່ງລັດ 3 ຊັ້ນ.
- ສ້າງຕຶກມະຫາວິທະຍາໄລແພດສາດ 3 ຊັ້ນ (ດ້ວຍການຊ່ວຍເຫຼືອຂອງຝຼັ່ງ).
- ສ້າງຕຶກກົມການບິນ ແລະ ບໍລິສັດການບິນພົນລະເຮືອນ.

+ ປີ 1964 : ໄດ້ສ້າງທາງຂຶ້ນລົງຂອງຍົນທີ່ເດີ່ນບິນວັດໄຕ ເປັນເບຕົງຊີມັງ ຍາວ 2,000 ແມັດ, ສ້າງລານຈອດຍົນ ເຕ28, ຕຶກ ແລະ ສາງອາວຸດຕ່າງໆ ໃຫ້ແກ່ກອງທັບອາກາດ.

ຈາກນັ້ນຍີ່ປຸ່ນໄດ້ຕໍ່ທາງຂຶ້ນລົງຂອງຍົນອີກ 200 ແມັດ, ລານຈອດ ຍົນພົນລະເຮືອນ, ສາງນ້ຳມັນ, ລັດຖະບານຝຣັ່ງໄດ້ຊ່ວຍສ້າງຫໍຄອຍ ແລະ ຕຶກໂດຍສານ.

- ໄດ້ປຸກຕຶກກະຊວງໄປສະນີ ແລະ ໂທລະຄົມມະນາຄົມ 3 ຊັ້ນ.
-ໄດ້ປຸກຕຶກກະຊວງ ໂຍທາທິການ ( ຕຶກ 2 ຊັ້ນ ລຽບທາງ)

ພາຍຫຼັງທີ່ ນ.ພ ພູມມີ ໜໍ່ສະຫວັນ ໄດ້ປະລາໄຊໃນການເຮັດລັດຖະປະຫານ ໃນວັນທີ 1/2/1965 ແລ້ວກໍ່ໜີໄປລີ້ໄພຢູ່ປະເທດໄທ, ສ່ວນສະເດັດເຈົ້າສຸວັນນະພູມມາ ຊຶ່ງເປັນນາຍົກລັດຖະມົນຕີ ຢູ່ໃນເວລານັ້ນ ກໍໄດ້ປັບປຸງລັດຖະບານໃໝ່ ໂດຍເອົາກຸ່ມຊະນະນິກອນ ແລະ ກຸ່ມຂວາຈັດເຊດິນ(CDIN) ເຂົ້າມາຮ່ວມລັດຖະບານ ຕາມການບັນ ຊາຂອງ ສະຫະລັດ ອາເມລິກາ.



**ໃນຊຸມປີ 1965-1975 ໄດ້ມີຫຍັງກໍ່ສ້າງຂຶ້ນແດ່** ?:

+ ປີ 1966: ສ້າງຕຶກກະຊວງ ມະຫາດໄທ 5 ຊັ້ນ ຊຶ່ງແມ່ນກະຊວງປ້ອງກັນຄວາມສະຫງົບ ດຽວນີ້ (ສຳເລັດ ໃນປີ 1970)
+ ປີ 1967: ອະນຸສາວະລີນັກຮົບເກົ່າ (ປະຕູໄຊ) ໄດ້ສຳເລັດແລ້ວ.
  - ໄດ້ປຸກຕຶກກະຊວງການເງິນ 4 ຊັ້ນ (ຊຶ່ງແມ່ນ ກະຊວງການຕ່າງປະເທດ ດຽວນີ້)
  - ໄດ້ສ້າງອາຄານທີ່ພັກ ຂອງ ຂ້າຣາຊະການ 4 ຫຼັງ ທີ່ບ້ານ ຊຽງແວ່ (ສຳເລັດ ປີ 1970).
  - ໄດ້ປຸກຕຶກ ກະຊວງ ສຶກສາທິການ 4 ຊັ້ນ (ສຳເລັດ 1968).
+ ປີ 1968: ໄດ້ເລີ່ມສ້າງເຂື່ອນນ້ຳງື່ມ ຊ່ວງທີ 1 ແລະ ນຳໃຊ້ໃນປີ 1971.
+ ປີ 1970 :
  - ໄດ້ສ້າງຕຶກກະຊວງປ້ອງກັນປະເທດ 3 ຊັ້ນ, ແຕ່ລະຊັ້ນ ມີປະມານ 40 ຫ້ອງ ແລະ ມີຊັ້ນໃຕ້ດິນອີກ (ແບບມາຈາກໄຊ່ງ່ອນ).
  - ໄດ້ປຸກຕຶກກະຊວງກະສິກຳປ່າໄມ້ 2 ຫຼັງ.
  - ໄດ້ປຸກຕຶກ ຄັງເງິນແຫ່ງຊາດ (ຊຶ່ງແມ່ນ ກະຊວງການເງິນດຽວນີ້).
  - ໄດ້ປຸກຕຶກ ກະຊວງອຸດສະຫະກຳ 4ຊັ້ນ (ຊຶ່ງແມ່ນຕຶກຂອງກະຊວງພະລັງງານ ແລະ ບໍ່ແຮ່ ດຽວນີ້).

☐ **ທີ່ຕັ້ງຂອງຄ້າຍທະຫານຕ່າງໆ**:- ໂພນເຄັງໄດ້ກາຍເປັນທີ່ຕັ້ງຂອງກອງບັນຊາການສູງສຸດ ແລະ ເສນາທິການ ຂອງ ກອງທັບແຫ່ງຣາຊະອານາຈັກລາວ.



ຕຶກກະຊວງປ້ອງກັນປະເທດຂອງຣາຊະອານາຈັກລາວ, ກໍ່ສ້າງປີ 1970



ຕຶກກະຊວງມະຫາດໄທ ຂອງຣາຊະອານາຈັກລາວ, ສ້າງປີ 1966



ຕຶກກະຊວງການເງິນ (ກະຊວງການຕ່າງປະເທດໃນປະຈຸບັນ), ສ້າງປີ 1966-67



ຕຶກຄັງເງິນແຫ່ງຣາຊະອານາຈັກລາວ ສ້າງ ປີ 1970-72

## ແຜນທີ່ ທີ່ຕັ້ງຂອງສຳນັກງານທາງຣາຊະການໃນນະຄອນຫຼວງວຽງຈັນ ປີ 1973 ເຖິງ 1975




**ເຄື່ອງໝາຍ:**

- ▪ ທີ່ຕັ້ງສຳນັກງານທາງຣາຊະການ
- ━ ຖະໜົນປູຢາງ
- — ທາງປູດິນແດງ
- ▲ ທີ່ຕັ້ງຂອງບ້ານ
- .... ກຳນົດເຂດລະອຽດ (ເຂດ 1 ແລະ ເຂດ 2) ເພື່ອອະທິບາຍ
- ≈ ຫ້ວຍນ້ຳແລະຄອງນ້ຳ
- ⊙ ທີ່ຕັ້ງຂອງກອງທະຫານ
- w ວັດ

## ແຜນທີ່ ທີ່ຕັ້ງຂອງສຳນັກງານທາງຣາຊະການໃນນະຄອນຫຼວງວຽງຈັນ ປີ 1973 – 75

## (ເຂດ 1: ປະຕູໄຊ)




ຄຳແນະນຳ: (ໃຫ້ອ່ານແຕ່ເທິງລົງລຸ່ມ, ແຕ່ຊ້າຍໄປຫາຂວາ)

| | | |
|---|---|---|
| 1. ຄັງເງິນ | 8. ກະຊວງກະສິກຳ | 15. ຫໍພັກອາຈານມັດທະຍົມສົມບູນວຽງຈັນ |
| 2. ກົມສຳພະວຸດ | 9. ກະຊວງໂຍທາທິການ | 16. ວັດຫວຽດນາມ |
| 3. ກະຊວງການເງິນ | 10. ສະຖານທູດອິດສະຕາລີ | 17. ມັດທະຍົມສົມບູນວຽງຈັນ |
| 4. ໂບດຄະນະວັນເສົາ | 11. ສະຖານທູດອັງກິດ | 18. ກົມພາສີ |
| 5. ກົມແຜນທີ່ | 12. ສະພາລາສະດອນ | 19. ກະຊວງອຸດສາຫະກຳ |
| 6. ສານທະຫານ | 13. ອະນຸສາວະລີນັກຮົບເກົ່າ | 20. ກົມເງິນບຳນານ |
| 7. ສວນເນຣູ | 14. ທຳນຽບລັດຖະບານ | |

## ແຜນທີ່ ທີ່ຕັ້ງຂອງສຳນັກງານທາງຣາຊະການໃນນະຄອນຫຼວງວຽງຈັນ ປີ 1973 – 75 (ເຂດ 2: ຖະໜົນລ້ານຊ້າງໃນເມືອງເກົ່າ)




ຄຳແນະນຳ: ໃຫ້ອ່ານແຕ່ເທິງລົງລຸ່ມ ແຕ່ຊ້າຍໄປຫາຂວາ

| | | |
|---|---|---|
| 21. ສຳນັກງານວັດທະນະທຳຂອງຝຣັ່ງ | 32. ທະນາຄານແຫ່ງຊາດ | 43. ກະຊວງສາທາລະນະສຸກ |
| 22. ກະຊວງມະຫາດໄທ | 33. ບໍລິສັດໄຟຟ້າລາວ | 44. ຫ້ອງການຂ່າວສານ |
| 23. ກົມກິລາແຫ່ງຊາດ | 34. ຫໍພັກນັກສຶກສາແພດສາດ | 45. ກະຊວງໂຍທາທິການ |
| 24. ສະລອຍນ້ຳຂອງກົມກິລາ | 35. ໂບດກາໂຕລິກ | 46. ກົມຕຳຫຼວດນະຄອນບານ |
| 25. ກົມກະສິກຳ ແລະ ປ່າໄມ້ | 36. ກະຊວງສຶກສາທິການ | 47. ວັດຫໍພະແກ້ວ |
| 26. ສະຖານນີວິທະຍຸກະຈາຍສຽງ | 37. ຕຶກ7ຊັ້ນຫຼັງທຳອິດທີ່ນ້ຳພຸ | 48. ຫໍຄຳພວມກໍ່ສ້າງ |
| 27. ສະຖານທູດອາເມລິກາ | 38. ຕຳຫຼວດສັນຕິບານ | 49. ກົມການບິນພົນລະເຮືອນ |
| 28. ກະຊວງໄປສະນີ –ໂທລະຄົມ | 39. ຫ້ອງການໄປສະນີນະຄອນຫຼວງ | 50. ບໍລິສັດການບິນລາວ |
| 29. ສຳນັກງານ ນາຍົກລັດຖະມົນຕີ | 40. ກະຊວງການຕ່າງປະເທດ | 51. ທີ່ປະທັບຂອງເຈົ້າຊີວິດ |
| 30. ຫ້ອງວ່າການເຈົ້າຄອງນະຄອນຫຼວງ | 41. ສູນຄົ້ນຄວ້າການສຶກສາ | 52. ທະນາຄານການຄ້າຕ່າງປະເທດ |
| 31. ສານຍຸຕິທຳ | 42. ໂຮງຮຽນກົດໝາຍແລະປົກຄອງ | ☒ ທີ່ຢູ່ຂອງຂ້າຣາຊະການຊັ້ນສູງ |

## ວິວັດທະນາການຂອງເທສະບານທີ່ເດີ່ນພະທາດຫຼວງວຽງຈັນ ປີ 1761 - 70

Carte no.15: Evolution de l'urbanisation sur la terrasse du That Luang




Terrasse du That Luang (1961)
Ech: 1/14 500
ເດີ່ນພະທາດຫຼວງໃນປີ1961




Terrasse du That Luang (1970)
Ech: 1/14 500
ເດີ່ນພະທາດຫຼວງໃນປີ1970

- ຄ້າຍຫຼັກຫ້າ ບ້ານຈອມມະນີ ໄດ້ກາຍເປັນຄ້າຍສາລະວັດທະຫານ.
- ຄ້າຍນາໄຊຍັງແມ່ນກົມສຳພາວຸດ.
- ໂຮງງານຈັກທຍິບ ບ້ານຂົວຫຼວງຍັງແມ່ນກົມພະລາທິການກອງທັບ.
- ທີ່ປຶກສາທະຫານຝຣັ່ງ (MMF) ຍັງຢູ່ຄ້າຍປ່າສັກ.
- ກອງທັບອາກາດຢູ່ເດີ່ນບິນວັດໄຕເບື້ອງໃຕ້ ພ້ອມດ້ວຍຊ່ຽວຊານອາເມລິກາ ມີຍົນ ເຕ 28 ຖິ້ມລະເບີດ ແລະ ຍົນ Air America ເພື່ອຂົນສະບຽງ ແລະ ອາວຸດ ໃຫ້ແກ່ກອງທັບ ແຫ່ງຣາຊະອານາຈັກລາວ.
- ໄດ້ຕັ້ງທີ່ພັກຂອງຊ່ຽວຊານອາເມລິກາຢູ່ຫຼັກ 6 ແລະ ຄຸ້ມດົງປ່າລານ.
- ມີສາງຂອງອາເມລິກາຢູ່ທົ່ງສ້າງນາງ.
- ຄ້າຍຈີ່ນາຍໂມ້ໄດ້ກາຍເປັນໂຮງຮຽນນາຍຮ້ອຍທະຫານບົກ.
- ຫຼັກ 21 ຍັງແມ່ນສາງອາວຸດຂອງກອງທັບແຫ່ງຊາດຢູ່.

ໃນເວລານີ້ ໄດ້ມີຊ່ຽວຊານການທະຫານ ຂອງອາເມລິກາຢູ່ວຽງຈັນເຖິງ 5.000 ຄົນ [13]

**5.2. ຕາໜ່າງຖະໜົນຫົນທາງ:**

ພາຍຫຼັງໄດ້ຂະຫຍາຍຖະໜົນຫຼວງພະບາງ, ເຊດຖາທິລາດ, ລ້ານຊ້າງແລ້ວ ໄດ້ຂະຫຍາຍຖະໜົນສາມແສນໄທ ຕັດຜ່ານຄຸ້ມສີຫອມຂຶ້ນໄປຕໍ່ໃສ່ຖະໜົນຫຼວງພະບາງ ບ່ອນຊ້າງ 3 ຫົວ ແລ້ວສ້າງເປັນທາງແລ່ນລວງດຽວ:(ຖະໜົນສາມແສນໄທເປັນທາງຂຶ້ນ, ສ່ວນຖະໜົນເຊດຖາທິລາດ ເປັນທາງລ່ອງ).

- ໄດ້ປູຢາງຖະໜົນຫຼັກໃນເມືອງວຽງຈັນ (ຍົກເວັ້ນທາງຊອຍຈຳນວນໜຶ່ງ).
- ຕັດທາງໃໝ່ຈາກຄູວຽງ (ສາລາແດງ) -ດົງປ່າລານ-ວັດທາດຝຸ່ນ-ທັດສະດີ ອອກໃສ່ຖະໜົນຂຸນບູລົມ.
- ປູຢາງຖະໜົນໃຫຍ່ລ້ານຊ້າງ ຈາກຣາຊະວັງ (ຫໍຄຳ )ເຖິງຫຼັກ 6, ຖະໜົນໜອງບອນ ຈາກໂຮງໝໍມະໂຫສົດຮອດທາດຫຼວງ ຕັດຖະໜົນຈາກໜອງບອນຫາໂພນເຄັງ.
- ປູຢາງຖະໜົນຂຸນບູລົມຄູວຽງ. (ໃນເວລານັ້ນໃນຕົວເມືອງວຽງຈັນລ້ວນແຕ່ປູຢາງຊັ້ນດຽວ)

**ນອກນີ້ຍັງໄດ້ຕັດທາງດິນແດງອອກໄປສູ່ຊານເມືອງອີກຫຼາຍເສັ້ນ :**

(ຄຳວ່າທາງດິນແດງນັ້ນແມ່ນທາງທີ່ໃຊ້ລົດເກຣດມາກວາດໜ້າທາງ ແປງຮ່ອງລະບາຍນ້ຳ 2 ຂ້າງ ພໍໃຫ້ໄດ້ຮູບຊົງໄປ ເປັນທາງບໍ່ໄດ້ມາດຕະຖານ ແລະ ແລ່ນບໍ່ໄດ້ 2 ລະດູ )

- **ທິດເໜືອ :**

-ຈາກຂົວຮ່ອງແຊງ(ໂພນເຄັງ)-ວຽງຈະເລີນ-ດອນກອຍ-ໜອງໄຮ-ດອນດູ່(ລຽບບຶງທາດຫຼວງໄປ.

-ຈາກ 3 ແຍກ ດົງປ່າລານ-ດົງປາຍນາ-ໂພນທັນຕໍ່ໃສ່ບຶງທາດຫຼວງ ແລະມີອີກເສັ້ນໜຶ່ງລ້ຽວມາ ສີສັງວອນຕໍ່ໃສ່ທາດຫຼວງ.

- ອ້ອມຄຸ້ມນາໄຮ່ດຽວ ມີເສັ້ນໜຶ່ງເປັນວົງວຽນ ກໍາເໜືອຂອງນາໄຮ່ດຽວ ມີຖະໜົນ 3 ເສັ້ນທີ່ຂະໜານກັນໄປທິດຕາເວັນຕົກ, ເສັ້ນແຄມນາຕໍ່ ຈາກຖະໜົນຮ່ອງໄກ່ແກ້ວ

---

[13] ຂໍ້ມູນມາຈາກ J.Deuve EFEO

ລົງມາດົງໝ້ຽງ-ທົ່ງຂັນຄຳ ຕໍ່ໃສ່ຮ່ອງຄ້າເປັນຖະໜົນ ເຕ 2 ດຽວນີ້.

- ຕັດຖະໜົນແຕ່ ອະນຸສາວະລີ (ປະຕູໄຊ) ຕໍ່ໃສ່ບ້ານຮ່ອງໄກ່ແກ້ວ.

-ຈາກ5ແຍກ ຖະໜົນຂຸນບູລົມ (ໂຮງລະຄອນລຳ) -ທົ່ງຂັນຄຳ-ບ້ານສະຫວ່າງ-ດົງປາແລບ-ໜອງທາ- ຫ້ວຍຫົງ- ດົງໂດກ.

- ຈາກສີດຳດວນ-ທົ່ງຕູມ-ສະຫວ່າງ-ໂພນຕ້ອງ. ສ່ວນອີກເສັ້ນໜຶ່ງ ຜ່ານບ້ານໂພນຕ້ອງ ແລ້ວກ້ຽວມາຫາໂຮງໝໍມິດຕະພາບ ອອກໄປຫາຫຼັກ 6 ແລະ ມີອີກເສັ້ນໜຶ່ງ ຂຶ້ນໄປທິດຕາເວັນອອກເຖິງດົງໂດກ.

- ເສັ້ນວົງແຫວນແຕ່ດົງໂດກ-ດົງຊຽງດີ-ໜອງບຶກ ອອກໃສ່ບ້ານສີເກີດ ທາງ 13 ເໜືອ.

• **ທິດຕາເວັນອອກ :**

- ຈາກ 3 ແຍກໂພນທັນ-ສະພານທອງ-ໂສກປ່າຫຼວງ-ວັດສີອຳພອນ ລົງໃສ່ ຖະໜົນທ່າເດື່ອ ຊຶ່ງແມ່ນຖະໜົນມິດຕະພາບລາວ-ໄທ ດຽວນີ້ ແລະ ອີກເສັ້ນໜຶ່ງຕໍ່ໄປ ຫາວັດນາກນ້ອຍ-ວັດນາກໃຫ່ຍ ອອກໄປຖະໜົນ ທ່າເດື່ອ ທີ່ຫຼັກ 4.

- ຈາກຕະຫຼາດທາດຫຼວງ ອອກໄປຫາຊຳເຄ້ ແລ້ວ ໄປບ້ານໂຊກນ້ອຍ ແລະ ໂຊກໃຫຍ່ ແລະ ມີເສັ້ນໜຶ່ງ ໄປໂນນຄໍ້ຫານາຄວາຍ ແລະ ສົມສະຫງ່າ ແລ້ວອອກໄປທ່ານາແລ້ງ.

- ຈາກຕະຫຼາດນ້ອຍສີສັງວອນ-ສະພັງໝໍ້-ຕັດຜ່າຖະໜົນດົງປາຍນາ-ບ້ານທົ່ງພານທອງ ໄປອອກໃສ່ໂຮງໝໍ 103.

- ຈາກສາມແຍກໂສກປ່າຫຼວງ ລົງມາຕໍ່ໃສ່ຄູວຽງ ແລະ ມີອີກເສັ້ນໜຶ່ງ ຂຶ້ນມາບ້ານໂພນສະຫວັນ ມາອອກຢູ່ສາມແຍກສວນ 23 ສິງຫາ.

• **ທິດຕາເວັນຕົກ :**

- 4 ແຍກໂຮງກາຍະສິນ -ຮ່ອງຄ້າ-ໜອງບົວທອງ.
- 5 ແຍກໂຮງລະຄອນລຳ-ຂົວຫຼວງ-ໜອງດ້ວງ-ດົງນາໂຊກ-ປາກທ້າງ.
- ຈາກຖະໜົນຫຼວງພະບາງ-ຄຸ້ມທະຫານອາກາດ-ປາກທ້າງ.
- ຈາກ ຊ້າງ 3 ຫົວ-ໜອງດ້ວງ.
- ທາງຮ່ອມຫຼາຍເສັ້ນທີ່ຕັດຈາກຖະໜົນຫຼວງພະບາງໄປສູ່ແຄມຂອງ ແຕ່ສີຖານຈົນເຖິງວັດໄຕ ສີໄຄ ກໍ່ໄດ້ບູລະນະຄືນ.

• **ທິດໄຕ້ :**

- ທາງຮ່ອມຫຼາຍເສັ້ນທີ່ຕັດຂວາງລົງແຄມຂອງ ມີປະມານເຄິ່ງໜຶ່ງປູຢາງ.
- ຖະໜົນເຈົ້າຟ້າງຸ່ມ ກໍປູຢາງປະມານເຄິ່ງໜຶ່ງ.

ສະຫຼຸບແລ້ວມາຮອດປີ 1975 :

| | |
|---|---|
| ມີຖະໜົນປູຢາງ ປະມານ : | 30 ກິໂລແມັດ |
| ມີທາງດິນແດງ ປະມານ : | 70 ກິໂລແມັດ |
| **ລວມປະມານ:** | **<u>100 ກິໂລແມັດ</u>** |

## ແຜນທີ່ ຖະໜົນຫົນທາງໃນນະຄອນຫຼວງວຽງຈັນ ປີ 1975



- ໄດ້ປັບປຸງທ່າເຮືອຫຼັກ 4 ໃນປີ 1962 ແລະ ທ່າຂ້າມລົດ ທີ່ທ່ານາແລ້ງປີ 1963 ແລ້ວມອບໃຫ້ບໍລິສັດ SOGOV[14] ຮັບຜິດຊອບເຮັດທຸລະກິດ. ພາຫະນະຂົນສົ່ງ ທັງລົດໜັກ, ລົດເບົາ ແລະ ລົດຈັກ ໄດ້ເຂົ້າມາຫຼາຍໃນວຽງຈັນ ; ມີລົດເບົາປະມານ 2,000 ຄັນ, ລົດໜັກປະມານ 500 ຄັນ, ລົດຈັກ ປະມານ 3,000 ຄັນ, ເຮືອຂົນສົ່ງທາງນ້ຳ ແຕ່ 10 ໂຕນຂຶ້ນໄປ ມີປະມານ 15 ລຳ.

## 5.3 ການກໍ່ສ້າງວັດວາອາຮາມ

ຄືດັ່ງທີ່ໄດ້ລາຍງານມາແລ້ວ ໃນໄລຍະນີ້ ປະຊາຊົນເບື່ອໜ່າຍຕໍ່ສົງຄາມ, ຕໍ່ການເມືອງຫຼາຍພັກ, ຕໍ່ການສໍ້ລາດບັງຫຼວງ ແລະ ວັດທະນະທຳຕາເວັນຕົກທີ່ນຳເຂົ້າມາ, ປະຊາຊົນໄດ້ຫັນມາເຫຼື້ອມໃສຕໍ່ສາສະໜາພຸດຫຼາຍຂຶ້ນ ໂດຍອາໄສສິນທຳເປັນທີ່ເພິ່ງ ຈຶ່ງໄດ້ມີການສ້າງວັດໃໝ່ ແລະ ປະຕິສັງຂອນວັດຮ້າງ ຄືນໃໝ່ຢ່າງເປັນຂະບວນ. ໃນຊຸມປີ 1950-1954 ວັດທັງໝົດໃນກຳແພງນະຄອນ ມີປະມານ 84 ວັດ[15] ດັ່ງນີ້:

- ເມືອງສີໂຄດຕະບອງ ມີ : 18 ວັດ
- ເມືອງຈັນທະບູລີ ມີ : 23 ວັດ
- ເມືອງໄຊເຊດຖາ ມີ : 14 ວັດ
- ເມືອງສີສັດຕະນາກ ມີ : 29 ວັດ

ມາຮອດປີ 1975 ຈຳນວນວັດໄດ້ເພີ່ມຂຶ້ນຄູນເທົ່າຄື : 166 ວັດ [16] ຄື:

- ເມືອງສີໂຄດຕະບອງ ມີ : 50 ວັດ
- ເມືອງຈັນທະບູລີ ມີ : 27 ວັດ
- ເມືອງໄຊເຊດຖາ ມີ : 56 ວັດ
- ເມືອງສີສັດຕະນາກ ມີ : 33 ວັດ

ມີພະສົງສຳມະເນນບວດຢູ່ ປະມານ 30,000 ຕົນ.

ໃນໄລຍະ ປີ 1957-1958 ນັ້ນ ທ່ານ ພູມີ ວົງວິຈິດ ຊຶ່ງເປັນລັດຖະມົນຕີກະຊວງທຳມະການ ໄດ້ເອົາໃຈໃສ່ສຶກສາອົບຮົມພະສົງ ໃຫ້ເຂົ້າໃຈແນວທາງສັນຕິພາບ ແລະ ປອງດອງຊາດ ຂອງ ແນວລາວຮັກຊາດ ຈຶ່ງເຮັດໃຫ້ພະສົງສຳມະເນນຫັນມາສົນໃຈໃນການເມືອງຫຼາຍຂຶ້ນ ຈຶ່ງເຫັນມີພະສົງອອກມາເດີນຂະບວນ ຂັດຄ້ານສົງຄາມຮຸກຮານຂອງ ຈັກກະພັດ ອາເມຣິກາ ແລະ ສະໜັບສະໜູນການຍຶດອຳນາດ 23 ສິງຫາ 1975 ທີ່ ນະຄອນຫຼວງວຽງຈັນ ເປັນຈຳນວນຫຼວງຫຼາຍ.

---

[14] Société de transport fluvial du Gouvernement à Vientiane (ບໍລິສັດ ຂົນສົ່ງທາງນ້ຳຂອງລັດ ທີ່ ວຽງຈັນ)

[15] ຕາມການສຳຫຼວດຂອງ P.Gagneux ໃນປີ 1954-1960 ພິມປີ 2002

[16] ຕາມບົດລາຍງານຂອງກົມສາສະໜາສູນກາງແນວລາວສ້າງຊາດ ເດືອນ 6 , 2008.

5.4.ເຂດການຄ້າ :

ໃນປີ 1961 ຕະຫຼາດເຊົ້າ ໄດ້ຍ້າຍຈາກກາງເມືອງເກົ່າ ມາຢູ່ຕະຫຼາດເຊົ້າ ດຽວນີ້ (ອອັມອາຄານທີ່ສະເດັດເຈົ້າ ສຸວັນນະພູມມາ ປຸກໄວ້ແຕ່ ປີ1940 ດຽວນີ້ ທັບມ້າງຖິ້ມແລ້ວ) ໃນຊຸມປີຕໍ່ມາກໍ່ເກີດຫ້ອງແຖວ 3 ຊັ້ນຂຶ້ນ ທີ່ກຳ້ເໜືອຂອງຕະຫຼາດເຊົ້າ ແລະ ລຽບຖະໜົນ ໜອງບອນຂຶ້ນມາ, ທັງມີເຮືອນຊົ່ວຄາວ (ຊະລຳ) ເກີດຂຶ້ນຫຼາຍ ເບື້ອງຂົວດິນ ຈົນແອອັດ ໄປ ໝົດ. ໃນປີ 1962 ມີປະມານ 200 ຫຼັງ, ປີ 2001 ມີປະມານ 400 ຫຼັງ ຖືວ່າເປັນ ການປຸກສ້າງແບບອົກກະທິກ ບໍ່ມີລະບຽບ ແລະເປິະເປື້ອນຫຼາຍ.

ຢູ່ສະຖານທີ່ເກົ່າໃນເມືອງໄດ້ມ້າງຕຶກຕະຫຼາດເຊົ້າ 2 ຫຼັງຖິ້ມ, ສ້າງນ້ຳພຸໃສ່ແທນ, ກຳ້ຕາເວັນຕົກມີການປຸກສ້າງຕຶກສູງ 7 ຊັ້ນ ຂອງ ທ່ານສົມບູນ ອິນທະວົງ ເປັນຫຼັງທຳອິດ ທີ່ສູງກວ່າໝູ່ໃນວຽງຈັນ ( ປຸກສ້າງໃນປີ 1962-1963 ).

ຕະຫຼາດແລງສີຫອມ ໄດ້ຍ້າຍໄປຕັ້ງຢູ່ຕະຫຼາດແລງໜອງດ້ວງ ໃນປີ 1963 ແລ້ວ ຈຶ່ງຕັດຖະໜົນສາມແສນໄທຂຶ້ນໄປ, ໃນຊຸມປີຕໍ່ມາ ກໍ່ມີຕຶກຫ້ອງແຖວ 2-3 ຊັ້ນ ເກີດຂຶ້ນ ອ້ອມຕະຫຼາດດັ່ງກ່າວ. ຈາກນັ້ນ ຕະຫຼາດແລງທາດຫຼວງ, ສວນມອນ, ສີໄຄ, ແລະ ສີເມືອງ ກໍ່ຂະຫຍາຍຕົວໄປນຳ ແລະ ມີຕະຫຼາດແລງດົງປ່າລານ ເກີດຂຶ້ນອີກ.

ລວມຕະຫຼາດໃຫຍ່ ແລະ ນ້ອຍ ທີ່ຖາວອນໃນຕົວເມືອງມີ 12 ແຫ່ງ ໃນນັ້ນ 10 ແຫ່ງ ແມ່ນ ປຸກໃສ່ດິນລັດ.

ເຂດການຄ້າໄດ້ຂະຫຍາຍຕົວ ເປັນຫ້ອງແຖວ 2-3 ຊັ້ນ ຂຶ້ນເຕັມຖະໜົນເຊດຖາ ທິລາດ, ສາມແສນໄທ, ຊຸນບູລົມ ແລະ ຖະໜົນສາຍຂວາງ ກໍ່ມີຫ້ອງແຖວເຕັມໄປໝົດນັບແຕ່ ຖະໜົນເຈົ້າອະນຸວົງ ລົງມາເຖິງຖະໜົນຈັນທະກຸມມານ. ຄຸ້ມທີ່ມີຮ້ານຄ້າຫຼາຍ ແມ່ນ ຄຸ້ມເຈົ້າອະນຸວົງ, ຄຸ້ມມີໄຊ, ຄຸ້ມນ້ຳພຸ, ຄຸ້ມສີເມືອງ, ແລະ ທາດຂາວ. ຕາມຖະໜົນລ້ານຊ້າງ ກໍ່ມີຮ້ານຄ້າ ຫ້ອງແຖວ 4 ຊັ້ນ ເກີດຂຶ້ນ ທັງ 2 ຝາກທາງ ແຕ່ສີຫ່າງໆກັນ, ຕາມຖະໜົນຕັດໃໝ່ ກໍ່ເກີດມີຫ້ອງແຖວຂຶ້ນແຕ່ 3 ແຍກດົງປ່າລານ -ບ້ານຝາຍ- ບ້ານທັດສະດີ.

☐ **ການທ່ອງທ່ຽວ**

ຍ້ອນມີການຊ່ວຍເຫຼືອຈາກອາເມຣິກາຫຼາຍ ຈຶ່ງມີນັກທຸຣະກິດ, ຊາວຄ້າຂາຍ, ຊ່ຽວຊານ ການທະຫານ ຮິບປີຈິໂກະ ຈາກຕ່າງປະເທດ ເຂົ້າມາຫາກິນຢູ່ວຽງຈັນ ຫຼາຍຂຶ້ນ.

ດັ່ງນັ້ນ, ຈຶ່ງເກີດມີໂຮງແຮມ, ຮ້ານອາຫານ, ຮ້ານເຕັ້ນລຳ, ບາ ແລະ ອື່ນໆ ຂຶ້ນໄປຕາມ.

**+ ໂຮງແຮມ ມີ:**

- ໂຮງແຮມລີໂດ ປຸກຂຶ້ນແຕ່ປີ 1958 ເປັນເຮືອນໄມ້ 3 ຊັ້ນ ດຽວນີ້ມ້າງຖິ້ມແລ້ວມາປຸກ ໂຮງຮຽນວິທະຍາການແພດຂຶ້ນແທນໃນຊ່ວງປີ 1985.
- ໂຮງແຮມລ້ານຊ້າງປຸກໃນປີ 1962 ເປັນຕຶກ 4 ຊັ້ນໃສ່ສວນປາວີ.
- ໂຮງແຮມ 5 ຊັ້ນ (ຣາມາຢານະ) ທີ່ຖະໜົນລ້ານຊ້າງ ປຸກໃນຊຸມປີ 1960-61
- ໂຮງແຮມອາພອນໂລ (1968-70) ເປັນຕຶກ 4 ຊັ້ນ (ທະນາຄານພັດທະນາດຽວນີ້).
- ໂຮງແຮມວຽງຈັນ ຢູ່ຕໍ່ໜ້າໂຮງແຮມອາພອນໂລ ເປັນຕຶກ 3 ຊັ້ນ.

-ໂຮງແຮມ ລາວວຽງ ຕຶກ 5 ຊັ້ນ ຢູ່ຖະໜົນ ປາງຄຳ ປຸກປີ 1960-62 ດຽວນີ້ເປັນທະນາຄານ.

- ໂຮງແຮມໄຊຊະນະ ຢູ່ຖະໜົນເຈົ້າອະນຸວົງ ເປັນຕຶກ 4 ຊັ້ນ.

- ໂຮງແຮມເຂດຖາປາລາສ ( ເມື່ອກ່ອນຊື່ວ່າບັງກາໂລ ມີມາແລ້ວແຕ່ດົນ)

ແລະ ອື່ນໆ..

**5.5. ເຂດອຸດສະຫະກຳ:** ໃນກຳແພງວຽງຈັນມີໂຮງງານຈຳນວນໜຶ່ງເກີດຂຶ້ນ ເຊັ່ນ:ໂຮງງານຢາສູບ ໂຮງງານຕົ້ມເຫຼົ້າ, ໂຮງຊອຍໄມ້...ຊຶ່ງຈຳນວນບໍ່ເກີນ 10 ແຫ່ງ, ສ່ວນໂຮງງານອື່ນໆ ແມ່ນຕັ້ງຢູ່ຕາມຖະໜົນທ່າເດື່ອ ແຕ່ຄ້າຍຈີນາຍໂມ້ ລົງໄປ ເຊັ່ນ: ໂຮງງານໄມ້ອັດ ໂຮງງານເບຍ ໂຮງງານນ້ຳຫວານ ໂຮງງານຢາສູບ ສາງນ້ຳມັນ ສາງສິນຄ້າຜ່ານແດນ ຕ່າງໆ..

**5.6. ທີ່ຢູ່ອາໄສຂອງປະຊາກອນ:**

ໃນເຂດເມືອງເກົ່າ ບ້ານຕ່າງໆແມ່ນແຄບເຂົ້າ, ຄວາມໜາແໜ້ນຂອງປະຊາກອນແມ່ນ 200- 250 ຄົນຕໍ່ເຮັກຕາແລ້ວ. ມາທາງໃຕ້ຄຸ້ມສີເມືອງ, ເພຍວັດ, ຫາດຂາວ ກໍ່ມີເຮືອນປຸກເຕັມໄປໝົດ. ປະຊາກອນ ຄິດສະເລ່ຍແມ່ນ 200 ຄົນຕໍ່ ເຮັກຕາ.

ຢູ່ຊານເມືອງກຳຕາເວັນຕົກສ່ຽງເໜືອ ບ້ານໜອງດ້ວງ, ດົງນາໂຊກ, ປາກທ້າງ ກໍ່ຂະຫຍາຍອອກໄປເກືອບຈະຈຸໃສ່ກັນແລ້ວ ຂັ້ນພຽງແຕ່ໜອງ ແລະ ນາເທົ່ານັ້ນ.

ສ່ວນກຳເໜືອຂອງຖະໜົນຫຼວງພະບາງ ກໍ່ເສຍດິນນາໄປອີກ, ປະຊາຊົນໄດ້ເຂົ້າມາປຸກເຮືອນແຖວ ແລະ ເຮືອນຢູ່ ຕິດຈອດໃສ່ກັນແລ້ວ ແຕ່ເໜືອລົງໃຕ້.

ທິດເໜືອ ກຸ່ມບ້ານຕ່າງໆ: ທັດສະດີ, ນາໄຮ່ດຽວ, ສີດຳດວນ, ທົ່ງຂັນຄຳ, ທົ່ງຕູມ, ຮ່ອງຄ້າ, ສະຫວ່າງ ກໍ່ໃກ້ຈະຕິດຈອດໃສ່ກັນແລ້ວ ຂັ້ນພຽງທົ່ງນາໜ້ອຍໜຶ່ງ ເທົ່ານັ້ນ. ສ່ວນບ້ານສະຫວ່າງ, ບ້ານທົ່ງຕູມ, ບ້ານໂພນຕ້ອງ, ບ້ານໂພນເຄັງ ກໍ່ຍັງຫ່າງກັນຢູ່ ເພາະມີນາກ້ວາງຂັ້ນຢູ່. ບ້ານລຽບຕາມທາງ 13 ໃຕ້ ແຕ່ໂພນເຄັງ ເຖິງໂພນພະເນົາ ກໍ່ຕິດຈອດໃສ່ກັນແລ້ວທັງສອງຝາກທາງ.

ກຳເໜືອຂອງດົງປ່າລານ ເຖິງໂພນໄຊ ມີບ້ານ: ນາໄຊ, ສະພັງໝໍ້ ແຕ່ກໍ່ຍັງມີໜອງ ແລະ ນາຂັ້ນຢູ່.

ກຳຕາເວັນອອກ ບ້ານໄດ້ຂະຫຍາຍລົງມາແຕ່ ໂພນສີນວນ, ດົງປາຍນາ, ໂພນສະຫວັນ ຮອດໂສກປ່າຫຼວງ ສີຫ່າງໆ. ດ້ານໜຶ່ງ ກໍ່ຂະຫຍາຍຕົວແຕ່ສະພັງໝໍ້, ສະພານທອງ ຈົນເຖິງສູນໄຟຟ້າໂສກປ່າຫຼວງ ຮອດ ວັດສີອຳພອນ ສີຫ່າງໆ.ຈາກບ້ານສີສັງວອນ ກໍ່ຂະຫຍາຍມາໂພນທັນ, ໂພນປ່າເປົ້າ ລຽບໄປຕາມບຶງທາດຫຼວງ ແບບຫ່າງໆກັນ ຊຶ່ງມີປະຊາຊົນ ເຮັດນາ ແລະ ສວນລຽບແຄມບຶງນັ້ນ.

ກຳຕາເວັນອອກສ່ຽງເໜືອ ແຕ່ບຶງຂະຫຍອງລົງໄປເຖິງ ຄ້າຍຈີ່ນາຍໂມ້ ກໍ່ມີບ້ານ ຕິດຈອດໃສ່ກັນ ທັງ 2 ຝາກ ແລະ ທັງປຸກສ້າງເລິກເຂົ້າໄປໃນເຂດທົ່ງນາອີກ, ແລ້ວມີຕະຫຼາດສວນມອນເກີດຂຶ້ນ. ແຕ່ຄ້າຍຈີ່ນາຍໂມ້ ລົງໄປຕາມຖະໜົນທ່າເດື່ອ, ທັງ 2 ຝາກທາງ ເປັນທີ່ຕັ້ງຂອງ ໂຮງຈັກໂຮງງານ ແລະ ສາງຕ່າງໆ...ສ່ວນປະຊາຊົນຈະຢູ່ຕາມທົ່ງນາຂອງໃຜມັນ ແຕ່ກໍ່ມີບາງບ້ານ ຕັ້ງມາຢູ່ກ່ອນແລ້ວ.

ເວົ້າລວມແລ້ວໃນຂອບເຂດ 100 ບ້ານ ໃນ 4 ເມືອງ ແມ່ນເກືອບເຕັມໄປໝົດ, ມີພຽງແຕ່ຫ້ວຍຮ່ອງ, ຄອງບຶງ ແລະ ນາຂັ້ນໄວ້ນ້ອຍໜຶ່ງເທົ່ານັ້ນ ສ່ວນປ່າກໍ່ໄດ້ ຫາຍໄປໝົດແລ້ວ.

# ເຮືອນຫ້ອງແຖວ



ທີ່ຖະໜົນສາມແສນໄທເໜືອ, ສ້າງຊຸມປີ 1963



ທີ່ຖະໜົນສາມແສນໄທກາງເມືອງ, ສ້າງຊຸມປີ 1960



ທີ່ຖະໜົນປາງຄຳ, ສ້າງຊຸມປີ 1950




ທີ່ຖະໜົນແຫ່ງບຸນ, ສ້າງຊຸມປີ 1970




ທີ່ຖະໜົນເຈົ້າອະນຸວົງ, ສ້າງຊຸມປີ 1960




ໂຮງຮູບເງົາແສງລາວ (ຖະໜົນເຈົ້າອະນຸວົງ), ປີ 1953

# ໂຮງແຮມຕ່າງໆ



ໂຮງແຮມລ້ານຊ້າງ ຕຶກ 4 ຊັ້ນ, ສ້າງປີ 1962



ໂຮງແຮມໂຮເຢັນ(ຣາມາຍານະ) ຕຶກ 5 ຊັ້ນ, ສ້າງປີ 1962



ໂຮງແຮມເອກະລາດ, ສ້າງປີ 1967-69



ໂຮງແຮມໄຊຊະນະ, ສ້າງປີ 1963-65



ບ້ານພັກໄຊກດີ (ເມື່ອກ່ອນແມ່ນໂຮງແຮມປາຣີ)



ໂຮງແຮມເອຊຽນພາວິລຽນ, ສ້າງຊຸມປີ1964 ປັບປຸງໃໝ່1992

## ເຮືອນຂອງຄົນລາວແບບຕ່າງໆ





ເຮືອນວິລາ 2 ຊັ້ນ ແລະ 1 ຊັ້ນ, ສ້າງໃນຊຸມປີ 1960





ເຮືອນໄມ້ເສົາຕັ້ງຂອງປະຊາຊົນດອນໜູນ ນະຄອນຫຼວງວຽງຈັນ, ສ້າງໃນຊຸມປີ 1960



ເມື່ອກ່ອນແມ່ນເຮືອນເສົາຕັ້ງ
ແລ້ວມາກໍ່ຝາຊັ້ນລຸ່ມໃຫ້ເປັນທີ່ຢູ່ຕື່ມ



ເຮືອນຝາຕໍ່ອກຊີ 2 ຊັ້ນ ທີ່ບ້ານສີຖານເໜືອ
ສ້າງປີ 1937, ດຽວນີ້ໄດ້ມາຟື້ນຟູຄືນ

## 5.7. ການກໍ່ສ້າງສາທາລະນະປະໂຫຍດ

ລັດຖະບານຣາຊະອານາຈັກລາວ ໄດ້ເລີ່ມກໍ່ສ້າງສາທາລະນະປະໂຫຍດໃຫ້ແກ່ທາງຣາຊະການ, ສະຖານທູດ ແລະ ປະຊາກອນ ແຕ່ປີ 1961 ມາຄື:

- ສ້າງນ້ຳປະປາ:

ປີ 1961-1963 ສ້າງລະບົບນ້ຳປະປາໃຫ້ຕົວເມືອງວຽງຈັນ ຊຶ່ງມີຄວາມສາມາດຜະລິດນ້ຳສະອາດໄດ້ມື້ໜຶ່ງ 20,000 ມ$^3$ ເພື່ອປະຊາກອນ ປະມານ 100,000 ຄົນ ດ້ວຍການສ້າງສະຖານີສູບ ແລະ ຕອງນ້ຳຢູ່ເກົ້າລ້ຽວແລ້ວ ສົ່ງນ້ຳມາຕາມທໍ່ໃຫຍ່ກ້ອງ ຖະໜົນ ຫຼວງພະບາງ, ເຊດຖາທິລາດ, ຖະໜົນລ້ານຊ້າງ ຈົນເຖິງອ່າງເກັບນ້ຳສູງ ໂພນເຄັງ ທີ່ສາມາດສະສົມນ້ຳໄດ ປະມານ 2,000 ມ$^3$ . ໄດ້ວາງທໍ່ຂະໜາດກາງ ໃສ່ຖະໜົນ ສາມແສນໄທ ຮອດສີເມືອງ, ແລະແຕ່ສາມແຍກທໍ່ຄຳເຖິງທາດຂາວ. ທໍ່ໃຫ່ຍ ແລະ ທໍ່ກາງ ລວມທັງໝົດ ຍາວ 45 ກິໂລແມັດ (Conduites principales et secondaires) ໂຄງການນີ້ແມ່ນໄດ້ຮັບການກູ້ຢືມທຶນ ຈາກ ລັດຖະບານຍີ່ປຸ່ນ ປະມານ 3 ລ້ານກ່ວາ ໂດລາ. ແຕ່ປີ 1964 ມາ ທົ່ວນະຄອນຫຼວງວຽງຈັນໄດ້ນຳໃຊ້ ນ້ຳປະປາເປັນຄັ້ງທຳອິດ.

- **ສ້າງລະບົບໂທລະສັບ:**

ໃນປີ 1964 ລັດຖະບານໄດ້ສ້າງຕັ້ງລະບົບໂທລະສັບຕັ້ງໂຕະ ປະມານ 4,000 ໜ່ວຍໃຫ້ແກ່ກະຊວງທະບວງກົມ, ສະຖານທູດ, ໂຮງແຮມ, ໂຮງຮູບເງົາ, ແລະ ຮ້ານຄ້າຕ່າງໆ.

- **ສ້າງເຂື່ອນໄຟຟ້າ:**

ໃນວັນໜຶ່ງຂອງ ປີ 1957 ທີ່ໂຮງແຮມເຊດຖາປາລາສ, ທ່ານ ຢູຕາກະ ກູໂບຕະ ຊ່ຽວຊານຍີ່ປຸ່ນ ດ້ານພະລັງງານໄຟຟ້າໄດ້ເຂົ້າປຶກສານຳ ສະເດັດເຈົ້າ ສຸພານຸວົງ ເວລານັ້ນ ເປັນລັດຖະມົນຕີກະຊວງເສດຖະກິດ ແຜນຜັງ ແລະ ພັດທະນາ ຂອງລັດຖະບານປະສົມແຫ່ງຊາດ ເພື່ອຊອກຫາພະລັງງານໄຟຟ້າມາໃຊ້ ໃນນະຄອນຫຼວງວຽງຈັນ. ຜ່ານການປຶກສາຫາລືນຳກັນ ຢ່າງເອົາຈິງເອົາຈັງ ສະເດັດ ກໍ່ໄດ້ຕົກລົງໃຫ້ມີການສຳຫຼວດຄວາມເປັນໄປໄດ້ ໃນການສ້າງເຂື່ອນ ໄຟຟ້າເໜືອວຽງຈັນໜຶ່ງແຫ່ງ. ໃນທີ່ສຸດກໍ່ໄດ້ເກີດເປັນໂຄງການເຂື່ອນໄຟຟ້ານ້ຳງື່ມຂຶ້ນ ໂດຍການສະໜັບສະໜູນທຶນ ຈາກ ສະຫະລັດ, ຍີ່ປຸ່ນ, ໄທ ແລະ ປະເທດອື່ນໆ ແລະ ອົງການຈັດຕັ້ງສາກົນ. ນັ້ນເປັນຈຸດລິເລີ່ມ ຂອງໂຄງການເຂື່ອນໄຟຟ້ານ້ຳງື່ມ[17].

---

[17] ອີງໃສ່ປຶ້ມ "ເຂື່ອນນ້ຳງື່ມ" 30ປີພາຍ ຫຼັງການໃຊ້ງານ ພິມເປັນພາສາລາວທີ່ວຽງຈັນ ປີ 2006 ໂດຍ ຮາມິເຈ ໂກອິສຸມິ (KRI international Corporation)

## ສິ່ງກໍ່ສ້າງສາທາລະນະປະໂຫຍດ



ລະບົບນ້ຳປະປາໃນວຽງຈັນ, ສ້າງປີ 1961-63



ເຂື່ອນໄຟຟ້ານ້ຳງື່ມ, ສ້າງປີ 1968 ນຳໃຊ້ປີ 1971



ເຮືອນພັກຂ້າຣາຊະການຕຶກ 5 ແລະ 6 ຊັ້ນ, ສ້າງປີ 1968-70



ເຮືອນພັກຂ້າຣາຊະການຕຶກ 5 ຊັ້ນ, ສ້າງປີ 1967-68



ນ້ຳພຸ ແລະ ເຮືອນ 7 ຊັ້ນ ຫຼັງທຳອິດໃນວຽງຈັນ, ສ້າງ 1963



ຕຶກໃຫຍ່ໂຮງໝໍມະໂຫສົດ, ສ້າງປີ 1968-70

ໃນປີ 1966 ລັດຖະບານໄດ້ກູ້ຢືມເງິນດ້ວຍດອກເບ້ຍຕໍ່າ ຈາກສະຫະລັດ ແລະ ຍີ່ປຸ່ນ ມາສ້າງເຂື່ອນໄຟຟ້ານ້ຳງື່ມ. ໃນເວລາກໍ່ສ້າງນັ້ນ ສະເດັດເຈົ້າ ສຸວັນນະພູມາ ນາຍົກລັດຖະມົນຕີ ກໍໄດ້ຮັບປາກຈາກ ສະເດັດເຈົ້າ ສຸພານຸວົງ ຜູ້ເປັນນ້ອງຕ່າງມານດາ ໃນເວລານັ້ນວ່າ: ຝ່າຍແນວລາວຮັກຊາດຈະຮັກສາຄວາມປອດໄພໃຫ້ເຕັມທີ່. ໃນພາກຕົວຈິງ ຝ່າຍແນວລາວຮັກຊາດ ກໍ່ໄດ້ຈິງໃຈປະຕິບັດຕາມຂໍ້ຕົກລົງຂອງຜູ້ນຳຂອງຕົນຢ່າງແທ້ຈິງ.

ວຽກກໍ່ສ້າງໃນຊ່ວງທີ່ 1 ໄດ້ສຳເລັດໄປໂດຍດີ ໃນປີ 1971 ແລ້ວກໍ່ຕໍ່ຕາຂ່າຍເຂົ້າມາວຽງຈັນ ແລະ ສົ່ງອອກ ໄປຂາຍ ໃຫ້ໄທອີກ. ຕາຂ່າຍໃນນະຄອນວຽງຈັນ ໄດ້ຕິດຕັ້ງໄປຕາມເສັ້ນທາງສາຍຫຼັກແຕ່ວັດໄຕ, ສີໄຄ ລົງມາເຖິງທາດຂາວ, ແຕ່ທໍ່ຄຳມາເຖິງ ໂພນເຄັງ, ບ້ານທາດຫຼວງ, ໜອງບອນ. ເປັນຄັ້ງທຳອິດ ທີ່ນະຄອນຫຼວງ ມີໄຟແສງສະຫວ່າງໄຕ້ ໃນທຸກຄົວເຮືອນ ແລະ ໃນຖະໜົນເສັ້ນສຳຄັນຕ່າງໆ ດ້ວຍພະລັງງານທີ່ສົດໃສເປັນຂອງຕົນເອງໃນຄັ້ງທຳອິດ.

- **ສາທາລະນະສຸກ**

ກະຊວງສາທາລະນະສຸກ ໃນຊຸມປີ 1970-1975 ແມ່ນຕັ້ງຢູ່ຕຶກຊັ້ນດຽວ ຊ້າຍສວຍທໍພະແກ້ວເໜືອສະຖານທູດຝຣັ່ງ. ເປັນກະຊວງທີ່ມີຫ້ອງການແຄບແລະເກົ່າກ່ວາໝູ່, ຍ້ອນວ່າລັດຖະບານເອົາໃຈໃສ່ນ້ອຍກ່ວາຂະແໜງການອື່ນໆ... ໂຮງໝໍຢູ່ນະຄອນວຽງຈັນ ເມືອງເອກແຫ່ງຣາຊະອານາຈັກລາວ ສຳຫຼັບປິ່ນປົວປະຊາຊົນ ແລະ ຂ້າຣາຊະການຊັ້ນຜູ້ນ້ອຍມີພຽງ 2 ແຫ່ງເທົ່ານັ້ນ ຄື : ມະໂຫສົດ ແລະ ໂອບີ ເທົ່ານັ້ນ.

ສ່ວນໂຮງໝໍທະຫານຢູ່ໂສກປ່າຫຼວງນັ້ນ ແມ່ນເພື່ອປິ່ນປົວທະຫານບາດເຈັບ ມາແຕ່ສະໜາມ (ໂຮງໝໍ 103 ດຽວນີ້ ) ຊຶ່ງແມ່ນ ອາເມລິກາສ້າງໃຫ້, ສ່ວນຂ້າຣາຊະການ ຊັ້ນຜູ້ໃຫ່ຍ ແລະ ຜູ້ຮັ່ງມີ ເມື່ອເຈັບເປັນມາ ກໍ່ໄປປິ່ນປົວຢູ່ຕ່າງປະເທດ (ໄທ, ຝຣັ່ງ, ແລະ ອາເມລິກາ). ໃນໄລຍະ 20 ປີຜ່ານມາ, ລັດຖະບານໄດ້ ຂໍການຊ່ວຍເຫຼືອຈາກ ອາເມລິກາ ມາປຸກຕຶກ 3 ຊັ້ນ ແຖມຂອງໃຫ້ໂຮງໝໍມະໂຫສົດ ຫຼັງດຽວເທົ່ານັ້ນ.

ການຮັກສາອານາໄມໃນເມືອງເອກ ແມ່ນບໍ່ພຽງພໍ, ທຳມະດາແມ່ນກອງເທສະບານຮັບຜິດຊອບ ຂົນຂີ້ເຫຍື້ອອອກໄປຖິ້ມ, ແຕ່ຍ້ອນຂາດງົບປະມານການປະຕິບັດຈຶ່ງບໍ່ສະໝ່ຳສະເໝີ ເຮັດໃຫ້ມີກອງຂີ້ເຫຍືອເໜົ່າເໝັນ ໃນຕົວເມືອງ ແລະໃນຄອງນ້ຳຕ່າງໆ: ນ້ຳປ່າສັກ ຮ່ອງທອງ ໜອງຈັນ ຮ່ອງແກ.. ອັນເປັນສິ່ງລະບາຍອາຍເໝັນ ແລະ ເຊື້ອພະຍາດ ປົວໄປທົ່ວທຸກທິດ. ນ້ຳເສຍຈາກຄົວເຮືອນແລະວິດບໍ່ຊຶມ ກໍ່ໄຫຼອອກມາຕາມຮ່ອງລະບາຍນ້ຳຂອງຖະໜົນ ເປັນຕົ້ນແມ່ນເຂດການຄ້າ: ຖະໜົນເຈົ້າອະນຸວົງ, ຖະໜົນສາມແສນໄທ, ຖະໜົນເຂດຖາທີລາດ, ເຂດນ້ຳພຸ, ຕະຫຼາດເຊົ້າ, ຂົວດິນ, ໜອງດ້ວງ ໄດ້ສົ່ງກິ່ນ ອາຍເໝັນອອກໄປ ເຊັ່ນດຽວກັນ ເຮັດໃຫ້ບັນຍາກາດຂອງເມືອງເອກແຫ່ງນີ້ບໍ່ສົດໃສຕໍ່ປະຊາກອນ, ນັກທ່ອງທ່ຽວ ແລະ ແຂກ ທີ່ມາຢັ້ງມຢາມ, ເປັນເມືອງທີ່ບໍ່ສະອາດ, ຖ້າຈະເວົ້າເຖິງ ຄວາມສະຫງົບ ແລະ ປອດໄພແຮງ ເປັນເລື່ອງໃໝ່ຕື່ມ.

- **ລະບົບລະບາຍນ້ຳເສຍ :**

ໃນປີ 1960 ບໍລິສັດ BCEOM ໄດ້ອອກແບບ ລະບົບລະບາຍນ້ຳຝົນ ແລະ ນ້ຳເປື້ອນລົງໃສ່ຮ່ອງທອງ, ໜອງຈັນ, ຮ່ອງແກ, ລົງໃສ່ບຶງທາດຫຼວງ. ໃນສະພາບຕົວຈິງ ລັດຖະບານ ຍັງສືບ

ຕໍ່ໃຊ້ລະບົບລະບາຍນ້ຳເກົ່າຂອງຝຣັ່ງຢູ່ ໂດຍບໍ່ໄດ້ສ້າງຫຍັງຂຶ້ນໃໝ່ ຍາມແລ້ງຈຶ່ງ ມີນ້ຳ ເປື້ອນ ອັ່ງຢູ່ ຕາມຮ່ອງທາງເຮັດໃຫ້ມີໜອນຍຸງ, ສິ່ງກິ່ນເໝັນ, ລະດູຝົນມາ ພັດມີນ້ຳລົ້ນຖ້ວມຄຸ້ມຕ່າງໆ ເຮັດໃຫ້ ມີຍຸງ ແລະ ພະຍາດ ແຜ່ລະບາດ ອອກໄປອີກ.

- **ການລະບາຍນ້ຳຝົນຕາມລະບົບເກົ່າ ຄື:**

**+ເຂດຕາເວັນຕົກ:**

ແຕ່ບ້ານອູບມຸງຮອດ ວັດໄຕ ນ້ຳຈະໄຫຼລົງສູ່ນ້ຳຂອງ ບ່ອນຮ່ອງຊິນລະປະທານທີ່ ບ້ານ ວັດໄຕນ້ອຍ ດຽວນີ້ ( ຕໍ່ໜ້າທາງເຕ 2 ), ສ່ວນຄຸ້ມ ໜອງດ້ວງ, ສີທອມ, ຂົວຫຼວງ, ຮ່ອງຄ້າ, ທົ່ງຂັນຄຳ, ທົ່ງຕູມ, ນາໄຮ່ດຽວ ນ້ຳຈະໄຫຼລົງໜອງດ້ວງ ແລະ ນ້ຳປ່າສັກ ແລ້ວລົງໃສ່ ຮ່ອງທອງ ຫຼື ລົງ ໃສ່ຮ່ອງແຊງ.

**+ ເຂດຕົວເມືອງເກົ່າ :**

ຄຸ້ມອິນແປງ, ມີໄຊ, ອິງຕື້, ຫາຍໂສກ, ເຈົ້າອະນຸວົງ, ຫາດດຳ, ຊຽງຍືນ ນ້ຳເສຍ ແລະ ນ້ຳຝົນຈະໄຫຼຕາມຮ່ອງທາງລົງໄປຕາມທໍ່ລອດຖະໜົນຂຸນບູລົມ ລົງໃສ່ ຮ່ອງທອງ, ລອດຕະຫຼາດ ເຊົ້າໄປຕາມ ໜອງຈັນ ລຽວລົງໃສ່ຮ່ອງແກ ລົງໃສ່ບຶງທາດຫຼວງ.

ແຕ່ຄຸ້ມວັດສີສະເກດ, ມະໂຫສົດ, ສີເມືອງ, ເພຍວັດ ນ້ຳຝົນຈະໄຫຼລົງໄປສູ່ຮ່ອງຄູວຽງ ແລ້ວໄຫຼລົງໄປ ອອກ ປາກຫ້ວຍຂາວ.

ຄຸ້ມທາດຂາວ, ຄຸ້ມພະໄຊ, ບຶງຂະຫຍອງ ນ້ຳຝົນຈະໄຫຼລົງໃສ່ ບຶງຂະຫຍອງ, ເມື່ອນ້ຳຝົນຫຼາຍ ມັນຈະລົ້ນອອກໄປລົງໃສ່ນ້ຳຂອງຕາມທຳມະຊາດ. ຖ້ານ້ຳຂອງຂຶ້ນ ມັນຈະໄຫຼລົງ ໃສ່ຮ່ອງຄູວຽງ ກັບໄປອັ່ງຢູ່ໜອງຈັນ ແລ້ວໄປຮ່ອງແກລົງໃສ່ບຶງ ທາດຫຼວງ.

\+ ເຂດຕາເວັນອອກ ແຕ່ບ້ານໂພນສະຫວັນ ເຖິງໂສກປ່າຫຼວງ ນ້ຳຝົນຈະໄຫຼ ລົງໃສ່ຮ່ອງຄູວຽງ, ສ່ວນບ້ານໂພນທັນ, ໂພນປ່າເປົ້າ, ທົ່ງກາງ ນ້ຳຝົນຈະໄຫຼລົງໃສ່ບຶງທາດຫຼວງ ໂດຍກົງ. ຄຸ້ມສະພານທອງ, ບ້ານໂພນສະຫວັນເໜືອ, ໂພນທັນໃຕ້, ທົ່ງກາງໃຕ້ ນ້ຳຈະໄຫຼລົງ ໃສ່ຮ່ອງອ້ວຍລ້ວຍ ແລະ ຮ່ອງໂພນທັນ ລົງໃສ່ຮ່ອງແກ.

\+ ເຂດບ້ານທາດຫຼວງ, ໜອງບອນ, ສີສັງວອນ ນ້ຳຝົນຈະໄຫຼລົງໄປແບບທຳມະຊາດ ສ່ວນໃຫຍ່ໄຫຼລົງໃສ່ບຶງທາດຫຼວງ, ສ່ວນໜຶ່ງ ໄຫຼລົງໃສ່ຮ່ອງແຊງ ອີກສ່ວນໜຶ່ງ ຈະໄຫຼລົງໃສ່ ໜອງ ບອນ ແລ້ວໄຫຼໄປຕາມທຳມະຊາດຈົນຮອດຮ່ອງແຊງ ຫຼັງໂພນເຄັງ.

ຢູ່ວຽງຈັນມີປະຕູນ້ຳ ປິດ-ເປີດໄດ້ຢູ່ ນ້ຳປ່າສັກ 2 ແຫ່ງ, ຢູ່ປາກຫ້ວຍຂາວ 1 ແຫ່ງ ແລະ ຫ້ວຍເດື່ອ 1 ແຫ່ງ.

*ຕາມແຜນທີ່ຊີ້ນຳຂອງ BCEOM ປີ 1960 ສະເໜີໃຫ້ :*

- ປັບປຸງຄັນຄູອ້ອມວຽງຈັນຕື່ມ ແລະ ສ້າງຄັນຄູໃໝ່.
- ປັບປຸງຮ່ອງລະບາຍນ້ຳແບບທຳມະຊາດ ເຊັ່ນ : ຮ່ອງທອງ, ຮ່ອງຄູວຽງ, ຮ່ອງແກ, ຮ່ອງອ້ວຍລ້ວຍ, ຮ່ອງໂພນທັນ, ຮ່ອງແຊງ ແລະ ຮ່ອງອື່ນໆ... ທີ່ມີມາແລ້ວ.
- ແບ່ງເຂດຮັບນ້ຳຝົນຕາມລະດັບສູງ-ຕ່ຳຂອງດິນ.

- ສ້າງລະບົບຮ່ອງລະບາຍນ້ຳອີກ.
- ຖົມບຶງຂະຫຍອງ, ຂຸດດິນ ແລະ ເດີ່ນກິລາ ຖ້າເປັນໄປໄດ້.

ແຕ່ຄຳສະເໜີດັ່ງກ່າວ ຍັງເປັນ ເຈ້ຍກະດາດຢູ່ຈົນເຖິງປີ 1990 ຈຶ່ງໄດ້ມີການເໜັງຕີງມາແດ່.

▪ **ນ້ຳຖ້ວມວຽງຈັນປີ 1966 ແລະ ປີ 1971**

ເປັນເຫດການປະຫວັດສາດໜຶ່ງ ທີ່ໄດ້ນຳຄວາມເສຍຫາຍ ຢ່າງຫຼວງຫຼາຍ ມາໃຫ້ປະເທດຊາດ ແລະ ປະຊາຊົນ ໃນນະຄອນຫຼວງວຽງຈັນ, ຍ້ອນລັດຖະບານ ບໍ່ໄດ້ເອົາໃຈໃສ່ຕໍ່ການເຕືອນຂອງນັກວິຊາການ.

ກ່ອນປີ 1966 ຄັນຄູອ້ອມວຽງຈັນມີພຽງລະດັບ 12.00 ແມັດ ໂດຍສະເລ່ຍເທົ່ານັ້ນ, ແຕ່ເໜືອເກົ້າລ້ຽວຂຶ້ນໄປ ພັດບໍ່ມີຄັນຄູຊ້ຳ. ລະດັບນ້ຳຂອງຂຶ້ນປີ 1966 ແມ່ນ 12.71 ແມັດ ( ຊຶ່ງເທົ່າກັບລະດັບ13.71ແມັດໃນລະບົບວັດແທກລະດັບນ້ຳປະຈຸບັນ) ຈຶ່ງເຮັດໃຫ້ໝົດ ນະຄອນຫຼວງ ວຽງຈັນ ແລະ ເຂດອ້ອມແອ້ມ ຖືກນ້ຳຖ້ວມເຕັມໄປໝົດ, ນ້ຳຂອງໄດ້ລົ່ງເຂົ້າທາງເກົ້າລ້ຽວ ກ່ອນຈະລົງມາເຂົ້າເດີ່ນບິນວັດໄຕ ແລ້ວລົງມາໃສ່ຄຸ້ມໜອງດ້ວງ, ຈາກນັ້ນ ແບ່ງເປັນ 2 ສາຍ, ສາຍໜຶ່ງໄຫຼລົງໃສ່ນ້ຳປ່າສັກລົງມາຮ່ອງທອງ, ທັດສະດີ, ຕະຫຼາດເຊົ້າ ໄປຕາມໜອງຈັນລົງໃສ່ ສາລາແດງ, ໂພນສະຫວັນ ໄປອອກປາກຫ້ວຍຂາວ ແລະ ທ່າເຮືອຫຼັກ 4. ສ່ວນອີກສາຍໜຶ່ງ ກໍ່ໄຫຼໄປຮ່ອງຄ້າ, ທົ່ງຂັນຄຳ, ທົ່ງຕູມ ໄປລົງໃສ່ຮ່ອງແຊງໄປເຂົ້າບຶງທາດຫຼວງ ແລະ ສ່ວນໜຶ່ງໄຫຼໄປຫ້ວຍໝາກຮຽວແລ້ວອອກແມ່ນ້ຳຂອງ.

ແຕ່ອີກດ້ານໜຶ່ງ ເມື່ອລະດັບນ້ຳຂອງສູງຂຶ້ນເລື້ອຍໆ ຄັນຄູຕ້ານນ້ຳແຄມຂອງ ກໍ່ຮັບບໍ່ໄດ້ຈຶ່ງເຮັດໃຫ້ ໝົດຕົວເມືອງວຽງຈັນຈົມຢູ່ໃຕ້ນ້ຳເປັນເວລາ 1 ອາທິດ. ເພາະລະດັບຄວາມສູງ ຂອງພື້ນທີ່ເມືອງວຽງຈັນ ແມ່ນຢູ່ໃນລະດັບ168-170ມ ສູງກວ່ານ້ຳທະເລ. (ຕະຫຼາດເຊົ້າມີລະດັບ170ມ, ໃນເມືອງເກົ່າມີລະດັບ168ມ, ບ້ານຝາຍ:171ມ ສູງກ່ວາລະດັບນ້ຳທະເລ). ສ່ວນລະດັບນ້ຳຂອງຂຶ້ນເວລານັ້ນແມ່ນ171.10ມ. ຖ້າເບິ່ງຮູບ ທາງອາກາດແລ້ວ ຈະມີບາງກຸ່ມບ້ານ (ຊື່ ໂພນ ຫຼື ໂນນ) ບໍ່ໄດ້ຖືກນ້ຳຖ້ວມ ເຊັ່ນ: ບ້ານໂພນເຄັງ, ໂພນສະອາດ, ຄຸ້ມບ້ານທາດຫຼວງ, ຄຸ້ມປະຕູໄຊ ນາໄຮ່ດຽວ, ບ້ານໂພນທັນ, ສະພານທອງ, ໂນນປ່າເປົ້າ ແລະ ໂພນ ອື່ນໆ ຈຶ່ງເກີດມີຫຼາຍດອນອ້ອມນະຄອນຫຼວງວຽງຈັນຢູ່ໃນເວລານັ້ນ.

ໃນປີ 1971 ກໍ່ປະສົບກັບນ້ຳຖ້ວມເມືອງວຽງຈັນອີກ ໃນລະດັບທີ່ຕ່ຳກວ່າປີ 1966 ປະມານ 60 ເຊັນ, ນ້ຳໄດ້ ຖ້ວມຫຼາຍເຂດໃນທີ່ຕ່ຳອີກ ເປັນຕົ້ນເດີ່ນບິນ, ໜອງດ້ວງ, ສີໄຄ, ວັດໄຕ, ບຶງຂະຫຍອງ, ໂພນສະຫວັນ, ສວນມອນ, ພັນໝັ້ນ, ທາງ 13 ໃຕ້ ແລະ ແຫ່ງອື່ນໆອີກ.

# ນ້ຳຖ້ວມວຽງຈັນປີ 1966



ໃນປີ ຄສ 1966 ນະຄອນຫລວງວຽງຈັນຖືກນ້ຳຖ້ວມ(ປະຕູໄຊ).



ນ້ຳຖ້ວມຕະຫຼາດເຊົ້າປີ 1966(ນີ້ແມ່ນ ອາຄານອອກແບບແລະຊີ້ນຳກໍ່ສ້າງ ໂດຍ ສະເດັດເຈົ້າ ສຸວັນນະພູມາ )



ເດີ່ນບິນວັດໄຕ ວັນທີ 5 ກັນຍາ 1966 (ລະດັບນ້ຳສູງສຸດ)



ຖະໜົນລ້ານຊ້າງ ໃນວັນທີ 5 ກັນຍາ ປີ 1966 (ລະດັບນ້ຳສູງສຸດ)

ໃນລະຫວ່າງປີ 1976-1990 ຄັນຄູຕ້ານນ້ຳຖ້ວມໄດ້ເສີມຂຶ້ນ 2 ຄັ້ງ ຈາກ 13.00 ແມັດ ເປັນ 13.50 ແມັດ ແລ້ວຕໍ່ມາ ເປັນ 13.70 ແມັດ ໂດຍສະເລ່ຍ ແຕ່ນ້ຳຂອງຂຶ້ນໃນປີ 2008 ນີ້ແມ່ນໃນລະດັບ13.68ແມັດ. ໂດຍຣູ້ລ່ວງໜ້າທາງລັດຖະບານ ແລະປະຊາຊົນວຽງຈັນຈຶ່ງຊຸ້ນຊ້ຽວເສີມຄັນຄູຂຶ້ນອີກປະມານ 0,80ແມັດດ້ວຍກະເປົາຊາຍຈຶ່ງຕ້ານທານນ້ຳຖ້ວມວຽງຈັນໄດ້.

**5.8.ສະຖາປັດຕະຍະກຳ**

☐ **ຕຶກທາງຣາຊະການ :**

ຕຶກທາງຣາຊະການທີ່ປຸກຂຶ້ນໃໝ່ນັ້ນ ສ່ວນຫຼາຍແມ່ນຄົນລາວອອກແບບເອງ ຍົກເວັ້ນ ຕຶກກະຊວງປ້ອງກັນປະເທດ ແລະ ຫໍຄຳ ຊຶ່ງເອົາແບບມາຈາກຕ່າງປະເທດ. ຕຶກປຸກໃໝ່ນີ້ ສ່ວນຫຼາຍ ຈະຄ້າຍຄືກັນເຊັ່ນ: ເປັນອາຄານ 3-5 ຊັ້ນ, ໂຄງສ້າງ ເປັນເບຕົງເສີມເຫຼັກໝົດ, ມີຂັ້ນ ໄດຢູ່ທາງກາງ, ແຕ່ລະຊັ້ນ ສູງປະມານ 3.5-3.7ແມັດ ແລ້ວ ຊັ້ນເປັນຫ້ອງໆໄປ, ມີຫ້ອງປະຊຸມ, ຫ້ອງການ, ສາງ ແລະ ຫ້ອງນ້ຳທຸກໆ ຊັ້ນ, ວົງກົບ ແລະ ບານປະຕູ ປ່ອງຢ້ຽມ ເຮັດດ້ວຍໄມ້, ປ່ອງຢ້ຽມ ໃສ່ແກ້ວ, ສ່ວນຫຼາຍຫ້ອງການ ແມ່ນບໍ່ມີຕາໜ່າງກັນຍຸງ. ເພື່ອບັງແດດ ແລະ ຝົນ ຈຶ່ງມີກັນສາດ ລະຫວ່າງ ປ່ອງຢ້ຽມ ແລະ ຫ້ອງຕ່າງໆ ດັ່ງຕຶກ ກະຊວງສຶກສາທິການ, ກະຊວງພະລັງງານ ເປັນຕົ້ນ.

ຕຶກຫຼາຍຫຼັງ ກໍ່ໃສ່ຊ່ອງລົມ ຫຼື ຊ່ອງຮັງເຜິ້ງກັນແດດ ເຊັ່ນ: ກະຊວງໄປສະນີ ໂທລະຄົມມະນາຄົມ, ກະຊວງການເງິນ, ຄັງເງິນ, ມະຫາວິທະຍາໄລ ແພດສາດ,ໂຮງໝໍມະໂຫສົດຕຶກໃໝ່ ແລະ ອື່ນໆ.. ຕຶກກະຊວງປ້ອງກັນປະເທດ ມີ 3 ຊັ້ນ ຍາວປະມານ 150 ແມັດ, ທາງໜ້າຕຶກ ປະຕູເຂົ້າມີຂັ້ນໄດ ແລະ ມີເສົາໃຫຍ່ 4 ເສົາສູງ ແບບໂຣແມັງຕັ້ງຢູ່ຢ່າງງົດງາມ. ຕຶກນີ້ເຮັດດ້ວຍຫີນອ່ອນທັງນັ້ນ, ຖືວ່າເປັນຕຶກຫຼັງທຳອິດຂອງລາວ ທີ່ເຮັດດ້ວຍຫີນອ່ອນ. ຕຶກທາງຣາຊະການນີ້ ສ່ວນຫຼາຍຈະບໍ່ມີການສະແດງດອກດວງ ຫຼື ບົວ ແບບຕຶກອານານິຄົມ ແມ່ນການອອກແບບງ່າຍໆ ເບິ່ງສະບາຍຕາ ແຕ່ຍັງຮັກສາເອກະລັກຂອງສິລະປະລາວໄວ້ຢູ່ ເຊັ່ນ ຕຶກກະຊວງການເງິນ ຕຶກຄັງເງິນ ຕຶກກະຊວງມະຫາດໄທ ເປັນຕົ້ນ.

24/7 ห้ามจำหน่าย

☐ **ເຮືອນຂອງພົນລະເຮືອນ :**

+ **ເຮືອນວິລາ** : ແມ່ນເຮືອນຊັ້ນດຽວ ບໍ່ມີລວດລາຍຫຍັງຫຼາຍ, ແບບງ່າຍໆ ແຕ່ມີຫຼັງຄາຊັບຊ້ອນກັນໄປມາ ເຫັນວ່າເປັນສິລະປະງາມແບບໃດແບບໜຶ່ງ. ໜ້າປະຕູເຂົ້າເຮືອນຈະມີລະບຽງບັງແດດ ແລະ ຝົນ ເຮັດດ້ວຍເພດານເບຕົງ ຫຼືບໍ່ ກໍ່ມຸງດ້ວຍກະເບື້ອງຍື່ນອອກມາ, ພາຍໃນເຮືອນມີຫ້ອງຮັບແຂກ, ມີ 2-3 ຫ້ອງນອນ ແລະ ຫ້ອງນ້ຳ. ສ່ວນເຮືອນຄົວ ແລະ ຫ້ອງແມ່ບ້ານນັ້ນ ແມ່ນປຸກຫຼັງນ້ອຍຕ່າງຫາກໃສ່ເບື້ອງຫຼັງບ້ານ ຈະຊັ້ນເປັນ 2-3 ຫ້ອງ. ວັດສະດຸຊັ້ນຫ້ອງ ແມ່ນດິນຈີ່ ຫຼືດິນບະລັອກ. ປະຕູປ່ອງຢ້ຽມເຮັດດ້ວຍໄມ້ ແລະ ມີຕາໜ່າງກັນຍຸງກັນຂະໂມຍພ້ອມ ແລະມີກັນສາດຢູ່ເທິງ. ບາງຫຼັງ ກໍ່ໃສ່ປ່ອງຢ້ຽມແກ້ວ, ບານທຳມະດາ ຫຼືແປກຊ່ຽມ. ໂຄງຮ່າງຫຼັງຄາເຮັດດ້ວຍໄມ້ແລ້ວມຸງກະເບື້ອງ, ສ່ວນເພດານແມ່ນໄພເບີ້ (ແຜ່ນເບຕົງຢຽບແໜ້ນ) ພາຍໃນເຮືອນ ໄດ້ໃຊ້ພັດລົມລະບາຍຄວາມຮ້ອນ, ມາຮອດຊຸມປີ 1970 ຈຶ່ງເກີດມີແອເຢັນ ເຂົ້າມາໃຊ້ຫຼາຍ.

## ຮູບແບບເສົາເຮືອນຕ່າງໆ ໃນສະໄໝຣາຊະອານາຈັກລາວ


ເສົາຫຼ່ຽມດ່ຽວ


ເສົາຫຼ່ຽມຄູ່


ເສົາຫຼ່ຽມແຝດ 3


ເສົາຫຼ່ຽມແບບ ໂຕ V


ເສົາກົມ ແລະ ບົວ


ບົວເທິງເສົາກົມ


ບົວຫົວເສົາ


ບົວຫົວເສົາ


ບົວຕີນເສົາ

# ລະບຽງເຮືອນແບບຕ່າງໆ



ລະບຽງຊັ້ນ 2 ເທິງປະຕູເຂົ້າເຮືອນ



ລະບຽງຊັ້ນ 2 ມີພະນັກເປັນເຫຼັກຮູບ ໂຕ S



ມີລະບຽງຊັ້ນ 2 ອ້ອມເຮືອນທັງ 2 ດ້ານ



ພະນັກເປັນໂຄງເຫຼັກສຳເລັດຮູບ



ພະນັກ ເປັນຮູບຫູ່ເບຕົງເສີມເຫຼັກ



ພະນັກ ເປັນຮູບຫູ່ເບຕົງອີກແບບໜຶ່ງ



ເງີບກັ້ງທາງເຂົ້າເຮືອນແບບຫຼັງຄາພຽງ



ເງີບກັ້ງທາງເຂົ້າເຮືອນ ແບບຮ່ອງສັງກະສີ



ສ້າງລະບຽງໃສ່ຊັ້ນ 2 ເພື່ອ ບັງແດດ ແລະ ຝົນ



ໃສ່ກັນສາດບັງແດດ ແລະ ລົມ ອ້ອມປ່ອງຢ້ຽມ



ແບບໜຶ່ງຂອງປ່ອງຢ້ຽມທີ່ມີກັນສາດ



ແບບໜຶ່ງຂອງປະຕູໃຫຍ່

ໜ້າບ້ານມີສວນກ້ວາງ, ປູກຫຍ້າ ແລະ ດອກໄມ້ ເພາະຄົນສ່ວນຫຼາຍ ມັກສະຫງົບສຽງ ແລະ ຢູ່ໄກຂີ້ຝຸ່ນ ຈຶ່ງປຸກເຮືອນໄກຖະໜົນແດ່.

**+ ເຮືອນສອງຊັ້ນ ຫຼື ເຮືອນລາວແບບໃໝ່**: ເບິ່ງລວມແລ້ວ ການຈັດວາງພາກສ່ວນພາຍໃນເຮືອນ ກໍ່ບໍ່ຕ່າງຫຍັງກັບເຮືອນວິລາຊັ້ນດຽວ. ຊັ້ນລຸ່ມມີຫ້ອງໂຖງເພື່ອຮັບແຂກ, ມີ 1 ຫ້ອງນອນ ແລະ ຫ້ອງນ້ຳ, ສ່ວນຊັ້ນທີ 2 ຈະມີຫ້ອງນອນຫຼາຍກວ່າ, ເທິງປະຕູເຂົ້າ ຈະມີລະບຽງ (Balcon) ເພື່ອຊົມວິວ, ໃຊ້ບັງແດດ ແລະ ຝົນໃຫ້ປະຕູຊັ້ນລຸ່ມ. ພາຍໃນມີການ ລະບາຍຄວາມຮ້ອນດ້ວຍພັດລົມ ຫຼື ອາຍເຢັນ. ສ່ວນຫຼັງຄາ, ເພດານ, ປະຕູປ່ອງຢ້ຽມ ຈະເປັນແບບດຽວກັນກັບເຮືອນວິລາ ມີກັນສາດຢູ່ເບື້ອງເທິງ. ກ້ອງລະບຽງຕໍ່ໜ້າປະຕູເຂົ້າ ມີການສະແດງເສົາກົມຕິດບົວແບບລາວໆຢູ່ຫົວ ແລະຕີນເສົາ. ບາງຫຼັງກໍ່ມີການສະແດງ ເສົາສີ່ຫຼ່ຽມ ແບບງ່າຍໆ. ສ່ວນເດີ່ນບ້ານກໍ່ຈະເປັນສວນຫຍ້າ, ສວນດອກໄມ້, ມີຮົ້ວ ກຳແພງແບບຊ່ອງລົມອ້ອມບ້ານ, ປະຕູບ້ານເຮັດດ້ວຍໂຄງເຫຼັກແບບດຽວກັນກັບເຮືອນ ວິລາ ຊັ້ນດຽວ, ເຮືອນ 2 ຊັ້ນນີ້ຈະໃຫຍ່ ຫຼື ນ້ອຍ, ຈະສູງ ຫຼື ຕ່ຳ ຂຶ້ນກັບຄວາມມັ່ງມີຂອງ ເຈົ້າຂອງເຮືອນ ສ່ວນຫຼາຍຈະແມ່ນຜູ້ມີຖານະແດ່.

☐ **ເຮືອນຫ້ອງແຖວ** : ກໍ່ປຸກເປັນຫຼາຍຫ້ອງລຽນກັນ ແຕ່ໃຊ້ເສົາ ແລະ ຄານເບຕົງເສີມເຫຼັກເປັນບ່ອນຮັບນ້ຳໜັກແທນຝາກໍ່ໃນເມື່ອກ່ອນ. ສ່ວນວັດສະດຸຊັ້ນຫ້ອງນັ້ນແມ່ນ ດິນຈີ່ ແລະ ດິນບະລັອກ, ໃນໄລຍະນີ້ວັດສະດຸກໍ່ສ້າງໄດ້ຫັນມາໃຊ້: ຊີມັງ, ເຫຼັກ, ໄມ້, ແຮ່, ຊາຍ, ແລະ ສິ່ງນຳເຂົ້າສຳເລັດຮູບ ເຊັ່ນ : ກະເບື້ອງ, ສັງກະສີ, ໄຟເບີ້, ກາໂລ, ເຄື່ອງສຸຂະພັນ ແລະ ອື່ນໆ... ເຮືອນແຖວຈະປຸກເປັນຍ່ານໆ ມາແຕ່ວັດໄຕ ລົງມາເຖິງຖະໜົນຂຸນບູລົມ, ສ່ວນຢູ່ຖະໜົນ ເຊດຖາທິລາດ, ສາມແສນໄທ, ລ້ານຊ້າງ, ອ້ອມຕະຫຼາດເຊົ້າຕຶກຈະບຽດກັນຢູ່, ສ່ວນແລວຂອງ ຫຼັງຄາບໍ່ໄດ້ຮັກສາຕາມຮີດເດີມແລ້ວ ຄືປິ່ນສີໜ້າໄປຫາຖະໜົນ ເປັນສ່ວນໃຫຍ່. ຕຶກຫຼາຍຫຼັງກໍ່ບໍ່ມີສີໜ້າແລ້ວ ເປັນເຮືອນແຖວຫຼັງຄາພຽງ ປູເບຕົງກັນຊຶມ ເພື່ອໃຊ້ເຮັດງານສ້າງສັນ, ເຮັດບຸນ,ງານກິນລ້ຽງ, ປູກດອກໄມ້ໃສ່ ຫຼື ເປັນບ່ອນພັກຜ່ອນ. ເທິງປະຕູປ່ອງຢ້ຽມກໍ່ມີກັນສາດ, ປະຕູ ປ່ອງຢ້ຽມເຮັດດ້ວຍໄມ້, ມີກັນຂະໂມຍ ແລະ ກັນຍຸງພ້ອມ. ຊັ້ນລຸ່ມຈະເປັນຮ້ານ ຂາຍຂອງ, ຮ້ານອາຫານ, ຫ້ອງການທຸລະກິດ . . ສ່ວນຊັ້ນເທິງຈະເປັນຫ້ອງນອນ.

☐ **ເຮືອນປະຊາຊົນທົ່ວໄປ** : ຍັງຮັກສາແບບເດີມ ເຊັ່ນ: ເຮືອນເສົາຕັ້ງ, ມີຮ້ານ ມີເຊຍ, ຮ້ານໄຫ້ວພະ, ຫ້ອງນອນ, ຊານ, ເຮືອນຄົວ (ສ່ວນວິດ ແລະ ຫ້ອງນ້ຳຈະຢູ່ຊັ້ນລ່າງ), ຫຼືປຸກຕ່າງຫາກຖ້າມີດິນກ້ວາງ. ເຮືອນທີ່ສ້າງດ້ວຍໄມ້ ແລະ ມຸງສັງກະສີ ກໍ່ຍັງມີໃຫ້ເຫັນຢູ່ຫຼາຍຕາມເມືອງເກົ່າ ແລະ ສ່ວນຫຼາຍຈະຢູ່ຊານເມືອງ ບາງຫຼັງກໍ່ຫັນມາມຸງດ້ວຍກະເບື້ອງແລ້ວ. ຈາກນັ້ນ ເສົາກໍ່ປ່ຽນມາເປັນເສົາເບຕົງເສີມເຫຼັກ ເພື່ອຄວາມໝັ້ນຄົງ ແລະ ກັນປວກ, ຕໍ່ມາກ້ອງລ່າງໄດ້ກໍ່ຝາດ້ວຍດິນຈີ່ ຫຼື ດິນບະລັອກ ເຮັດໃຫ້ຊັ້ນລຸ່ມ ຢູ່ໄດ້ອີກຕື່ມ.

ສ່ວນຢູ່ຕາມທຽງນາ ຫຼື ເຮືອນຜູ້ຍາກຈົນນັ້ນ ຍັງແມ່ນຕູບມີເສົາຕັ້ງ, ຝາໄມ້ເຮັຍ, ມຸງຫຍ້າ ຫຼື ສັງກະສີ.

☐ **ຕະຫຼາດ**: ຕະຫຼາດເຊົ້າໄດ້ກາຍເປັນຕະຫຼາດກາງເມືອງ ຕົ້ນຕໍ ທີ່ກ້ວາງຂວາງຫຼາຍ

ເພາະ ຂາຍທັງສິນຄ້າອຸດສະຫະກຳ ແລະ ກະສິກຳ, ສິນຄ້າອຸດສະຫະກຳນັ້ນ ຈະຂາຍເປັນຫ້ອງໆ ຊຶ່ງເປັນສິ່ງກໍ່ສ້າງທີ່ຖາວອນແດ່ ຫຼື ເປັນຮ້ານຕ່ຳມຸງດ້ວຍສັງກະສີ ກະຈາຍອ້ອມ ຕຶກໃຫ່ຍ ເປັນແຖວໄປ. ສ່ວນແມ່ຄ້າຂາຍເຄື່ອງກະສິກຳນັ້ນ ແມ່ນນັ່ງອ້ອມຮ້ານຄ້າຂາຍ ເຄື່ອງອຸດສະຫະກຳ, ການວາງຂາຍກໍ່ເປິະເປື້ອນຫຼາຍ ບໍ່ຄ່ອຍມີຜູ້ເອົາໃຈໃສ່ ໃນຄວາມສະອາດປານໃດ ຍັງປະໄປຕາມມີຕາມເກີດ.

\+ ຕະຫຼາດແລງ : ໄດ້ເກີດຂຶ້ນຫຼາຍແຫ່ງ ເຊັ່ນ: ໜອງດ້ວງ ມີເຮືອນກໍ່ແບບຖາວອນ, ສ່ວນຕະຫຼາດສີໄຄ, ທາດຫຼວງ, ສີເມືອງ, ດົງປ່າລານ ແລະ ສວນມອນນັ້ນ ຍັງເປັນເຮືອນຊົ່ວຄາວເສົາໄມ້ມຸງສັງກະສີ, ບໍ່ມີຫ້ອງຂາຍເຄື່ອງ, ຈະມີຮ້ານວາງຂາຍເຄື່ອງ ອຸດສະຫະກຳ. ສ່ວນເຄື່ອງກະສິກຳຈະແຍກຕົວຢູ່ຕ່າງຫາກ ໂດຍບໍ່ມີຫຼັງຄາບັງຮົ່ມ, ແມ່ຄ້າໃຊ້ພຽງຄັນຮົ່ມບັງແດດ ບັງຝົນເທົ່ານັ້ນ. ພື້ນຕະຫຼາດກໍ່ບໍ່ປູຊີມັງຊ້ຳ ຍາມຝົນກໍ່ມີຂີ້ຕົມ ເປິະເປື້ອນ, ຍາມແລ້ງກໍ່ມີຂີ້ຝຸ່ນ.

☐ **ສັງລວມການປຸກສ້າງເຄຫາສະຖານ :**

ແຕ່ປີ 1961 ມາ ນະຄອນຫຼວງວຽງຈັນ ໄດ້ກາຍເປັນກຳແພງນະຄອນ ທີ່ມີເຈົ້າຄອງ ແລະເປັນເມືອງໃຫ່ຍໜຶ່ງທີ່ປົກຄອງຕົນເອງ ຂຶ້ນກັບລັດຖະບານໂດຍກົງ.

ການປຸກສ້າງໃນໄລຍະນີ້ແມ່ນມີຫຼາຍ, ນອກຈາກຕຶກຂອງທາງຣາຊະການແລ້ວ.CH.Taillard ໄດ້ສຳຫຼວດໃນ ປີ 1973 ແລະໄດ້ຈັດເຮືອນເປັນແຕ່ລະປະເພດ ດັ່ງລຸ່ມນີ້ :

**ປະເພດເຄຫາສະຖານຢູ່ນະຄອນວຽງຈັນປີ 1973**

| ລ/ດ | ປະເພດເຄຫາ | ຈຳນວນຫຼັງເຮືອນ | | ຈຳນວນປະຊາກອນ | |
|---|---|---|---|---|---|
| | | ຈຳນວນຫຼັງ | % | ຈຳນວນຄົນຢູ່ | % |
| 1 | ເຮືອນແບບລາວເດີມ | 11,504 | 50.6 | 76,523 | 43 |
| 2 | ເຮືອນແບບລາວໃໝ່ | 3,332, | 14.6 | 27,988 | 15.8 |
| 3 | ວິລາ(ເຮືອນກໍ່ 1-2 ຊັ້ນ) | 1,053 | 4.6 | 7,358 | 4.1 |
| 4 | ຫ້ອງແຖວ | 2,590 | 11.4 | 31,312 | 17.7 |
| 5 | ເຮືອນເຄິ່ງຖາວອນ | 3,378 | 14.8 | 26,386 | 14.8 |
| 6 | ເຮືອນປຸກແບບກະທັນຫັນ | 702 | 3.1 | 3,686 | 1.8 |
| 7 | ປຸກບໍ່ທັນເປັນທີ່ພັກ | 95 | 0.4 | 909 | 0.5 |
| 8 | ເຮືອນລວມ | 117 | 0.5 | 4,190 | 2.3 |
| | **ລວມ** | **22,771** | **100** | **178,352** | **100** |

**ໝາຍເຫດ** :-ເຮືອນເຄິ່ງຖາວອນ ແມ່ນຮ້ານຄ້າ ແລະ ທີ່ຢູ່ຂອງຊາວຄ້າຂາຍ ທີ່ປຸກອ້ອມຕະຫຼາດເຊົ້າ, ຕະຫຼາດແລງ ແລະ ຂົວດິນ.

- ເຮືອນປຸກແບບກະທັນຫັນ ແມ່ນເຮືອນຊົ່ວຄາວ ປຸກເພື່ອຕ້ອນຮັບພວກອົບພະຍົບ.

## IV. ສະຫຼຸບສັງລວມ

ພາຍຫຼັງ ຈັກກະພັດ ອາເມລິກາ ໄດ້ເຂົ້າມາຊ່ວຍເຫຼືອ ຣາຊະອານາຈັກລາວ ເປັນເວລາ 21 ປີ ມານັ້ນ ກໍ່ເປັນທີ່ຈະແຈ້ງ ແລະ ຢືນຢັນອີກຄັ້ງໜຶ່ງວ່າ ຈຸດປະສົງຂອງເຂົາ ແມ່ນເອົາດິນລາວ ເປັນສະໜາມຮົບຕ້ານຢັນກັບຄ້າຍສັງຄົມນິຍົມ ແລະ ປາບຂະບວນການຮັກຊາດ ຂອງປະຊາຊົນອິນດູຈີນ. ສະນັ້ນກ້ອນເງິນຊ່ວຍເຫຼືອຢ່າງມະຫາສານນັ້ນ ກໍ່ສຸມໄປເຮັດສົງຄາມຫຼາຍກ່ວາ ການສ້າງສາປະເທດລາວນັບເປັນພັນເທົ່າ.

ຈັກກະພັດ ອາເມລິກາ ໄດ້ຄຸລັດຖະບານລາວ ທາງດ້ານການເມືອງ ການທະຫານ ແລະ ຄວາມປອດໄພພາຍໃນ ເປັນຕົ້ນຕໍ, ໄລ່ນາຍົກ ແລະ ລັດຖະບານ ທີ່ມີທ່າອ່ຽງໄປສັນຕິພາບ ແລະ ເປັນກາງ, ປັ້ນລັດຖະລານຫຸ່ນ, ສ້າງກອງທັບ, ກອງຕຳຫຼວດ, ເຈົ້າແຂວງ, ເຈົ້າເມືອງ ໃຫ້ປະຕິບັດຕາມແນວທາງສົງຄາມຂອງເຂົາ. ເຂົາບໍ່ສົນກັບການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳ ບໍ່ໜຳຍັງນຳເອົາສັງຄົມ ແລະ ວັດທະນະທຳ ອັນຫຼ້າຫຼັງ ເຂົ້າມາຂະຫຍາຍຢູ່ໃນເມືອງລາວອີກ.

ພື້ນຖານໂຄງລ່າງໃນເທດສະບານ ບໍ່ໄດ້ບູລະນະຄືນ ຖະໜົນບໍ່ໄດ້ມາດຕະຖານ ທາງຊອຍກໍ່ຄັບແຄບ ທັງເປື້ອນ ທາງໄປຊານເມືອງກໍ່ຄົດລ້ຽວ ຍາມຝົນໄປມາກໍ່ຍາກ, ການປຸກສ້າງປ່ອຍໄປຕາມເສລີ ເກີດມີເຂດຊຸມຊົນ ແອອັດ ເປິະເປື້ອນ, ບໍ່ໄດ້ເອົາໃຈໃສ່ຕໍ່ ລະບົບອຸປະໂພກບໍລິໂພກ : ໂຮງໝໍ ມີໜ້ອຍຄັນຄູຕ້ານນ້ຳຖ້ວມຕ່ຳເກີນໄປ ຈຶ່ງເກີດມີນ້ຳຂອງຖ້ວມເມືອງວຽງຈັນ ໃນປີ 1966 ; ຮອດປີ 1964 ຈຶ່ງມີນ້ຳປະປາໃຊ້ ຮອດ, ປີ 1972 ຈຶ່ງມີໄຟຟ້າໄຕ້ທົ່ວເມືອງ, ທາງດ້ານເສດຖະກິດ ຍິ່ງຊຸດໂຊມ ການຄ້າມີແຕ່ຂາເຂົ້າ ງົບປະມານຂາດດຸນ ຕ້ອງເພິ່ງພາອາໄສແຕ່ການຊ່ວຍເຫຼືອຂອງ ສະຫະລັດ ອາເມລິກາ ມາເລື້ອຍໆ.

ເຖິງແມ່ນວ່າໃນໄລຍະນັ້ນ ໄດ້ມີບາງດ້ານຂະຫຍາຍຕົວດີກ່ວາ ສະໄໝເປັນຫົວເມືອງຂຶ້ນຂອງຝຣັ່ງ ກໍ່ຕາມ ເຊັ່ນ : ສ້າງໂຄງລ່າງບາງຢ່າງ, ລະບົບອຸປະໂພກ ບໍລິໂພກບາງຊະນິດ ແລະ ການສຶກສາ... ນັ້ນ ພຽງແຕ່ເປັນການປະຕິບັດນະໂຍບາຍເອົາ ລາວເປັນຫົວເມືອງຂຶ້ນແບບໃໝ່ຂອງ ຈັກກະພັດອາເມລິກາເທົ່ານັ້ນ ຫາກບໍ່ແມ່ນການພັດທະນາຕົວເມືອງຢ່າງຮອບດ້ານ ແລະ ສົມບູນແບບແຕ່ປະການໃດ.

ສ່ວນການປະຕິສັງຂອນ ປູສະນີຍະສະຖານ ແລະ ວັດວາອາຮາມນັ້ນ ແມ່ນເກີດມາຈາກຄວາມເຫຼື້ອມໃສໃນສາສະໜາພຸດຂອງປະຊາຊົນລາວເທົ່ານັ້ນ, ຫາກບໍ່ໄດ້ມາຈາກ ການຊ່ວຍເຫຼືອ ຂອງຈັກກະພັດ ອາເມລິກາ ແຕ່ປະການໃດ. ເຖິງແນວໃດກໍ່ຕາມ ເມື່ອຕີລາຄາຢ່າງສັງລວມແລ້ວ ເຫັນວ່າ : ສິ່ງທີ່ລືມບໍ່ໄດ້ກໍ່ແມ່ນການຖິ້ມລະເບີດ ເປັນ 3 ລ້ານໂຕນໃສ່ຄົນລາວ ທຳລາຍ ເຄຫາສະຖານ ບ້ານເມືອງເສັ້ນທາງຄົມມະນາຄົມ ພື້ນຖານເສດຖະກິດໃນທົ່ວເຂດປົດປ່ອຍເກົ່າ ແຕ່ເໜືອລົງຮອດໃຕ້ຈົນກັ່ງ ນັບທັງວັດວາອາຮາມ ກໍ່ບໍ່ຍັງເຫຼືອ, ອີກປະການໜຶ່ງ ປະຊາຊົນລາວໄດ້ລົ້ມຕາມ ແລະ ເສຍອົງຄະເປັນຫຼາຍແສນຄົນ ນັບທັງ 2 ຝ່າຍ, ມາຮອດດຽວນີ້ ລະເບີດທີ່ຍັງບໍ່ທັນແຕກນັບເປັນຫຼາຍໝື່ນໂຕນ ກໍ່ຍັງຈະເອົາຊີວິດຂອງຄົນລາວໄປອີກຕື່ມ ຫຼາຍພັນຄົນ.

ນີ້ແມ່ນຜົນເສຍຫາຍອັນມະຫາສານ ຈາກສົງຄາມຮຸກຮານຂອງ ຈັກກະພັດ ອາເມລິກາ ໃນປະເທດເຮົາ ທວນຄືນ ກໍ່ເພື່ອໃຫ້ລູກຫຼານລາວໄດ້ຮັບຮູ້ ແລະ ຈົດຈຳເອົາໄວ້ ຊົ່ວກາລະນານ.

ສັງລວມສິ່ງກໍ່ສ້າງຕ່າງໆໃນສະໄໝຣາຊະອານາຈັກລາວ(1954-75 ) **ເອກະສານຊ້ອນທ້າຍ 1**

| ລ/ດ | ຊື່ສິ່ງກໍ່ສ້າງ | ປີສ້າງ-ປີສຳເລັດ | ສະຖາປັດ | ວິສະວະກອນ | ບ/ສກໍ່ສ້າງ |
|---|---|---|---|---|---|
| | **I. ຕຶກຂອງລັດຖະບານ** | | | | |
| 1 | ທຳນຽບລັດຖະບານ(ກຊ ຍຸຕິທຳ) | 1954-55 | | | Angelou |
| 2 | ສະພາລາສະດອນ(ສນນາຍົກລັດຖະມຸນຕີ) | 1955-57 | | | Angelou |
| 3 | ກົມປະຊາສົງເຄາະ (ກົມບໍ່ແຮ່ດຽວນີ້) | 1961-62 | | ຊາຍຄຳ | |
| 4 | ອະນຸສາວະລີ ນັກລົບເກົ່າ | 1962-67 | ກອງຊ່າງແສງ | ກອງຊ່າງແສງ | ກອງຊ່າງແສງ |
| 5 | ກະຊວງ ເສດຖະກິດ(ກຊແຜນການ-ລົງທຶນ) | 1962-63 | | | |
| 6 | ທະນາຄານແຫ່ງລັດ (ຕຶກ 3ຊັ້ນ) | 1963-64 | ຄຳເພັດ | ຊາຍຄຳ | ເໝົາຈຸງານ |
| 7 | ອົງການໄປສະນີ –ໂທລະຄົມມະນາຄົມ | 1964-65 | ຊາຍຄຳ | ຊາຍຄຳ | ເລັ່ງອຸດອນ |
| 8 | ກຊ ໂຍທາ-ຂົນສົ່ງ(ຕຶກໂຄ້ງ2ຊັ້ນແຄມທາງ) | 1961-62 | | | |
| 9 | ກຊ ມະຫາດໄທ(ກຊປ້ອງກັນຄວາມສະຫງົບ) | 1965-70 | ແຊກວໍລະວົງສາ | ແຊກວໍລະວົງສາ | |
| 10 | ກຊ ການເງິນ (ກຊ ຕ່າງປະເທດ ດຽວນີ້) | 1966-67 | rousseau | rousseau | ປະກອບ |
| 11 | ກະຊວງ ສຶກສາທິການ | 1967-68 | lecaisne | ແສງຄຳ ພິນິດ | ຣົງວັນຮອຍ |
| 12 | ກະຊວງ ປ້ອງກັນປະເທດ | 1970-72 | ກອງຊ່າງແສງ | ກອງຊ່າງແສງ | ເລັ່ງ ອຸດອນ |
| 13 | ກະຊວງ ກະສິກຳ (ຕຶກແຄມທາງ 2ຊັ້ນ) | 1970-72 | usaid | usaid | |
| 14 | ຄັງເງິນແຫ່ງຊາດ (ກະຊວງ ການເງິນດຽວນີ້) | 1970-72 | ສົມພະຈັນ | ຄຳພູນ ວິໄຊສັກ | ເປິ້ນ |
| 15 | ກະຊວງ ອຸດສະຫະກຳ(ກຊພະລັງງານບໍ່ແຮ່) | 1970-72 | ສົມພະຈັນ | ແສງຄຳ ພິນິດ | ສີທາ |
| | **II. ສິ່ງກໍ່ສ້າງສາທາລະນະປະໂຫຍດ** | | | | |
| 1 | ນ້ຳປະປາເກົ້າລ້ຽວ | 1961-63 | | kubota | kubota |
| 2 | ຖະໜົນ ຫຼວງພະບາງ ເຂດຖາ ລ້ານຊ້າງ | 1961-63 | ກອງຊ່າງແສງ | ກອງຊ່າງແສງ | ກອງຊ່າງແສງ |
| 3 | ຖະໜົນ ທ່າເດື່ອ 20ກລມ ປູອາສະຟານ | 1962-64 | ຊ່ວຍເຫຼືອຈາ | ກ ອາເມຣິກາ | ບ/ສຍີ່ປຸ່ນ |
| 4 | ໂຮງແຮມ ລ້ານຊ້າງ | 1962-63 | ຄຳເພັດ | ຊາຍຄຳ | ເໝົາເປັນຈຸ |
| 5 | ຕຶກກົມການບິນແລະບ/ສການບິນ | 1963-65 | ຊາຍຄຳ | ຊາຍຄຳ | ເໝົາເປັນຈຸ |
| 6 | ສ້າງເດີ່ນບິນວັດໄຕ(ເບຕົງ 2000ມ) | 1964-65 | ອາເມຣິກາ | ອາເມຣິກາ | ອາເມຣິກາ |
| 7 | ນ້ຳປະປາ ໂພນເຄັງ | 1963-64 | bceom | bceom | ປະກອບ |
| 8 | ເຮືອນພັກຂ້າຣາຊະການ 4 ຫຼັງ(ບ.ຊຽງແວ່) | 1967-70 | ບຸນເພັ້ມ | ແສງຄຳ ພິນິດ | ເລັ່ງ ອຸດອນ |
| 9 | ເຂື່ອນນ້ຳງື່ມ ໃນຊ່ວງ ທີ 1<br>ກຳລັງຜະລິດ : 30 MW | 1968-71 | nippon koei | nippon koei Acres | hazama gomi hitachi |

No.1 ແຜນທີ່ ນະຄອນຫຼວງວຽງຈັນ ປີ 1958



No.2 ແຜນທີ່ ນະຄອນຫຼວງວຽງຈັນ ປີ 1961

CARTE DE VIENTIANE DE 1961



## No.3 ແຜນທີ່ ເມືອງວຽງຈັນ: ເຂດທຳມະຊາດ ແລະ ເຂດທີ່ຢູ່ອາໄສ ປີ 1962




Source : Schéma directeur de 1962

24/VH
ຫ້າມຈຳໜ່າຍ

No.4 ຄວາມໜາແໜ້ນຂອງປະຊາກອນໃນເຂດຕ່າງໆໃນວຽງຈັນ 1962

(Densités de population par secteurs en 1962)



No.5 ການກຳນົດຄວາມໜາແໜ້ນຂອງປະຊາກອນໃນຂຸມປີຂ້າງໜ້າ

(Projection des densités de population par secteurs)



No.6 ແຜນລະບາຍນ້ຳຝົນ ແລະ ນ້ຳເສຍ ໃນນະຄອນຫຼວງວຽງຈັນ (BCEOM1960)



No.7ແຜນ ຜັງທີ່ຕັ້ງຂອງໂຮງງານອຸສະຫະກຳຕ່າງໆອ້ອມແອ້ມນະຄອນຫຼວງວຽງຈັນ (1970-73)



No.8 ທີ່ຕັ້ງຂອງວັດ, ໂບດ ແລະ ວັດອິສະລາມ ໃນນະຄອນຫຼວງວຽງຈັນ



No.9 ແຜນທີ່ ນະຄອນຫຼວງວຽງຈັນ 1973-75

VIENTIANE 1973-1975, Source: CITY MAPS

CARTE: H-T No21



No.10 ວິວັດທະນາການຂອງນະຄອນຫຼວງວຽງຈັນ ແຕ່ປີ1953-61-70-75



# ເອກະສານອ້າງອີງ


1. ປະຫວັດສາດລາວຂອງກະຊວງຖະແຫຼງຂ່າວ ແລະ ວັດຖະນະທຳ ຂຽນໂດຍ ດຣ ສຸເນດ ໂພທິສານ ປີ 2000,
2. ບົດວິທະຍານິພົນ ຂອງ ດຣ ບຸນເຫຼື້ອມ ສີສຸລາດ ປີ 2002 ເປັນພາສາຝຣັ່ງໃນຫົວຂໍ້:
   ( Processus et acteurs de l' Urbanisation de la capitale de la RDPL)
   ຂະບວນວິວັດ ແລະ ຜູ້ມີສ່ວນຮ່ວມ ໃນການຫັນເປັນເທສະບານ ຂອງນະຄອນຫຼວງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ,
3. ຄວາມຊົງຈຳ ຂອງ ທ່ານ ພູມີ ວົງວິຈິດ ອະດີດ ກົມການເມືອງ ສູນກາງພັກ ພິມທີ່ ໂຮງພິມ ກະຊວງ ສຶກສາທິການ ປີ 1987,
4. ແນະນຳໃຫ້ຮູ້ປະເທດລາວ (Introduction à la connaissance du Laos) ຂອງ Henri Didier,
5. ວຽງຈັນ ຮູບໂສມຂອງເມືອງກຳລັງວິວັດທະນາ (Vientiane portrait d'une ville en mutation) ຂຽນໂດຍ ນ. ໃຈເພັດ ໄຊຍະຮາດ 2005,
6. ຣາຊະອານາຈັກລາວ ( Le royaume du Laos 1949-65) ຂຽນໂດຍ jean Deuve Paris EFEO 1984,
7. ຂະບວນ ລ ປ ລ ແລະ ການຕໍ່ສູ້ກູ້ຊາດ ຂຽນໂດຍ ອະດີດ ນ ພ ເພຍ ມີໄຊພົນ ,
8. ສະຖິຕິຂອງກະຊວງ ສຶກສາ ສິລະປະກຳ ກິລາ ແລະ ເຍົາວະຊົນ ແຕ່ ປີ 1961-73,
9. ບົດວິທະຍານິພົນ ປະຣິຍາໂທ ຂອງ ທ່ານ ຄຳເພົາ ພອນແກ້ວ (Thèse de doctorat de 3e cycle de Mr. Khamphao Phonekéo) ທີ່ ປາຣີສ ປີ 1975,
10. ບົດວິທະຍານິພົນ ປະຣິຍາໂທ ຂອງ ທ່ານ ຄຳຕັນ ຈັນທະລາ (Thèse de doctorat de 3e cycle de Mr. Khamtanh Chanthala ) ທີ່ ປາຣີສ ປີ 1972,
11. ບົດສະຫຼຸບ 7 ປີ ຂອງ ກະຊວງ ເສດຖະກິດ ແຫ່ງ ຣາຊະອານາຈັກລາວ ພິມເປັນພາສາ ຝຣັ່ງ ປີ 1973,
12. ເອກະສານ ນ້ຳຖ້ວມນະຄອນວຽງຈັນ ປີ 1966 ຂອງອົງການ ແມ່ນ້ຳຂອງ ລະຫວ່າງຊາດ ( Lower Mekong Hydrologic Yearbook) ແລະ ບົດລາຍງານ ຂອງ ໂຄງການຄວບຄຸມ ນ້ຳຖ້ວມວຽງຈັນ ປີ 1971 ຂອງ US Agency for International Devevopment.
13. ຮູບຖ່າຍທາງອາກາດ ຂອງ AMS 20/01/1958

## ຜູ້ອຸປະຖຳການພິມ:

### ກົມເຄຫາ ແລະ ຜັງເມືອງ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

Département de l'Habitat et l'Urbanisme du Ministère des Travaux Publics et des Transports

### ສະມາຄົມສະຖາປະນິກ ແລະ ວິສະວະກອນກໍ່ສ້າງ (ສສວ)

ແຫ່ງ ສປປລາວ

Association of Lao Architects and Civil Engineers (ALACE)

ສສວມີວາລະສານຂອງຕົນອອກທຸກ2ເດືອນທີ່ເວົ້າເຖິງສະຖາປັດຕະຍະກຳ ວິສວະກຳ ແລະ ເຕັກໂນໂລຊີທັນສະໄໝ ຂຽນໂດຍ: ສຈ, ດຣ ແລະ ຜູ້ມີ ປະສົບ ການຕ່າງໆ (ລາຄາຫົວລະ 25,000 ກີບ).

ຜູ້ສົນໃຈສາມາດຕິດຕໍ່ໄດ້ ໂທ: (856-21) 413896 ແລະ 416056
ແຟັກ: (856-21)414568

### ລັດວິສາຫະກິດ ວິສະວະກຳ ຄົມມະນາຄົມ

LAO TRANSPORT ENGINEERING CONSULTANT
Engineering Consulting Services
Tel: (021) 313510, 313761, E-mail: ltec@laotel.com
Fax: (021) 314811

ແມ່ນລັດວິສາຫະກິດໜຶ່ງທີ່ໄດ້ສຳຫລວດ ອອກແບບ ແລະ ກວດກາ ຄຸນະພາບ ຂົວທາງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ມາໄດ້ ຊາວກວ່າປີແລ້ວ.




SK Pool ເປັນບໍລິສັດທີ່ຊຳນານໃນການອອກແບບ ກໍ່ສ້າງ ແລະ ບຳລຸງຮັກສາສະລອຍນ້ຳ ສຳຫລັບໂຮງແຮມ, ບ້ານພັກ, ສະໜາມກິລາ ແລະ ເຮືອນສ່ວນຕົວ. ສົນໃຈຕິດຕໍ່: ໂທ: (856-21) 260584, ມືຖື: (856-20) 55512829, ແຟັກ: (856-21) 413171 ແລະ 414568.

KHAMPHAY SANA GROUP

## ກຸ່ມ ບໍລິສັດ ຄຳໄພ ຊະນະ

ໄດ້ສ້າງຕັ້ງມາແຕ່ປີ 1998 ຊຶ່ງລວມເອົາກິດຈະການກໍ່ສ້າງຕ່າງໆເຊັ່ນ: ອາຄານ, ຂົວທາງ, ຊົນລະປະທານ, ກັນເຈື່ອນ ແລະ ກໍ່ສ້າງພື້ນຖານອື່ນໆ ເຂົ້ານຳ.

ກຸ່ມບໍລິສັດນີ້ໄດ້ດຳເນີນທຸລະກິດມາແລ້ວ 12 ປີ ໄດ້ມີຜົນສຳເລັດ ແລະ ເຕີບໂຕດ້ວຍການບໍລິຫານແບບມືອາຊີບ, ມີຄຸນນະພາບ, ມີຄວາມຮັບຜິດຊອບ, ຈິງໃຈ ແລະ ຊື່ສັດຕໍ່ລູກຄ້າສະເໝີມາ ໄດ້ຮັບການກໍ່ສ້າງຫລາຍໂຄງການຂອງ ພັກ-ລັດ ອັນພິເສດແມ່ນ ໄດ້ກໍ່ສ້າງຫໍານຽບລັດຖະບານໃນປະຈຸບັນ.

**ຫ້ອງການ**ໂທ:(856-21) 217069, ມືຖື: (856-20) 55511939, 55520477 ແຟັກ: (856-21)217069.




ພິມທີ່: ໂຮງພິມສີສະຫວາດ
ISBN 978-9932-01-018-9